# ແຜນດຳເນີນງານແຫ່ງຊາດວ່າດ້ວຍ
# ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ
# ຈາກການນຳໃຊ້ຊັບພະຍາກອນພັນທຸກຳ
# ແບບສະເໝີພາບ ແລະ ເປັນທຳ

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ

ສະຖາບັນນິເວດວິທະຍາ ແລະ ເຕັກໂນໂລຊີ ຊີວະພາບ

ນະຄອນຫຼວງວຽງຈັນ, ວັນທີ 30 ຕຸລາ 2013

# ແຜນດຳເນີນງານແຫ່ງຊາດວ່າດ້ວຍ
# ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ
# ຈາກການນຳໃຊ້ຊັບພະຍາກອນພັນທຸກຳ
# ແບບສະເໝີພາບ ແລະ ເປັນທຳ

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ

ສະຖາບັນນິເວດວິທະຍາ ແລະ ເຕັກໂນໂລຊີ ຊີວະພາບ

ນະຄອນຫຼວງວຽງຈັນ, ວັນທີ 30 ຕຸລາ 2013

# ແຜນດຳເນີນງານແຫ່ງຊາດວ່າດ້ວຍ ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ແບບສະເໝີພາບ ແລະ ເປັນທຳ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ພັດທະນາໂດຍ:** ໂຄງການ ACB-UNEP-GEF

"ໂຄງການສ້າງຄວາມອາດສາມາດ ໃຫ້ບັນດາປະເທດອາຊຽນກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ແບບສະເໝີພາບ ແລະ ເປັນທຳ ພາຍໃຕ້ສົນທິສັນຍາຊີວະນາໆພັນ"

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ

ສະຖາບັນນິເວດວິທະຍາ ແລະ ເຕັກໂນໂລຊີ ຊີວະພາບ

**ພາຍໃຕ້ການສະໜັບສະໜູນໂດຍ:**

ສູນຊີວະນາໆພັນອາຊຽນ

ແຜນງານສິ່ງແວດລ້ອມ ສະຫະປະຊາຊາດ

ກອງທຶນສິ່ງແວດລ້ອມໂລກ

ສະມາຄົມປະຊາຊາດແຫ່ງອາຊີຕາເວັນອອກສ່ຽງໃຕ້

ອົງການສາກົນເພື່ອການອະນຸລັກທຳມະຊາດ ປະຈຳລາວ

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

UNITED NATIONS UNIVERSITY

UNU-IAS

Institute of Advanced Studies

Traditional Knowledge Initiative

ມະຫາວິທະຍາໄລສະຫະປະຊາຊາດ

ສະຖາບັນການສຶກສາຊັ້ນສູງ

# ສາລະບານ


**ພາກສະເໜີ......................................................................1**

**ພາກທີ I ນະໂຍບາຍຂອງລັດຖະບານທີ່ມີຕໍ່ວຽກງານການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ .......7**

1.1 ແຜນງານບຸລິມະສິດໃນການພັດທະນາເສດຖະກິດສັງຄົມແຫ່ງຊາດ.........7

1.1.1 ແຜນງານຜະລິດສະບຽງອາຫານ.....................................................7

1.1.2 ແຜນງານຜະລິດເປັນສິນຄ້າ..........................................................8

1.1.3 ແຜນງານຫຼຸດຜ່ອນ ແລະ ຍຸຕິການຖາງປ່າເພື່ອເຮັດໄຮ່ ........................8

1.1.4 ແຜນງານການພັດທະນາຊົນນະບົດ ................................................8

1.1.5 ແຜນງານພັດທະນາໂຄງລ່າງ..........................................................9

1.1.6 ແຜນງານປັບປຸງການຄຸ້ມຄອງ ທາງດ້ານເສດຖະກິດ-ສັງຄົມ ແລະ ການຮ່ວມມືທາງດ້ານເສດຖະກິດກັບຕ່າງປະເທດ. ................................9

1.1.7 ແຜນງານການພັດທະນາຊັບພະຍາກອນມະນຸດ ................................10

1.1.8 ແຜນງານການພັດທະນາການບໍລິການ. ...........................................10

1.2 ນະໂຍບາຍທີ່ມີກ່ຽວຂ້ອງກັບຄວາມຫຼາກຫຼາຍດ້ານຊີວະພາບ ແລະ ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນກຳ.........................................................................10

1.2.1 ບຸລິມະສິດໃນການຄົ້ນຄວ້າກ່ຽວກັບເຕັກໂນໂລຊີ ຊີວະພາບ.................11

1.2.2 ການກວດສອບຄຸນລັກສະນະດ້ານພັນທຸກຳ ແລະ ຖານຂໍ້ມູນ................12

1.2.3 ການອະນຸລັກຢູ່ໃນພື້ນທີ່ດັ່ງເດີມ..................................................13

1.2.4 ການອະນຸລັກຢູ່ນອກພື້ນທີ່ດັ່ງເດີມ.................................................15

1.2.5 ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ.............................................................16

1.2.6 ພູມປັນຍາພື້ນບ້ານອັນເປັນມູນເຊື້ອ...............................................19

1.2.7 ສິດທິບັດຊັບສິນທາງປັນຍາ.........................................................22

1.3 ການພັດທະນານະໂຍບາຍທີ່ກ່ຽວຂ້ອງກັບການເຂົ້າເຖິງ ແລະ ການ
ແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ..........23
1.3.1 ນະໂຍບາຍທາງດ້ານນິຕິກຳທີ່ມີຕໍ່ການຄຸ້ມຄອງດ້ານການເຂົ້າເຖິງ ແລະ
ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນ ພັນທຸກຳ....25
1.3.2 ນະໂຍບາຍທີ່ມີຕໍ່ການຄຸ້ມຄອງບໍລິຫານຈັດການກ່ຽວກັບການເຂົ້າເຖິງ ແລະ
ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ .....26
1.3.3 ນະໂຍບາຍທີ່ມີຕໍ່ການສຶກສາ, ສ້າງຈິດສຳນຶກ ແລະ ມີສ່ວນຮ່ວມຂອງ
ມວນຊົນກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ
ຈາກການນຳໃຊ້ຊັບພະຍາກອນພັນທຸກຳ..........................................29
1.4 ສະພາບຂອງ ສປປ ລາວ ກ່ຽວກັບການຮັບຮອງ ການໃຫ້ສັດຕະຍາບັນ
ສົນທິສັນຍາວ່າດ້ວຍ ຄວາມຫຼາກຫຼາຍທາງດ້ານຊີວະນາໆພັນ ແລະ ການ
ເຂົ້າເປັນພາຄີຂອງອະນຸສັນຍານາໂກຍາວ່າດ້ວຍການ ເຂົ້າເຖິງ ແລະ ການ
ແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ...........30

**ພາກທີ II ລະບົບກົນໄກການຄຸ້ມຄອງກ່ຽວກັບການເຂົ້າເຖິງ ແລະ
ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ .....35**

2.1 ການຈັດແບ່ງລະດັບຂັ້ນຂອງບັນດາເຄື່ອງມືໃນການຄຸ້ມຄອງຂອງ
ສປປ ລາວ.......................................................................35
2.2 ຮ່າງກົດໝາຍວ່າດ້ວຍຊັບພະຍາກອນພັນທຸກຳ.................................36
ພາກທີ 01 ບັນດາບົດບັນຍັດເບື້ອງຕົ້ນ...................................................36
ພາກທີ 02 ອົງກອນຮັບຜິດຊອບແຫ່ງຊາດ ແລະ ອົງກອນຄຸ້ມຄອງ ແລະ
ຕິດຕາມກວດກາ ........................................................................40
ພາກທີ 03 ການເຂົ້າເຖິງຊັບພະຍາກອນພັນທຸກຳ ແລະ ພູມປັນຍາ ພື້ນບ້ານອັນ
ເປັນມູນເຊື້ອ...........................................................................43
ພາກທີ 04 ການແບ່ງປັນຜົນປະໂຫຍດ ..................................................50
ພາກທີ 05 ການສ້າງຈິດສຳນຶກ ແລະ ການເຂົ້າເຖິງຂໍ້ມູນຂ່າວສານ ...............51
ພາກທີ 06 ຄວາມອາດສາມາດການຖ່າຍທອດເຕັກໂນໂລຊີ ແລະ ການຮ່ວມມື...54

ພາກທີ 07 ການຕິດຕາມກວດກາ ແລະ ການບັງຄັບໃຊ້ກົດໝາຍ.................57
**ພາກທີ III ລະບົບການຄຸ້ມຄອງບໍລິຫານຈັດການກ່ຽວກັບ ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ.......................................................................65**
3.1 ອົງກອນຮັບຜິດຊອບແຫ່ງຊາດວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ...............66
3.2 ຈຸດປະສານງານແຫ່ງຊາດ ແລະ ການມີສ່ວນຮ່ວມຂອງຜູ້ທີ່ກ່ຽວຂ້ອງ....71
3.3 ອົງກອນຄຸ້ມຄອງ ແລະ ຕິດຕາມກວດກາກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ.....73
3.3.1 ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ.......................................73
3.3.2 ຂະແໜງການຄຸ້ມຄອງ ແລະ ຕິດຕາມກວດກາຂອງກະຊວງ.................76
3.3.3 ຂະແໜງຄຸ້ມຄອງ ແລະ ຕິດຕາມກວດກາ ຂອງແຂວງ, ນະຄອນຫຼວງ, ນະຄອນ ແລະ ເຂດພິເສດ..........................................................78
3.3.4 ຂະແໜງຄຸ້ມຄອງ ແລະ ຕິດຕາມກວດກາຂັ້ນເມືອງ ແລະ ເທດສະບານ ...80
3.4 ຂະບວນການແຈ້ງຂ່າວການອະນຸມັດສິດ....................................82
3.4.1 ຫຼັກການພື້ນຖານຂອງຂະບວນການແຈ້ງຂ່າວການອະນຸມັດສິດ..............82
3.4.2 ບັນດາອົງປະກອບຂອງລະບົບ ຂະບວນການແຈ້ງຂ່າວການອະນຸມັດສິດ.................................................................83
3.5 ບັນດາຂໍ້ຕົກລົງຮ່ວມກັນ.......................................................88
3.5.1 ເນື້ອໃນພື້ນຖານຂອງບັນດາຂໍ້ຕົກລົງຮ່ວມກັນ ....................................88
3.5.2 ລາຍການທີ່ເປັນການບົ່ງບອກສະເພາະຂອງບັນດາຂໍ້ຕົກລົງຮ່ວມກັນ ......91
3.5.3 ການແບ່ງປັນຜົນປະໂຫຍດ...................................................92
3.6 ບັນດາບົດບັນຍັດອັນອື່ນໆ......................................................93
3.6.1 ການກະຕຸກຊຸກຍູ້...............................................................93
3.6.2 ຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດກ່ຽວກັບການຈັດການການເຂົ້າເຖິງ ແລະ ການແບ່ງຜົນປະໂຫຍດ...............................................94

3.6.3 ການຕິດຕາມກວດກາ ແລະ ການສ້າງບົດລາຍງານລະດັບຊາດ...........95
3.6.4 ການກວດສອບຄວາມເປັນຈິງ.......................................................95
3.6.5 ການປະຕິເສດ ..........................................................................96
3.6.6 ການດັດແກ້ ..............................................................................97
*ເອກະສານຊ້ອນທ້າຍ I ບັນດາຂໍ້ສະເໜີແນະ ສໍາລັບສັນຍາໃນການເຄື່ອນຍ້າຍ ວັດສະດຸພັນທຸກໍາ*.....................................................98
*ເອກະສານຊ້ອນທ້າຍ II ຜົນປະໂຫຍດໃນຮູບແບບທີ່ເປັນເງິນຕາ ແລະ ບໍ່ເປັນເງິນຕາ*.......................................................101
**ພາກທີ IV ກົນໄກສໍາລັບການສຶກສາ, ສ້າງຈິດສໍານຶກ ແລະ ມີສ່ວນຮ່ວມຂອງມວນຊົນ ......................................................104**
4.1 ຈຸດປະສົງລວມ, ຫຼັກການ ແລະ ແນວຄວາມຄິດຂອງການສຶກສາ, ສ້າງຈິດສໍານຶກ ແລະ ມີສ່ວນຮ່ວມຂອງມວນຊົນກ່ຽວກັບຄວາມຫຼາກຫຼາຍ ດ້ານຊີວະພາບ ແລະ ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸກໍາ ຂອງ ສປປ ລາວ.............104
4.1.1 ຈຸດປະສົງລວມຂອງການສຶກສາ, ສ້າງຈິດສໍານຶກ ແລະ ມີສ່ວນຮ່ວມຂອງມວນຊົນ.......................................................104
4.1.2 ຫຼັກການອັນສໍາຄັນຂອງການສຶກສາ, ສ້າງຈິດສໍານຶກ ແລະ ມີສ່ວນຮ່ວມຂອງມວນຊົນກ່ຽວກັບຄວາມຫຼາກຫຼາຍດ້ານຊີວະພາບ ແລະ ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸກໍາ.........................................104
4.2 ລະບົບທີ່ມີກ່ຽວກັບຂອງການສຶກສາ, ສ້າງຈິດສໍານຶກ ແລະ ມີສ່ວນຮ່ວມຂອງມວນຊົນ ທາງດ້ານຊີວະນາໆພັນ.......................110
4.3 ແຜນງານການສຶກສາ, ສ້າງຈິດສໍານຶກ ແລະ ມີສ່ວນຮ່ວມຂອງ ມວນຊົນ ກ່ຽວກັບຄວາມຫຼາກຫຼາຍດ້ານຊີວະພາບ ແລະ ການເຂົ້າເຖິງ ແລະ ການ ແບ່ງປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸກໍາ........114

4.3.1 ແຜນງານທີ 1: ນຳເອົາກິດຈະກຳການສຶກສາກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ເຂົ້າໃນລະບົບການສຶກສາສາມັນ (ໃນທຸກລະດັບທັງໃນລະບົບ ແລະ ນອກລະບົບໂຮງຮຽນ) ເປັນພາກສ່ວນໜຶ່ງຂອງຫຼັກສູດການສຶກສາ ດ້ານສິ່ງແວດລ້ອມ ........ 115

4.3.2 ແຜນງານທີ 2: ພັດທະນາກິດຈະກຳການສ້າງຈິດສຳນຶກກ່ຽວກັບການ ເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາ ກອນພັນທຸກຳເປັນພາກສ່ວນໜຶ່ງເຂົ້າໃນລະບົບການສ້າງຈິດສຳນຶກ ດ້ານສິ່ງແວດລ້ອມ ........ 124

4.3.3 ແຜນງານທີ 3: ພັດທະນາກົນໄກການຝຶກອົບຮົມກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນ ພັນທຸກຳ ........ 127

4.4.4 ແຜນງານທີ 4: ພັດທະນາກົນໄກການມີສ່ວນຮ່ວມຂອງມວນຊົນໃນຂະບວນ ການຕັດສິນໃນວຽກງານການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ........ 131

4.4.5 ແຜນງານທີ 5: ການສ້າງຕັ້ງເຄືອຂ່າຍກ່ຽວກັບການເຂົ້າເຖິງ ແລະ ການ ແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ແລະ ພັດທະນາລະບົບການສະໜອງຂໍ້ມູນຂ່າວສານທີ່ກ່ຽວຂ້ອງ ........ 133

# ພາກສະເໜີ

ແຜນດຳເນີນງານແຫ່ງຊາດວ່າດ້ວຍ ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ແບບສະເໝີພາບ ແລະ ເປັນທຳ, ແມ່ນການສັງຮວມເອົາບັນດານະໂຍບາຍ, ນິຕິກຳການຄຸ້ມຄອງ ແລະ ເຄື່ອງມືດ້ານວິຊາການ ເພື່ອຮັບປະກັນການແບ່ງປັນຜົນປະໂຫຍດ ໃຫ້ມີຄວາມສະເໝີພາບ ແລະ ເປັນທຳ, ມີຄວາມໂປ່ງໃສ ແລະ ສາມາດກວດສອບໄດ້, ປະກອບດ້ວຍບັນດາພາກຕ່າງໆດັ່ງນີ້:

- ພາກທີ I: ນະໂຍບາຍຂອງລັດຖະບານທີ່ມີຕໍ່ວຽກງານການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ
- ພາກທີ II: ລະບົບກົນໄກການຄຸ້ມຄອງກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ
- ພາກທີ III: ລະບົບການຄຸ້ມຄອງບໍລິຫານຈັດການ ກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ
- ພາກທີ IV: ກົນໄກສຳລັບການສຶກສາ, ສ້າງຈິດສຳນຶກ ແລະ ມີສ່ວນຮ່ວມຂອງມວນຊົນ

ໂຄງການ Lao ABS-ACB ທີ່ມີຕໍ່ການພັດທະນາແຜນດຳເນີນງານແຫ່ງຊາດ ວ່າດ້ວຍ ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ແບບສະເໝີພາບ ແລະ ເປັນທຳ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ເລີ່ມຂຶ້ນໃນ ເດືອນເມສາ 2012 ແລະ ສິ້ນສຸດລົງໃນ ເດືອນຕຸລາ 2013. ຄະນະ

ຈັດຕັ້ງສ້າງແຜນດຳເນີນງານແຫ່ງຊາດ ຂອງໂຄງການ ACB-ABS ປະກອບດ້ວຍ:

- **ປະທານຮ່ວມ ໂດຍ:**
  1. **ທ່ານ ດຣ. ສຸລິອຸດົງ ສຸນດາລາ**
     ຫົວໜ້າສະຖາບັນນິເວດວິທະຍາ ແລະ ເຕັກໂນໂລຊີ ຊີວະພາບ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ (ກວຕ)/ຜູ້ປະສານງານແຫ່ງຊາດຂອງອະນຸສັນຍານາໂກຢາ ຂອງສົນທິສັນຍາຊີວະນາໆພັນ
  2. **ທ່ານ ຄຳພັນ ນັນທະວົງ**
     ຫົວໜ້າກົມຄຸ້ມຄອງຊັບພະຍາກອນປ່າໄມ້, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ກຊສ)/ຜູ້ປະສານງານແຫ່ງຊາດຂອງສົນທິສັນຍາຊີວະນາໆພັນ

- **ຜູ້ປະສານງານໂຄງການ ແຫ່ງຊາດໂດຍ:**
  **ທ່ານ ນ. ກົງໃຈ ພິມມະກອງ**
  ຮັກສາການຫົວໜ້າພະແນກບໍລິການວິຊາການ, ສະຖາບັນນິເວດວິທະຍາ ແລະ ເຕັກໂນໂລຊີ ຊີວະພາບ, ກວຕ

- **ທີ່ປຶກສາໂຄງການ ໂດຍ:**
  **ທ່ານ ດຣ. ໂກສົນ ໄຊພະກັດສາ,** ຫົວໜ້າພະແນກຊັບພະຍາກອນພັນທຸກຳ, ສະຖາບັນນິເວດວິທະຍາ ແລະ ເຕັກໂນໂລຊີ ຊີວະພາບ, ກວຕ

- **ທີ່ປຶກສາກົດໝາຍ ໂດຍ:**
  **ທ່ານ ສາສະດາຈານ ດຣ. ວິຈິດ ລຳໄຊ,** ຫົວໜ້າສູນສຶກສາຫຼັງມະຫາວິທະຍາໄລພາກວິຊາຊີວະສາດ, ຄະນະວິທະຍາສາດທຳມະຊາດ, ມະຫາວິທະຍາໄລແຫ່ງຊາດ

- **ຜູ້ປະສານງານໂຄງການພາກພື້ນອາຊຽນ ໂດຍ:**

  **ທ່ານ ແອນໂທນີ ໂຟຣອນດາ,** ຜູ້ປະສານງານໂຄງການລະດັບພາກພື້ນ, ໜ່ວຍງານພັດທະນາ ແລະ ຈັດຕັ້ງປະຕິບັດໂຄງການ, ສູນຊີວະນາໆພັນອາຊຽນ

- **ທີ່ປຶກສາໂຄງການຈາກສະຫະປະຊາຊາດ ໂດຍ:**

  **ທ່ານ ເຈຟ ເບີຕັນ,** ຜູ້ຊ່ຽວຊານສະເພາະດ້ານ, ສະຖາບັນການສຶກສາຊັ້ນສູງ, ມະຫາວິທະຍາໄລສະຫະປະຊາຊາດ

- **ຕົວແທນ ແລະ ຜູ້ປະສານງານສົນທິສັນຍາຊີວະນາໆພັນຈາກຂະແໜງການໂດຍ:**

  1. **ທ່ານ ດຣ. ໃຈ ບຸນພະນຸໄຊ,** ຫົວໜ້າສູນຄົ້ນຄວ້າກະສິກຳ, ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ແຫ່ງຊາດ, ກະຊວງກະສິກຳ ແລະ ປ່າໄມ້
  2. **ທ່ານ ນາງ ກົງປັນ ກັນຍາວົງ,** ຮອງຫົວໜ້າສູນຄົ້ນຄວ້າກະສິກຳ, ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ແຫ່ງຊາດ, ກະຊວງກະສິກຳ ແລະ ປ່າໄມ້
  3. **ທ່ານ ດຣ. ມົວຈັນ ໄຊວີ,** ຫົວໜ້າພະແນກເພສັດຊັບພະຍາກອນ, ສະຖາບັນຄົ້ນຄວ້າຢາພື້ນເມືອງ, ກະຊວງສາທາລະນະສຸກ
  4. **ທ່ານ ສາສະດາຈານ ຄຳແສງ ບັນທະວົງ,** ຫົວໜ້າພາກວິຊາການທ່ອງທ່ຽວແບບອະນຸລັກທຳມະຊາດ, ຄະນະວິທະຍາສາດປ່າໄມ້, ມະຫາວິທະຍາໄລແຫ່ງຊາດ
  5. **ທ່ານ ສາສະດາຈານ ດຣ. ຈັນດາ ວົງສົມບັດ,** ຮອງຄະນະບໍດີ, ຄະນະວິທະຍາສາດສິ່ງແວດລ້ອມ, ມະຫາວິທະຍາໄລແຫ່ງຊາດ

6. **ທ່ານ ຄຳລຽນ ນໍລະສິງ,** ຫົວໜ້າພະແນກຕິດຕາມປະເມີນຜົນ ແລະ ແຜນການ, ກົມແຜນການ, ກະຊວງກະສິກຳ ແລະ ປ່າໄມ້
7. **ທ່ານ ທັດສົມພອນ ແວວປະເສີດ,** ຮອງຫົວໜ້າພະແນກສືບສວນ-ສອບສວນ, ກົມກວດກາປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້
8. **ທ່ານ ໂຍ້ ສາຍສຸລິນ,** ຫົວໜ້າພະແນກຄຸ້ມຄອງຮັກສາທີ່ດິນ, ກົມຈັດສັນ ແລະ ພັດທະນາທີ່ດິນ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ
9. **ທ່ານ ພັນທະວົງ ວົງສຳພັນ,** ຮອງຫົວໜ້າພະແນກແຜນການ, ກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກຳ ແລະ ປ່າໄມ້
10. **ທ່ານ ອະນຸຊາ ແສນສົມບັດ,** ວິຊາການ, ພະແນກບໍລິຫານນຳເຂົ້າ ແລະ ສົ່ງອອກ, ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ
11. **ທ່ານ ນາງ ກົມມະລີ ອ່ອນໄຊວຽງ,** ຫົວໜ້າຂະແໜງແຜນການ ແລະ ງົບປະມານ, ກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກຳ ແລະ ປ່າໄມ້
12. **ທ່ານ ທອງເພັດ ຈັນທະລົດ,** ວິຊາການ, ພະແນກພັດທະນາ ແລະ ຕິດຕາມໂຄງການ, ກົມທຸລະກິດພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່
13. **ທ່ານ ສະຫວັນສີຣິ ຍັງນຸວົງ,** ວິຊາການ, ພະແນກແຜນການ, ກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້
14. **ທ່ານ ນາງ ສົມສະໜິດ ບົວມະນີວົງ,** ຫົວໜ້າພະແນກນິເວດວິທະຍາ, ສະຖາບັນນິເວດວິທະຍາ ແລະ ເຕັກໂນໂລຊີ ຊີວະພາບ, ກວຕ

15. **ທ່ານ ສຸລິສັກ ພົນທະຈັກ,** ຫົວໜ້າພະແນກແຜນການ ແລະ ງົບປະມານ, ກົມເຄຫາ ແລະ ຜັງເມືອງ, ກະຊວງໂຍທາທິການ ແລະ ຂົນສົ່ງ

16. **ທ່ານ ຈັນທີ ອິນຕຣາວົງ,** ຮອງຫົວໜ້າພະແນກນະໂຍບາຍ ແລະ ກົດໝາຍ, ກົມສິ່ງແວດລ້ອມ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

17. **ທ່ານ ນົກແກ້ວ ແກ້ວດວງຈິດ,** ວິຊາການ, ກົມຊັບພະຍາກອນນ້ຳ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

18. **ທ່ານ ສົມໄຊ ສີປະເສີດ,** ຫົວໜ້າພະແນກແຜນການ ແລະ ພັດທະນາທ່ອງທ່ຽວ, ກະຊວງຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ

19. **ທ່ານ ຄຳ ນາມມີໄຊ,** ຮອງຫົວໜ້າສະຖາບັນນິເວດວິທະຍາ ແລະ ເຕັກໂນໂລຊີ ຊີວະພາບ, ກວຕ

20. **ທ່ານ ນາງ ບຸນທ່ຽງ ຈັນທະວົງ,** ຫົວໜ້າພະແນກສັງລວມ, ສະຖາບັນນິເວດວິທະຍາ ແລະ ເຕັກໂນໂລຊີ ຊີວະພາບ, ກວຕ

21. **ທ່ານ ນາງ ບາແກ້ວ ສຸວັນນະລາດ,** ຫົວໜ້າພະແນກເຕັກໂນໂລຊີ ຊີວະພາບ, ສະຖາບັນນິເວດວິທະຍາ ແລະ ເຕັກໂນໂລຊີ ຊີວະພາບ, ກວຕ

22. **ທ່ານ ນະຄອນຄຳ ໄຊບົວເງິນ,** ຮອງສູນສຶກສານິເວດວິທະຍາປາກຊັນ, ສະຖາບັນນິເວດວິທະຍາ ແລະ ເຕັກໂນໂລຊີ ຊີວະພາບ, ກວຕ

23. **ທ່ານ ນາງ ລັດສະໄໝ ສີລາວົງ,** ຕາງໜ້າອົງການສາກົນເພື່ອການອະນຸລັກທຳມະຊາດ ປະຈຳລາວ

24. **ທ່ານ ບານທົມ ເທບສົມບັດ**, ວິຊາການ, ອົງການສາກົນເພື່ອການອະນຸລັກທໍາມະຊາດ ປະຈໍາລາວ
25. **ທ່ານ ນາງ ວຽງປະສິດ ສານິສະເວດ,** ຮອງຫົວໜ້າ ພະແນກບໍລິການວິຊາການ, ສະຖາບັນນິເວດວິທະຍາ ແລະ ເຕັກໂນໂລຊີ ຊີວະພາບ, ກວຕ
26. **ທ່ານ ນາງ ສົມພາວັນ ຣາດາວັນ,** ຮອງຫົວໜ້າ ພະແນກບໍລິການວິຊາການ, ສະຖາບັນນິເວດວິທະຍາ ແລະ ເຕັກໂນໂລຊີ ຊີວະພາບ, ກວຕ
27. **ທ່ານ ຄໍາແກ້ວ ແສງອິນວົງ,** ວິຊາການ, ພະແນກບໍລິການວິຊາການ, ສະຖາບັນນິເວດວິທະຍາ ແລະ ເຕັກໂນໂລຊີ ຊີວະພາບ, ກວຕ
28. **ທ່ານ ນາງ ຄໍາພະຈັນ ສີຫາວົງ,** ວິຊາການ, ພະແນກບໍລິການວິຊາການ, ສະຖາບັນນິເວດວິທະຍາ ແລະ ເຕັກໂນໂລຊີ ຊີວະພາບ, ກວຕ

- **ທີ່ຢູ່ຂອງອົງການຈັດຕັ້ງປະຕິບັດແຜນການດໍາເນີນງານແຫ່ງຊາດ:**

  ສະຖາບັນນິເວດວິທະຍາ ແລະ ເຕັກໂນໂລຊີ ຊີວະພາບ
  ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ
  ຕູ້ໄປສະນີ 2279, ກມ 14 ຖະໜົນທ່າງ່ອນ, ບ້ານດອນຕິ້ວ,
  ເມືອງໄຊທານີ, ນະຄອນຫຼວງວຽງຈັນ, ສປປ ລາວ
  ໂທລະສັບ: (856 21) 732202
  ແຟັກ: (856 21) 740630

# ພາກທີ I

# ນະໂຍບາຍຂອງລັດຖະບານທີ່ມີຕໍ່ວຽກງານການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ

## 1.1 ແຜນງານບຸລິມະສິດໃນການພັດທະນາເສດຖະກິດສັງຄົມແຫ່ງຊາດ

ບັນດາ 8 ແຜນງານບຸລິມະສິດ ໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໄດ້ຖືກຈັດວາງໃຫ້ເປັນບຸລິມະສິດໃນການພັດທະນາຂອງລັດຖະບານ ເພື່ອປະຕິບັດຍຸດທະສາດການພັດທະນາແຫ່ງຊາດຮອດປີ 2020, ໂດຍໄດ້ຖືກນຳໃຊ້ເປັນເອກະສານເຄື່ອງມືສຳຄັນ ໃນລະບົບການວາງແຜນແຫ່ງຊາດ ແລະ ກຳນົດບຸລິມະສິດການລົງທຶນແຫ່ງຊາດ. ສຳລັບແຜນງານບຸລິມະສິດນີ້ເວົ້າເຖິງ ***ການຄ້ຳປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານ, ການປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ການພັດທະນາທ່າແຮງແຫ່ງຊາດທາງດ້ານຊັບພະຍາກອນມະນຸດ*** ແມ່ນຖືເປັນບັນຫາສຳຄັນສູງສຸດ.

**1.1.1 ແຜນງານຜະລິດສະບຽງອາຫານ** ເປົ້າໝາຍຂອງແຜນງານນີ້ ແມ່ນເພື່ອຄ້ຳປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານ ໂດຍການເພີ່ມປະລິມານຂອງຜົນຜະລິດທາງດ້ານອາຫານ ແລະ ເຂົ້າ. ແຜນງານໄດ້ສົ່ງເສີມສິ່ງທີ່ເປັນທ່າແຮງອັນແຂງແກ່ນ ແລະ ການຜະລິດສະບຽງອາຫານໃນຮູບແບບຕ່າງໆ ໂດຍຮວມເອົາການເພີ່ມຂຶ້ນຂອງສະມັດຕະພາບຜະລິດຕະພັນເຂົ້າ, ການຂະຫຍາຍຕົວຂອງຊົນລະປະທານຢູ່ເຂດທົ່ງພຽງໃນລະດູແລ້ງ ແລະ ລະດູຝົນ, ປັບປຸງການລ້ຽງສັດ ແລະ ຄວາມຫຼາກຫຼາຍຂອງການປູກຝັງ ແລະ ການນຳໃຊ້ເຄື່ອງຈັກທີ່ເໝາະສົມ, ປຸຍ ແລະ ຢາປາບສັດຕູພືດ.

1.1.2 **ແຜນງານຜະລິດເປັນສິນຄ້າ** ແຜນງານນີ້ ໄດ້ຊອກຫາການສົ່ງເສີມການລົງທຶນໃນການຜະລິດ: ກາເຟ, ໄມ້ໃຫ້ໝາກ, ເຄື່ອງປ່າຂອງດົງ, ການລ້ຽງສັດ ແລະ ການປະມົງໃຫ້ກວ້າງຂວາງ, ເພື່ອສົ່ງເສີມການສົ່ງອອກໂດຍ ຮວມເອົາທັງການພັດທະນາພະລັງງານໄຟຟ້າທີ່ໄດ້ຈາກນ້ຳ ແລະ ບໍ່ແຮ່. ນອກຈາກນີ້, ຍັງໄດ້ສົ່ງເສີມອຸດສາຫະກຳຂະໜາດນ້ອຍ-ຂະໜາດກາງ, ຫັດຖະກຳ ແລະ ຄວາມຫຼາກຫຼາຍຂອງຜະລິດຕະພັນກະສິກຳ. ແຜນງານນີ້ ໄດ້ສົ່ງເສີມການເພີ່ມຂຶ້ນຂອງການຜະລິດເປັນສິນຄ້າ, ການພັດທະນາອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳເພື່ອການສ້າງລາຍຮັບໃນການບໍລິການ.

1.1.3 **ແຜນງານຫຼຸດຜ່ອນ ແລະ ຍຸຕິການຖາງປ່າເພື່ອເຮັດໄຮ່** ລັດຖະບານໄດ້ວາງເປົ້າໝາຍເພື່ອຕ້ອງການປົກປ້ອງປ່າໄມ້ ແລະ ສິ່ງແວດລ້ອມດ້ວຍການສົ່ງເສີມບັນດາກິດຈະກຳ ເພື່ອຄ້ຳປະກັນບັນດາຊັບພະຍາກອນທີ່ກ່ຽວພັນກັບການຟື້ນຟູປ່າໄມ້.

1.1.4 **ແຜນງານການພັດທະນາຊົນນະບົດ** ສິ່ງທີ່ສຳຄັນໃນວຽກງານນີ້ແມ່ນເຮັດໃຫ້ທ່າແຮງໃນການພັດທະນາຊົນນະບົດ ມີການປະສານງານ ແລະ ວາງແຜນຈຸດສຸມໃນພື້ນທີ່ທີ່ເປັນເປົ້າໝາຍ. ຍຸດທະສາດໃນການພັດທະນາພື້ນທີ່ທີ່ເປັນເປົ້າໝາຍ ແມ່ນການວາງແຜນເພື່ອສະເໜີພັດທະນາການບໍລິການ ໃນຂະແໜງປະສານງານ ແລະ ທ້ອງຖິ່ນທີ່ຮັບຜິດຊອບ ເລີ່ມຈາກການກໍ່ສ້າງສິ່ງທີ່ເປັນພື້ນຖານໂຄງລ່າງ, ການສຶກສາ ແລະ ເຄື່ອງມືອຳນວຍຄວາມສະດວກທາງດ້ານສຸຂະອານາໄມ ເພື່ອພັດທະນາລະດັບຄວາມສາມາດ, ເປົ້າໝາຍແມ່ນເພື່ອປັບປຸງມາດຕະຖານການດຳລົງຊີວິດຢູ່ເຂດຊົນນະບົດ. ນອກນີ້, ຍັງມີຈຸດປະສົງທີ່ຈະເພີ່ມການຜະລິດທາງດ້ານອາຫານ ແລະ ການຜະລິດເປັນສິນຄ້າ, ການສ້າງໂອກາດໃນການມີວຽກເຮັດ

ງານທຳ ແລະ ສ້າງເງື່ອນໄຂໃນການປັບປຸງມາດຕະຖານການດຳລົງຊີວິດ ຢູ່ເຂດຊົນນະບົດ ເຊິ່ງມັນໄດ້ກ້າວໄປສູ່ການຫຼຸດຜ່ອນການຫຼຸດໂຕນກັນລະຫວ່າງ ຕົວເມືອງ ແລະ ຊົນນະບົດ ແລະ ການເຄື່ອນຍ້າຍຖິ່ນຖານຈາກຊົນນະບົດເຂົ້າສູ່ຕົວເມືອງ.

1.1.5 **ແຜນງານພັດທະນາໂຄງລ່າງ** ແຜນງານນີ້ ໄດ້ຊອກຫາເປົ້າໝາຍເພື່ອການທັນເປັນທັນສະໄໝ ໃນການສື່ສານ, ເຄືອຂ່າຍການຂົນສົ່ງລະດັບຊາດ ແລະ ສາກົນ, ເຊິ່ງຮວມມີ ຖະໜົນ, ຂົວ, ສະໜາມບິນ, ດ່ານຜ່ານແດນ ແລະ ຍົກລະດັບການບໍລິການທາງດ້ານໄປຊະນີ, ໂທລະຄົມ ໃນຂົງເຂດຕ່າງໆ ຈາກປະເທດທີ່ບໍ່ມີທາງອອກສູ່ທະເລ ກາຍເປັນ "ເຂດເຊື່ອມຕໍ່" ຂອງອາຊຽນ.

1.1.6 **ແຜນງານປັບປຸງການຄຸ້ມຄອງ ທາງດ້ານເສດຖະກິດ-ສັງຄົມ ແລະການຮ່ວມມື ທາງດ້ານເສດຖະກິດກັບຕ່າງປະເທດ** ເປົ້າໝາຍແມ່ນສຸມໃສ່ການຄຸ້ມຄອງເສດຖະກິດແຫ່ງຊາດ ແລະ ເສີມຂະຫຍາຍທ່າແຮງທາງດ້ານເງື່ອນໄຂທີ່ຈຳເປັນ ໃນການເພີ່ມຂຶ້ນທາງດ້ານເສດຖະກິດໃນລະດັບສູງ. ໃນການພັດທະນາທີ່ກ່ຽວກັບເສດຖະກິດພາຍໃນແມ່ນໄດ້ສົ່ງເສີມການຜະລິດພາຍໃນ ແລະ ການພັດທະນາສິນຄ້າໃນຊົນນະບົດ. ກ່ຽວກັບທາງດ້ານສາກົນ ເປົ້າໝາຍແມ່ນເພື່ອເພີ່ມສິນຄ້າສົ່ງອອກ ແລະ ຫຼຸດຜ່ອນການນຳເຂົ້າສິນຄ້າຈາກພາຍນອກເຊິ່ງພວກເຮົາສາມາດເຮັດໄດ້ໂດຍການເພີ່ມຂຶ້ນ ຂອງຄຸນະພາບສິນຄ້າສົ່ງອອກ ດ້ວຍການຄຸ້ມຄອງທາງດ້ານນິຕິກຳ ແລະ ກົນໄກຕ່າງໆ ເພື່ອສົ່ງເສີມທ່າແຮງໃນການຜະລິດສິນຄ້າສົ່ງອອກ, ຄ້ຳປະກັນການລົງທຶນຂອງຕ່າງປະເທດ, ສົ່ງເສີມສິນຄ້າຜ່ານ ແລະ ສິນຄ້າທີ່ສົ່ງອອກ, ເຂດສິນຄ້າປອດພາສີ ແລະ ກະກຽມການເຂົ້າເປັນພາຄີຂອງເຂດການຄ້າເສລີອາຊຽນ ແລະ ອົງການການຄ້າໂລກ.

1.1.7 **ແຜນງານການພັດທະນາຊັບພະຍາກອນມະນຸດ** ໃນແຜນດັ່ງກ່າວນີ້ ແມ່ນການເສີມສ້າງຄວາມສາມາດລະດັບບຸກຄົນ, ສະຖາບັນ ແລະ ຊຸມຊົນ, ໂດຍໄດ້ບັນຈຸໃນ 9 ແຜນງານຍ່ອຍ ດັ່ງນີ້: (1) ການສຶກສາ; (2) ແຮງງານ ແລະ ສະຫວັດດີການສັງຄົມ; (3) ສາທາລະນະສຸກ; (4) ການບໍລິການສັງຄົມ ແລະ ຊຸມຊົນ; (5) ວັດທະນະທຳ ແລະ ຂ່າວສານ; (6) ສະຫະພັນແມ່ຍິງລາວ; (7) ຊາວໜຸ່ມລາວ; (8) ສະຫະພັນກຳມະບານລາວ ແລະ (9) ແນວລາວສ້າງຊາດ. ຈຸດປະສົງຂອງແຜນງານນີ້ ແມ່ນການເຊື່ອມຕໍ່ການຝຶກອົບຮົມ ເພື່ອບັນລຸເປົ້າໝາຍການພັດທະນາເສດຖະກິດ-ສັງຄົມ ເພື່ອຍົກລະດັບຄວາມຮູ້ ແລະ ຄວາມເຂົ້າໃຈ, ເພື່ອເສີມສ້າງຄວາມສາມາດໃນການຄຸ້ມຄອງທາງດ້ານເຕັກນິກ, ບໍລິຫານ, ຄວາມເປັນຜູ້ນຳ.

1.1.8 **ແຜນງານການພັດທະນາການບໍລິການ** ແຜນງານນີ້ ມີເປົ້າໝາຍໃນການເພີ່ມລາຍຮັບຈາກຕ່າງປະເທດ ດ້ວຍການພັດທະນາຂົງເຂດທ່ອງທ່ຽວ. ສະເພາະໃນປະເທດເຮົາແມ່ນມີຄວາມຕ້ອງການໃນການປັບປຸງໂຄງລ່າງທາງດ້ານການທ່ອງທ່ຽວ ແລະ ອຳນວຍຄວາມສະດວກໃນການເຂົ້າ-ອອກດ່ານຂອງນັກທ່ອງທ່ຽວ ໃນຈຸດຜ່ານແດນ, ພັດທະນາເສັ້ນທາງການທ່ອງທ່ຽວໃນຂົງເຂດຕ່າງໆ ແລະ ການຝຶກອົບຮົມບຸກຄະລາກອນທາງດ້ານການທ່ອງທ່ຽວ.

## 1.2 ນະໂຍບາຍທີ່ມີກ່ຽວຂ້ອງກັບຄວາມຫຼາກຫຼາຍດ້ານຊີວະພາບ ແລະ ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ

ໂດຍອີງໃສ່ບັນດາແປດແຜນງານບຸລິມະສິດແຫ່ງຊາດໃນການພັດທະນາເສດຖະກິດ-ສັງຄົມ ເພື່ອບັນລຸເປົ້າໝາຍຮອດປີ 2020, ບັນດາ

ກະຊວງທີ່ກ່ຽວຂ້ອງໄດ້ສ້າງ ແລະ ພັດທະນານະໂຍບາຍຂອງຂະແໜງການ ຕົນທີ່ກ່ຽວພັນກັບຄວາມຫຼາກຫຼາຍດ້ານຊີວະພາບດັ່ງນີ້:

### 1.2.1 ບຸລິມະສິດໃນການຄົ້ນຄວ້າກ່ຽວກັບເຕັກໂນໂລຊີ ຊີວະພາບ

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສົ່ງເສີມການລົງທຶນ ເພື່ອສ້າງພື້ນຖານໂຄງລ່າງ ແລະ ອຳນວຍຄວາມສະດວກໃນການສະໜອງເຄື່ອງມືອຸປະກອນ ແລະ ການພັດທະນາຊັບພະຍາກອນທີ່ເຮັດການຄົ້ນຄວ້າ ທີ່ມີຄວາມຈຳເປັນໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ດ້ວຍການໃຫ້ທຶນສະໜັບສະໜູນໃນການຄົ້ນຄວ້າ, ພັດທະນາ, ບໍລິການທາງດ້ານວິທະຍາສາດ, ເຕັກໂນໂລຊີ ຊີວະພາບ ແລະ ເຕັກໂນໂລຊີທີ່ກ້າວໜ້າ ແລະ ການກຳນົດບັນດາຫົວຂໍ້ການຄົ້ນຄວ້າລະດັບຊາດ ໃນຂະແໜງການທີ່ເປັນບຸລິມະສິດດັ່ງນີ້:

1. **ເຕັກໂນໂລຊີ ຊີວະພາບການກະເສດ ແລະ ປ່າໄມ້:**
    - ແນວພັນພືດ ແລະ ແນວພັນສັດ;
    - ການກວດສອບ ແລະ ປ້ອງກັນພະຍາດພືດ ແລະ ສັດ;
    - ຂະຫຍາຍແນວພັນໄມ້ເພື່ອການປູກປ່າ;
    - ຊັບພະຍາກອນດິນ.
2. **ເຕັກໂນໂລຊີ ຊີວະພາບສຸຂະພາບຂອງຄົນ:**
    - ລະບົບກວດສອບ ແລະ ບົ່ງມະຕິພະຍາດ;
    - ຢາປົວພະຍາດ;
    - ການກ່າຍແບບພັນທຸກຳມະນຸດ.
3. **ເຕັກໂນໂລຊີ ຊີວະພາບອຸດສາຫະກຳ:**
    - ອຸດສາຫະກຳປຸງແຕ່ງກະສິກຳ ແລະ ປ່າໄມ້;
    - ອຸດສາຫະກຳພະລັງງານຊີວະພາບ;
    - ອຸດສາຫະກຳຕິດພັນກັບການປົກປັກຮັກສາສິ່ງແວດລ້ອມ.

4. **ເຕັກໂນໂລຊີ ຊີວະພາບສິ່ງແວດລ້ອມ:**
   - ຜົນປະໂຫຍດຈາກການປົກປັກຮັກສາ ແລະ ການອະນຸລັກ;
   - ດັດສະນີທາງດ້ານຊີວະພາບຂອງສິ່ງແວດລ້ອມ;
   - ການແກ້ໄຂບັນຫາ ແລະ ການບູລະນະຟື້ນຟູສິ່ງແວດລ້ອມ.

### 1.2.2 ການກວດສອບຄຸນລັກສະນະດ້ານພັນທຸກຳ ແລະ ຖານຂໍ້ມູນ

ກ່ຽວຂ້ອງກັບການພັດທະນາການກວດສອບຄຸນລັກສະນະດ້ານພັນທຸກຳ ແລະ ບັນດາຖານຂໍ້ມູນ, ອົງກອນຮັບຜິດຊອບແຫ່ງຊາດ ຕ້ອງ:

1. ກວດສອບບັນດາສ່ວນປະກອບ ຂອງຊັບພະຍາກອນຊີວະພາບທີ່ສຳຄັນ ເພື່ອການອະນຸລັກ ແລະ ການນຳໃຊ້ ແບບຍືນຍົງຄວາມຫຼາກຫຼາຍດ້ານຊີວະພາບ ມີການຄຳນຶງເຖິງ:
   - ລະບົບນິເວດວິທະຍາ ແລະ ສິ່ງທີ່ຢູ່ເພິ່ງພາອາໄສ: ຮວມເອົາລະດັບຄວາມຫຼາກຫຼາຍ, ປະລິມານບັນຈຸຂອງຊະນິດພັນພື້ນເມືອງ ຫຼື ຊະນິດພັນທີ່ຕົກຢູ່ໃນສະພາບອັນຕະລາຍ ຫຼື ຊະນິດພັນທີ່ຕ້ອງການເນື້ອທີ່ອັນກວ້າງຂວາງໃນການເຄື່ອນຍ້າຍ;
   - ສິ່ງທີ່ມີຄວາມສຳຄັນທາງດ້ານສັງຄົມ, ເສດຖະກິດ, ວັດທະນະທຳ ແລະ ວິທະຍາສາດ, ຫຼື ສິ່ງທີ່ເປັນຕົວແທນ ທີ່ເປັນພຽງຊະນິດດຽວ ຫຼື ເປັນອົງປະກອບຂອງຂະບວນການວິວັດທະນາການ ຫຼື ຂະບວນການທາງຊີວະພາບອື່ນໆ;
   - ບັນດາຊະນິດພັນ ແລະ ສ່ວນປະກອບທີ່ຖືກຈັດເປັນກຸ່ມທີ່ຖືກຄຸກຄາມ ແລະ ໃກ້ຈະສູນພັນ, ຊະນິດພັນປ່າ ທີ່ຄ້າຍຄຽງກັບຊະນິດພັນທີ່ໄດ້ນຳມາລ້ຽງ ຫຼື ມາປູກ, ທີ່ມີຄຸນຄ່າທາງດ້ານການຢາ, ການກະສິກຳ ແລະ ເສດຖະກິດ, ທີ່ມີຄວາມສຳຄັນດ້ານສັງຄົມວິທະຍາສາດ ແລະ ວັດທະນະທຳ, ທີ່ມີຄຸນຄ່າດ້ານການຄົ້ນຄວ້າກ່ຽວກັບ ການອະນຸລັກ ແລະ ນຳໃຊ້ຊັບພະຍາກອນພັນ

ທຸກຳແບບຍືນຍົງ ແລະ ໂດຍສະເພາະຊະນິດພັນ ທີ່ເປັນດັດສະນີໃນການກວດສອບ; ແລະ

- ບັນຍາຍລະອຽດກ່ຽວຄຸນລັກສະນະການສືບທອດ ແລະ ດ້ານພັນທຸກຳ ແລະ ບັນດາສ່ວນປະກອບດ້ານຊີວະເຄມີ ທີ່ມີຄວາມສຳຄັນດ້ານສັງຄົມ, ວິທະຍາສາດ ແລະ ເສດຖະກິດ.

2. ຕິດຕາມກວດກາບັນດາສ່ວນປະກອບຄວາມຫຼາກຫຼາຍດ້ານຊີວະພາບ ແລະ ຊັບພະຍາກອນພັນທຸກຳ ຕາມທີ່ໄດ້ຈຳແນກໃນວັກທີ່ກ່າວມາ, ໂດຍຜ່ານການສຸ່ມຕົວຢ່າງ ແລະ ນຳໃຊ້ວິທະຍາການດ້ານເຕັກໂນໂລຊີອື່ນໆ, ໃຫ້ເອົາໃຈໃສ່ເປັນພິເສດ ແລະ ມີມາດຕະການອັນຮີບດ່ວນຕໍ່ຊະນິດພັນທີ່ມີທ່າແຮງພັດທະນາສູງສຸດ ເພື່ອການອະນຸລັກ ແລະ ການນຳໃຊ້ແບບຍືນຍົງ.
3. ໄຈ້ແຍກຂະບວນການ ແລະ ຈັດລຳດັບບັນດາກິດຈະກຳຕ່າງໆທີ່ມີ ຫຼື ອາດສົ່ງຜົນສະທ້ອນອັນບໍ່ດີຕໍ່ການອະນຸລັກ ແລະ ນຳໃຊ້ຊັບພະຍາກອນພັນທຸກຳແບບຍືນຍົງ ແລະ ຕິດຕາມກວດກາບັນດາຜົນກະທົບເຫຼົ່ານັ້ນ ໂດຍການສຸ່ມຕົວຢ່າງ ຫຼື ນຳໃຊ້ວິທະຍາການທາງດ້ານເຕັກໂນໂລຊີອື່ນໆ.
4. ສັງລວມ ແລະ ສ້າງບັນດາຖານຂໍ້ມູນ, ໂດຍນຳໃຊ້ລະບົບເຕັກໂນໂລຊີຂໍ້ມູນຂ່າວສານ ທີ່ໄດ້ມາຈາກການກວດສອບ ແລະ ກິດຈະກຳຂອງການຕິດຕາມກວດກາສິ່ງທີ່ກ່າວມາຂ້າງເທິງນີ້ທັງໝົດ.

### 1.2.3 ການອະນຸລັກຢູ່ໃນພື້ນທີ່ດັ່ງເດີມ

ການອະນຸລັກຢູ່ໃນພື້ນທີ່ດັ່ງເດີມ ແມ່ນການອະນຸລັກລະບົບນິເວດວິທະຍາ ແລະ ປະຊາກອນທີ່ເພິ່ງພາອາໄສທຳມະຊາດ, ການຟື້ນຟູອະນຸລັກ ແລະ ຮັກສາປະຊາກອນຊະນິດພັນຕ່າງໆ ໃຫ້ຢູ່ໃນສະພາບຕາມທຳມະຊາດ ແລະ ໃນກໍລະນີທີ່ເປັນຊະນິດພັນ ທີ່ເອົາມາລ້ຽງ ຫຼື ປູກ ແມ່ນໃຫ້ຢູ່ໃນ

ສະພາບທີ່ມີຄວາມສາມາດຂະຫຍາຍລັກສະນະເດີມຂອງມັນໄດ້, ຊຶ່ງອີງກອນຮັບຜິດຊອບແຫ່ງຊາດ ຕ້ອງດຳເນີນບັນດາກິດຈະຈຳທີ່ມີຄວາມຈຳເປັນດັ່ງລຸ່ມນີ້:

1. ສ້າງລະບົບເຂດອະນຸລັກ ຫຼື ເຂດທີ່ຕ້ອງມີມາດຕະການພິເສດເພື່ອການອະນຸລັກຄວາມຫຼາກຫຼາຍດ້ານຊີວະພາບ ແລະ ຊັບພະຍາກອນພັນທຸກຳ.
2. ໃນບ່ອນທີ່ມີຄວາມຈຳເປັນ, ຕ້ອງໄດ້ສ້າງບົດແນະນຳໃນການຄັດເລືອກການສ້າງ ແລະ ການຄຸ້ມຄອງເຂດອະນຸລັກ ແລະ ເຂດທີ່ຕ້ອງມີມາດຕະການພິເສດ ເພື່ອການອະນຸລັກຄວາມຫຼາກຫຼາຍດ້ານຊີວະພາບ ແລະ ຊັບພະຍາກອນພັນທຸກຳ.
3. ວາງລະບຽບ ຫຼື ຄຸ້ມຄອງ ຊັບພະຍາກອນຊີວະພາບທີ່ມີຄວາມສຳຄັນ ເພື່ອການອະນຸລັກຄວາມຫຼາກຫຼາຍດ້ານພັນທຸກຳຢູ່ໃນ ຫຼື ຢູ່ນອກເຂດອະນຸລັກ ເພື່ອຮັບປະກັນການອະນຸລັກ ແລະ ການນຳໃຊ້ແບບຍືນຍົງ.
4. ປ້ອງກັນລະບົບນິເວດວິທະຍາ, ປະຊາກອນທີ່ເພິ່ງອາໄສຕາມທຳມະຊາດ ແລະ ຈັດສັນຍັນດາຊະນິດພັນທີ່ມີຢູ່ພາຍໃນປະຊາກອນໃນເງື່ອນໄຂສະພາບທຳມະຊາດຂອງມັນ.
5. ສົ່ງເສີມສະພາບການຮັກສາສິ່ງແວດລ້ອມ ແລະ ການພັດທະນາແບບຍືນຍົງ ໃນເຂດທີ່ຕິດກັບເຂດປົກປັກຮັກສາເພື່ອເຮັດໃຫ້ເຂດປົກປັກຮັກສານັ້ນ ໄດ້ຮັບການອະນຸລັກຢ່າງເຂັ້ມແຂງຂຶ້ນ.
6. ຟື້ນຟູ ແລະ ບູລະນະລະບົບນິເວດວິທະຍາທີ່ເຊື່ອມໂຊມ ແລະອຳນວຍຄວາມສະດວກ ໃນການຂະຫຍາຍຊະນິດພັນທີ່ຖືກຂົ່ມຂູ່ຄືນໃໝ່ພ້ອມທັງການພັດທະນາ ແລະ ຈັດຕັ້ງປະຕິບັດແຜນຍຸດທະສາດໃນການຄຸ້ມຄອງ.

7. ສ້າງ ຫຼື ປັບປຸງ ວິທີການຕ່າງໆເພື່ອວາງລະບຽບການຄຸ້ມຄອງ ຫຼື ຄວບຄຸມໄພອັນຕະລາຍຕ່າງໆ ທີ່ກ່ຽວພັນກັບການນຳໃຊ້ ແລະ ການນຳເອົາໄປສູ່ທຳມະຊາດຂອງສິ່ງທີ່ມີຊີວິດ ທີ່ມີການປ່ຽນແປງ ຄຸນລັກສະນະພັນທຸກຳ ຈາກການນຳໃຊ້ເຕັກໂນໂລຊີ ຊີວະພາບ ສະໄໝໃໝ່, ຊຶ່ງອາດມີຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມ ທີ່ມີຜົນ ສະທ້ອນຕໍ່ການອະນຸລັກ ແລະ ການນຳໃຊ້ຊັບພະຍາກອນພັນ ທຸກຳແບບຍືນຍົງ ແລະ ຄຳນຶງເຖິງສະພາບຄວາມສ່ຽງຕໍ່ສຸຂະພາບ ຂອງຄົນ.
8. ຄວບຄຸມ ຫຼື ກຳຈັດ ບັນດາຊະນິດພັນຕ່າງປະເທດ ທີ່ຄຸກຄາມຕໍ່ ລະບົບນິເວດວິທະຍາຂອງລາວ, ຕໍ່ປະຊາກອນທີ່ເພິ່ງພາອາໄສ ຫຼື ຊະນິດພັນອື່ນໆ.
9. ຕອບສະໜອງບັນດາເງື່ອນໄຂອັນຈຳເປັນ ເພື່ອຮັບປະກັນການປຽບ ທຽບລະຫວ່າງການນຳໃຊ້, ການອະນຸລັກຊັບພະຍາກອນພັນທຸກຳ ແລະ ການນຳໃຊ້ອົງປະກອບດ້ານຊີວະເຄມີຂອງມັນແບບຍືນຍົງ ໃນໄລຍະປະຈຸບັນ.
10. ພັດທະນາ ຫຼື ສ້າງບັນດາເຄື່ອງມືດ້ານນິຕິກຳ ແລະ ບັນດາບົດບັນ ຍັດດ້ານນິຕິກຳອື່ນໆທີ່ຈຳເປັນ ເພື່ອປົກປັກຮັກສາຊະນິດພັນ ແລະ ປະຊາກອນທີ່ຖືກຄຸກຄາມ.
11. ເມື່ອມີສັນຍານວ່າ ໄດ້ເກີດຜົນກະທົບອັນບໍ່ດີຕໍ່ຊັບພະຍາກອນ ພັນທຸກຳ ຕ້ອງໄດ້ວາງລະບຽບການຄຸ້ມຄອງຂະບວນການຕ່າງໆ ແລະ ຈັດລຳດັບບັນດາກິດຈະກຳທີ່ກ່ຽວຂ້ອງ.

### 1.2.4 ການອະນຸລັກຢູ່ນອກພື້ນທີ່ດັ່ງເດີມ

ການອະນຸລັກຢູ່ນອກພື້ນທີ່ດັ່ງເດີມ ແມ່ນການອະນຸລັກບັນດາສ່ວນ ປະກອບຕ່າງໆຂອງຄວາມຫຼາກຫຼາຍດ້ານພັນທຸກຳ ຢູ່ພາຍນອກຂອງແຫຼ່ງ

ທີ່ຢູ່ອາໄສຕາມທຳມະຊາດ, ໂດຍອີງກອນຮັບຜິດຊອບແຫ່ງຊາດ ຕ້ອງ:

1. ສ້າງ ແລະ ອຳນວຍຄວາມສະດວກໃນການອະນຸລັກຢູ່ນອກພື້ນທີ່ດັ່ງເດີມ ແລະ ການຄົ້ນຄວ້າກ່ຽວກັບພືດ, ສັດ ແລະ ຈຸລິນຊີ ໃຫ້ມັນຢູ່ພາຍໃນເງື່ອນສະພາບຄ້າຍຄືກັນກັບຢູ່ພາຍໃນປະເທດທີ່ເປັນຖິ່ນກຳເນີດຕົ້ນຕໍ ຂອງບັນດາຊັບພະຍາກອນພັນທຸກຳ.
2. ຮັບຮອງເອົາບັນດາມາດຕະການ ເພື່ອການຟື້ນຟູ ແລະ ຂະຫຍາຍຊະນິດພັນທີ່ຖືກຂົ່ມຂູ່ ແລະ ນຳເອົາຊະນິດພັນດັ່ງກ່າວ ກັບຄືນໄປສູ່ຢູ່ອາໄສທຳມະຊາດໃນເງື່ອນໄຂທີ່ມີຄວາມເໝາະສົມ.
3. ຄຸ້ມຄອງ ແລະ ບໍລິຫານການນຳເອົາຊັບພະຍາກອນພັນທຸກຳ ອອກຈາກຖິ່ນຢູ່ອາໄສໃນທຳມະຊາດ ເພື່ອເປົ້າໝາຍການອະນຸລັກຢູ່ນອກພື້ນທີ່ດັ່ງເດີມ ໂດຍທີ່ບໍ່ແຕະຕ້ອງລະບົບນິເວດວິທະຍາ ແລະການອະນຸລັກປະຊາກອນຂອງຊະນິດພັນຢູ່ໃນພື້ນທີ່ດັ່ງເດີມ ບໍ່ໃຫ້ຖືກຄຸກຄາມ, ຍົກເວັ້ນບັນດາມາດຕະການສະເພາະຢູ່ນອກພື້ນທີ່ດັ່ງເດີມ ທີ່ມີຄວາມຈຳເປັນແບບຊົ່ວຄາວຕາມທີ່ໄດ້ກ່າວມາເທິງນີ້.

### 1.2.5 ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ

ໂດຍຮັບຮູ້ ສິດອຳນາດອະທິປະໄຕຕໍ່ຊັບພະຍາກອນທຳມະຊາດຂອງຕົນ, ລັດຖະບານແຫ່ງ ສປປ ລາວ ໄດ້ກຳນົດບັນດາມາດຕະການຕໍ່ການເຂົ້າເຖິງຊັບພະຍາກອນພັນທຸກຳ ແລະ ການແບ່ງປັນຜົນປະໂຫຍດຈາກການນຳໃຊ້ສິ່ງດັ່ງກ່າວ ໂດຍການຮັບປະກັນວ່າບັນດາຜົນປະໂຫຍດທີ່ເກີດຈາກການນຳໃຊ້ຊັບພະຍາກອນພັນທຸກຳຂອງລາວເຮົາ ດັ່ງດຽວກັນກັບບັນດາຂັ້ນຕອນການນຳໃຊ້ ແລະ ການຄ້າ ຕ້ອງໄດ້ມີການແບ່ງປັນແບບສະເໝີພາບ ແລະ ເປັນທຳ ແລະ ຕາມບັນດາຂໍ້ຕົກລົງທີ່ເຫັນພ້ອມຕ້ອງກັນ ທີ່

ເປັນການສອດຄ່ອງກັບມາດຕາທີ 15 ໃນວັກທີ 3 ແລະ 7 ຂອງສົນທິສັນຍາວ່າດ້ວຍ ຄວາມຫຼາກຫຼາຍທາງດ້ານຊີວະນາໆພັນ.

ສປປ ລາວ ຈະກຳນົດລະບຽບການ, ບັນດາມາດຕະການທາງດ້ານນະ ໂຍບາຍ ຫຼື ການບໍລິຫານຕາມທີ່ໄດ້ມີການຕັດສິນໃຈຢ່າງເໝາະສົມເພື່ອບັນລຸເປົ້າໝາຍທີ່ຮັບປະກັນວ່າ ບັນດາຜົນປະໂຫຍດທີ່ໄດ້ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ແມ່ນກ່ຽວພັນກັບບັນດາຊຸມຊົນ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ, ໂດຍສອດຄ່ອງກັບລະບຽບການ ຫຼື ນະໂຍບາຍຂອງປະເທດເຮົາວ່າດ້ວຍ ສິດຂອງບັນດາຊຸມຊົນ ແລະ ທ້ອງຖິ່ນເໜືອຊັບພະຍາກອນພັນທຸກຳ ທີ່ໄດ້ຄຸ້ມຄອງ ແລະ ນຳໃຊ້ສືບທອດກັນມາ ແມ່ນໄດ້ຖືກແບ່ງປັນແບບສະເໝີພາບ ແລະ ເປັນທຳກັບບັນດາຊຸມຊົນທີ່ກ່ຽວຂ້ອງຕາມບັນດາຂໍ້ຕົກລົງທີ່ໄດ້ມີການເຫັນພ້ອມຕ້ອງກັນ.

ສປປ ລາວ ຮັບປະກັນວ່າ ບັນດາຜົນປະໂຫຍດ ແມ່ນເປັນໄປຕາມຮູບແບບທີ່ເປັນເງິນຕາ ແລະ ບໍ່ເປັນເງິນຕາ ແຕ່ບໍ່ໄດ້ມີການບັນຈຸໄວ້ພຽງແຕ່ຕາມເອກະສານຄັດຕິດຂອງອະນຸສັນຍານາໂກຍາເທົ່ານັ້ນ ແລະ ໄດ້ກຳນົດໄວ້ພາຍໃນລະບຽບການ, ບັນດາມາດຕະການທາງດ້ານນະໂຍບາຍ ຫຼື ການບໍລິຫານຕາມທີ່ໄດ້ມີການຕັດສິນໃຈ ມັນຍັງໄດ້ລວມເອົາບັນດາຜົນປະໂຫຍດ ທີ່ໄດ້ຈາກການນຳໃຊ້ພູມປັນຍາພື້ນບ້ານອັນເປັນມູນເຊື້ອ ທີ່ກ່ຽວຂ້ອງກັບຊັບພະຍາກອນພັນທຸກຳແມ່ນກ່ຽວພັນກັບບັນດາຊຸມຊົນ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ແມ່ນໄດ້ຖືກແບ່ງປັນແບບສະເໝີພາບ ແລະ ເປັນທຳກັບບັນດາຊຸມຊົນທີ່ກ່ຽວຂ້ອງ ຕາມບັນດາຂໍ້ຕົກລົງຮ່ວມກັນ.

ໃນການຈັດຕັ້ງປະຕິບັດບັນດາມາດຕະການເຫຼົ່ານີ້ ສປປ ລາວ ຕ້ອງ:

1. ສະໜອງດ້ານລະບຽບການທີ່ຊັດເຈນ ແລະ ໂປ່ງໃສກ່ຽວກັບບັນດາລະບຽບການດ້ານກົດໝາຍ ແລະ ບັນດາເງື່ອນໄຂຂໍ້ບັງຄັບຕ່າງໆທີ່ກ່ຽວຂ້ອງກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ;
2. ສະໜອງບັນດາເນື້ອຫາ ແລະ ຂະບວນການທີ່ສະເໝີພາບ ແລະພາວະວິໄສໃນການເຂົ້າເຖິງຊັບພະຍາກອນພັນທຸກຳ;
3. ສະໜອງບັນດາການຕັດສິນອັນເປັນລາຍລັກອັກສອນ ທີ່ແຈ່ມແຈ້ງ ແລະ ໂປ່ງໃສຂອງອົງກອນຮັບຜິດຊອບແຫ່ງຊາດ ໃນຮູບແບບທີ່ມີປະສິດທິພາບໃນການຈັດການ ແລະ ພາຍໃນຂອບເວລາທີ່ສົມເຫດສົມຜົນ;
4. ສະໜອງການອອກໃບອະນຸມັດ ພາຍໃນກຳນົດເວລາໃນການເຂົ້າເຖິງຂອງການອະນຸຍາດ ຫຼື ສິ່ງທີ່ເທົ່າທຽມ ຕາມທີ່ໄດ້ມີການກຳນົດໄວ້ໃນການຕັດສິນໃຈກ່ຽວກັບການໃຫ້ສິດໃນຂະບວນການແຈ້ງຂ່າວອະນຸມັດສິດ ແລະ ການສ້າງບັນດາຂໍ້ຕົກລົງຮ່ວມກັນ ແລະໃຫ້ແຈ້ງຕໍ່ສູນຂໍ້ມູນຂ່າວສານທີ່ກ່ຽວຂ້ອງ ຂອງອະນຸສັນຍານາໂກຢາວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ;
5. ສ້າງບັນດາເງື່ອນໄຂ ແລະ ບາດກ້າວໃນໄດ້ຮັບຂະບວນການແຈ້ງຂ່າວ ຫຼື ການຮັບຮອງ ແລະ ການມີສ່ວນຮ່ວມຂອງບັນດາຊຸມຊົນ ແລະ ທ້ອງຖິ່ນໃນການເຂົ້າເຖິງຊັບພະຍາກອນພັນທຸກຳ; ແລະ
6. ສ້າງຕັ້ງບັນດາຂະບວນການ ແລະ ຂອບທີ່ຈຳເປັນໃນການສ້າງຂໍ້ຕົກລົງຮ່ວມກັນ, ບັນດາຫົວເລື່ອງເຫຼົ່ານີ້ຕ້ອງໄດ້ເຮັດເປັນລາຍລັກອັກສອນ ແລະ ປະກອບດ້ວຍສິ່ງທີ່ຈຳເປັນດັ່ງນີ້:
    (1) ການແກ້ໄຂຂໍ້ຂັດແຍ່ງ;
    (2) ຫົວເລື່ອງກ່ຽວກັບການແບ່ງປັນຜົນປະໂຫຍດ ທີ່ລວມເອົາສິ່ງທີ່ກ່ຽວຂ້ອງກັບບັນດາສິດທິຊັບສິນທາງປັນຍາ;

(3) ຫົວເລື່ອງທີ່ພົວພັນເຖິງກໍລະນີບຸກຄົນຜູ້ທີສາມທີ່ມີສ່ວນ ກ່ຽວຂ້ອງ; ແລະ

(4) ບັນດາຫົວເລື່ອງທີ່ຄາດວ່າຈະມີການປັບປຸ່ງນຕາມຄວາມ ເໝາະສົມ.

### 1.2.6 ພູມປັນຍາພື້ນບ້ານອັນເປັນມູນເຊື້ອ

ໃນການສ້າງຂະບວນການທີ່ກ່ຽວຂ້ອງກັບພູມປັນຍາພື້ນບ້ານອັນເປັນມູນເຊື້ອ, ລັດຖະບານແຫ່ງ ສປປ ລາວ:

1. ນັບຖື, ຮັກສາ ແລະ ເສີມສ້າງ ຫົວຄິດປະດິດສ້າງຊາວບ້ານ ແລະ ພຶດຕິກຳຕົວຈິງຂອງບັນດາເຜົ່າ ແລະ ຊຸມຊົນທ້ອງຖິ່ນ ທີ່ກ່ຽວພັນກັບການອະນຸລັກ ແລະ ນຳໃຊ້ຄວາມຫຼາກຫຼາຍດ້ານພັນທຸກຳແບບຍືນຍົງ.
2. ອຳນວຍຄວາມສະດວກໃຫ້ມີການນຳໃຊ້ຢ່າງກວ້າງຂວາງດ້ວຍຮູບການອະນຸຍາດ ແລະ ສົ່ງເສີມຫົວຄິດປະດິດສ້າງ ແລະ ຄວາມຊຳນານງານຕ່າງໆ, ໂດຍການຍິນດີ ແລະ ມີສ່ວນຮ່ວມຂອງຜູ້ກ່ຽວຂ້ອງເຫຼົ່ານັ້ນ ແລະ ສົ່ງເສີມໃຫ້ມີການແບ່ງປັນຜົນປະໂຫຍດຈາກຄວາມຮູ້, ຫົວຄິດປະດິດສ້າງ ແລະ ຄວາມຊຳນານງານຢ່າງເໝາະສົມ.
3. ປົກປ້ອງ ແລະ ຊຸກຍູ້ ໃຫ້ຜູ້ນຳໃຊ້ແຫຼ່ງຊັບພະຍາກອນພັນທຸກຳທີ່ກ່ຽວພັນກັບວັດທະນະທຳທີ່ເປັນມູນເຊື້ອ ປະຕິບັດກັນມາໂດຍສອດຄ່ອງກັບເນື້ອຫາຂອງການອະນຸລັກ ແລະ ນຳໃຊ້ແບບຍືນຍົງ.
4. ສະໜັບສະໜູນ, ຊ່ວຍເຫຼືອປະຊາຊົນໃນທ້ອງຖິ່ນ ໃຫ້ພັດທະນາ ແລະ ຈັດຕັ້ງປະຕິບັດມາດຕະການແກ້ໄຂໃນເຂດຄວາມຫຼາກຫຼາຍດ້ານພັນທຸກຳ ທີ່ຫາຍາກນັ້ນບໍ່ໃຫ້ເຊື່ອມໂຊມລົງ.

5. ຊຸກຍູ້ອຳນາດການປົກຄອງທ້ອງຖິ່ນ ແລະ ຂະແໜງການເອກະຊົນ ໃຫ້ມີການຮ່ວມມືກັນເພື່ອພັດທະນາວິທີການໃນການອະນຸລັກ ແລະ ນຳໃຊ້ຊັບພະຍາກອນພັນທຸກຳແບບຍືນຍົງ ທີ່ກ່ຽວພັນກັບພູມປັນຍາພື້ນບ້ານອັນເປັນມູນເຊື້ອ.

ໃນການຈັດຕັ້ງປະຕິບັດບັນດາຂະບວນການທີ່ໄດ້ກ່າວມາຂ້າງເທິງນີ້, ລັດຖະບານແຫ່ງ ສປປ ລາວ ຕ້ອງໄດ້ກຳນົດບັນດາມາດຕະການເພື່ອບັນລຸເປົ້າໝາຍທີ່ໄດ້ມີການຮັບປະກັນວ່າ ພູມປັນຍາພື້ນບ້ານອັນເປັນມູນເຊື້ອທີ່ກ່ຽວຂ້ອງກັບຊັບພະຍາກອນພັນທຸກຳ ທີ່ກຳເນີດຂຶ້ນຈາກບັນດາຊຸມຊົນ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ແມ່ນການເຂົ້າເຖິງທີ່ຕິດພັນກັບຂະບວນການແຈ້ງຂ່າວອະນຸມັດສິດ ຫຼື ການຮັບຮູ້ ແລະ ການມີສ່ວນຮ່ວມຂອງບັນດາຊຸມຊົນ ແລະ ທ້ອງຖິ່ນເຫຼົ່ານີ້ ແລະ ຮັບປະກັນອີກວ່າຂໍ້ຕົກລົງຮ່ວມກັນແມ່ນໄດ້ຖືກສ້າງຕັ້ງຂຶ້ນ. ເພື່ອເປັນຮັບປະກັນເປົ້າໝາຍອັນນີ້, ລັດຖະບານແຫ່ງ ສປປ ລາວ:

1. ດຳເນີນການພິຈາລະນາລະບຽບການກົດໝາຍພາສີ ທີ່ກ່ຽວຂ້ອງກັບບັນດາຊຸມຊົນ ແລະ ທ້ອງຖິ່ນ, ບັນດາຂະບວນການ ແລະ ອະນຸສັນຍາ ທີ່ຮັບຮູ້ພູມປັນຍາພື້ນບ້ານອັນເປັນມູນເຊື້ອ ທີ່ກ່ຽວຂ້ອງກັບຊັບພະຍາກອນພັນທຸກຳຕາມຄວາມເໝາະສົມ;
2. ເພື່ອເຮັດໃຫ້ການເຂົ້າຮ່ວມຢ່າງມີປະສິດທິຜົນຂອງບັນດາຊຸມຊົນ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ຕ້ອງໄດ້ສ້າງຕັ້ງກົນໄກໃນການແຈ້ງຂ່າວໃຫ້ຜູ້ທີ່ຕ້ອງການນຳໃຊ້ ພູມປັນຍາພື້ນບ້ານອັນເປັນມູນເຊື້ອ ທີ່ກ່ຽວຂ້ອງກັບຊັບພະຍາກອນພັນທຸກຳ ກ່ຽວກັບບັນດາຂໍ້ຜູກພັນຂອງເຂົາເຈົ້າ ລວມເອົາບັນດາມາດຕະການຕ່າງໆທີ່ມີການແຈ້ງຜ່ານສູນຂໍ້ມູນຂ່າວສານຂອງອະນຸສັນຍານາໂກຢາວ່າດ້ວຍການເຂົ້າເຖິງ

ແລະ ການແບ່ງປັນຜົນປະໂຫຍດແບບສະເໝີພາບ ແລະ ເປັນທຳຈາກການນຳໃຊ້ພູມປັນຍາດັ່ງກ່າວ;

3. ໃຫ້ການສະໜັບສະໜູນຕາມຄວາມເໝາະສົມ ໃນການພັດທະນາບັນດາຊຸມຊົນ ແລະ ທ້ອງຖິ່ນ, ລວມເອົາເພດຍິງພາຍໃນຊຸມຊົນດັ່ງກ່າວທີ່ກ່ຽວຂ້ອງກັບ:
   (ກ) ບັນດາອະນຸສັນຍາຂອງຊຸມຊົນ ກ່ຽວກັບການເຂົ້າເຖິງພູມປັນຍາພື້ນບ້ານອັນເປັນມູນເຊື້ອ ທີ່ກ່ຽວຂ້ອງກັບຊັບພະຍາກອນພັນທຸກຳ ແລະ ການແບ່ງປັນຜົນປະໂຫຍດແບບສະເໝີພາບ ແລະ ເປັນທຳຈາກການນຳໃຊ້ພູມປັນຍາດັ່ງກ່າວ;
   (ຂ) ຫຼຸດຜ່ອນເງື່ອນໄຂໃນບັນດາຂໍ້ຕົກລົງທີ່ເຫັນພ້ອມຕ້ອງກັນເພື່ອຮັບປະກັນການແບ່ງປັນຜົນປະໂຫຍດແບບສະເໝີພາບ ແລະ ເປັນທຳຈາກການນຳໃຊ້ພູມປັນຍາພື້ນບ້ານອັນເປັນມູນເຊື້ອ ທີ່ກ່ຽວ ຂ້ອງກັບຊັບພະຍາກອນພັນທຸກຳ; ແລະ
   (ຄ) ສ້າງຮູບແບບຈຳລອງໃນການຮ່ວມມື ທີ່ມີການແບ່ງຜົນປະໂຫຍດຈາກການນຳໃຊ້ພູມປັນຍາພື້ນບ້ານອັນເປັນມູນເຊື້ອທີ່ກ່ຽວຂ້ອງກັບຊັບພະຍາກອນພັນທຸກຳ.

4. ຕາມຄວາມເປັນໄປໄດ້ ແມ່ນບໍ່ໃຫ້ຈຳກັດເບິ່ງບັນຫາສະເພາະພຽງແຕ່ພາສີການນຳໃຊ້ ແລະ ການແລກປ່ຽນຊັບພະຍາກອນພັນທຸກຳ ແລະ ສິ່ງກ່ຽວຂ້ອງກັບພູມປັນຍາພື້ນບ້ານອັນເປັນມູນເຊື້ອ ຢູ່ພາຍໃນບັນດາຊຸມຊົນ ແລະ ທ້ອງຖິ່ນເທົ່ານັ້ນ, ໃຫ້ເບິ່ງພາບລວມຂອງບັນດາຈຸດປະສົງຂອງສົນທິສັນຍາວ່າດ້ວຍ ຄວາມຫຼາກຫຼາຍດ້ານຊີວະພາບ.

### 1.2.7 ສິດທິບັດຊັບສິນທາງປັນຍາ

ໂດຍຮັບຮູ້ວ່າເຕັກໂນໂລຊີລວມທັງເຕັກໂນໂລຊີ ຊີວະພາບ ແລະ ການເຂົ້າເຖິງການຖ່າຍທອດເຕັກໂນໂລຊີ ລະຫວ່າງບັນດາປະເທດພາຄີນັ້ນ ເປັນເງື່ອນໄຂອັນສຳຄັນເພື່ອການອະນຸລັກ ແລະ ນຳໃຊ້ຊັບພະຍາກອນພັນທຸກຳ ແບບຍືນຍົງ ທີ່ບໍ່ໄດ້ສ້າງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສຸຂະພາບຂອງຄົນ.

ໃນກໍລະນີທີ່ເຕັກໂນໂລຊີມີຄວາມກ່ຽວພັນກັບສິດທິບັດ ແລະ ສິດທິຊັບສິນທາງປັນຍາໃນຂົງເຂດອື່ນໆ, ໂດຍການນຳໃຊ້ ແລະ ປ່ຽນໂອນສິດທິດັ່ງກ່າວຈະດຳເນີນພາຍໃຕ້ການຮັບຮູ້ ແລະ ສອດຄ່ອງກັບການປົກປ້ອງຊັບສິນທາງປັນຍາຢ່າງເໝາະສົມ ແລະ ມີປະສິດທິຜົນ, ເຊິ່ງລັດຖະບານແຫ່ງ ສປປ ລາວ:

1. ນຳເອົາມາດຕະການທາງດ້ານກົດໝາຍທີ່ເໝາະສົມ ເພື່ອເປັນການຮັບປະກັນໃຫ້ບັນດາພາຄີທີ່ກ່ຽວຂ້ອງ ທີ່ໄດ້ສະໜອງຊັບພະຍາກອນພັນທຸກຳໃຫ້ສາມາດນຳໃຊ້ ແລະ ປ່ຽນໂອນເຕັກໂນໂລຊີກ່ຽວກັບຊັບພະຍາກອນພັນທຸກຳດັ່ງກ່າວ ຕາມກຳນົດເວລາທີ່ທັງສອງຝ່າຍໄດ້ມີການຕົກລົງນຳກັນ, ລວມທັງເຕັກໂນໂລຊີທີ່ໄດ້ຮັບການປົກປ້ອງດ້ວຍສິດທິບັດ ແລະ ສິດທິທາງຊັບສິນທາງປັນຍາ ອື່ນໆ.
2. ນຳເອົາມາດຕະການທາງດ້ານກົດໝາຍທີ່ເໝາະສົມ ເພື່ອເປັນການຮັບປະກັນໃຫ້ພາກເອກະຊົນສາມາດເຂົ້າເຖິງການພັດທະນາຮ່ວມກັນ ແລະ ຖ່າຍທອດເຕັກໂນໂລຊີ ເພື່ອສິດຜົນປະໂຫຍດທັງສອງຝ່າຍກໍຄືທັງຂອງລັດຖະບານ ແລະ ຂະແໜງການຂອງເອກະຊົນຈາກບັນດາປະເທດກຳລັງພັດທະນາ.

3. ຮ່ວມມື ແລະ ຮັບປະກັນການອອກລະບຽບຫຼັກການຢູ່ພາຍໃນໂດຍໃຫ້ສອດຄ່ອງກັບກົດໝາຍສາກົນ ແລະ ຈະບໍ່ອອກລະບຽບການເພື່ອເປົ້າໝາຍສະເພາະໃດໜຶ່ງ.

## 1.3 ການພັດທະນານະໂຍບາຍທີ່ກ່ຽວຂ້ອງກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸກໍາ

ຈຸດປະສົງຂອງການການພັດທະນາ ນະໂຍບາຍທີ່ກ່ຽວຂ້ອງກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸກໍາ ແມ່ນການກໍານົດບັນດາມາດຕະການໃນການຄຸ້ມຄອງ ແລະ ການບໍລິຫານຈັດການກ່ຽວກັບການແບ່ງປັນຜົນປະໂຫຍດແບບສະເໝີພາບ ແລະເປັນທໍາຈາກການນໍາໃຊ້ຊັບພະຍາກອນພັນທຸກໍາ ດ້ວຍຮູບການສະໜອງລະບຽບການທີ່ສັກສິດເຈາະຈົງ ແລະ ໂປ່ງໃສສໍາລັບທັງສອງຝ່າຍ ຜູ້ເປັນເຈົ້າຂອງ ແລະ ຜູ້ນໍາໃຊ້ຊັບພະຍາກອນພັນທຸກໍາ.

ບັນດາພັນທະພິເສດໃນການສະໜັບສະໜູນການປະຕິບັດຕາມລະບຽບການພາຍໃນ ຫຼື ເງື່ອນໄຂຂອງປະເທດທີ່ໄດ້ສະໜອງຊັບພະຍາກອນພັນທຸກໍາ ແລະ ພັນທະຜູກພັນທີ່ກໍານົດໄວ້ໃນບັນດາຂໍ້ຕົກລົງທີ່ເຫັນພ້ອມຕ້ອງກັນ ແມ່ນໄດ້ກາຍເປັນສັນຍານແຫ່ງການກໍ່ເກີດເປັນນະວັດຕະກໍາຂອງອະນຸສັນຍານາໂກຢາ. ບັນດາພັນທະຜູກພັນການປະຕິບັດຕາມລະບຽບການດຽວກັນກັບພັນທະທີ່ຖືກສ້າງຕັ້ງຂຶ້ນ ເພື່ອພະຍາກອນໃນການເຂົ້າເຖິງຊັບພະຍາກອນພັນທຸກໍາ ແມ່ນເປັນການປະກອບສ່ວນໃນການຄໍ້າປະກັນການແບ່ງປັນຜົນປະໂຫຍດໃນເມື່ອຊັບພະຍາກອນໄດ້ຖືກນໍາສົ່ງອອກຈາກປະເທດທີ່ໄດ້ຕອບສະໜອງຊັບພະຍາກອນພັນທຸກໍາ. ອີກດ້ານໜຶ່ງ, ມາດຕະການທາງດ້ານນະໂຍບາຍກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸກໍາ ທີ່ກ່ຽວຂ້ອງກັບພູມປັນຍາພື້ນບ້ານອັນເປັນມູນເຊື້ອທີ່ເກີດຈາກຊຸມຊົນ ແລະ ທ້ອງຖິ່ນ ໃນກໍລະນີທີ່

ກ່ຽວພັນກັບຊັບພະຍາກອນພັນທຸກຳ ຈະເປັນການເສີມສ້າງຄວາມເຂັ້ມແຂງຂອງຊຸມຊົນ ທີ່ສາມາດເປັນໄປໄດ້ໃນການຮັບຜົນປະໂຫຍດຈາກການນຳໃຊ້ບັນດາອົງຄວາມຮູ້, ນະວັດຕະກຳ ແລະ ປະສົບການ.

ອົງກອນຮັບຜິດຊອບແຫ່ງຊາດຕ້ອງໄດ້ກຳນົດບັນດາມາດຕະການທີ່ຈຳເປັນໃນການຈັດຕັ້ງປະຕິບັດ ບັນດາຫົວເລື່ອງທີ່ໄດ້ລະບຸໄວ້ພາຍໃນມາດຕາຕ່າງໆຂອງອະນຸສັນຍານາໂກຍາ ດັ່ງນີ້:

1. ຂອບຂອງການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ;
2. ຄວາມສຳພັນກັບບັນດາຂໍ້ຕົກລົງ ແລະ ລະບຽບການສາກົນ;
3. ການແບ່ງປັນຜົນປະໂຫຍດແບບສະເໝີພາບ ແລະ ເປັນທຳ;
4. ການເຂົ້າເຖິງຊັບພະຍາກອນທາງດ້ານພັນທຸກຳ;
5. ການເຂົ້າເຖິງພູມປັນຍາພື້ນບ້ານອັນເປັນມູນເຊື້ອທີ່ກ່ຽວຂ້ອງກັບຊັບພະຍາກອນພັນທຸກຳ;
6. ການພິຈາລະນາບັນຫາພິເສດ;
7. ການປະກອບສ່ວນໃນການອະນຸລັກ ແລະ ການນຳໃຊ້ແບບຍືນຍົງ;
8. ກົນໄກການຕົກລົງລະດັບໂລກໃນການການແບ່ງປັນຜົນປະໂຫຍດ;
9. ການຮ່ວມມືຂ້າມແດນ;
10. ພູມປັນຍາພື້ນບ້ານອັນເປັນມູນເຊື້ອທີ່ກ່ຽວຂ້ອງກັບຊັບພະຍາກອນພັນທຸກຳ;
11. ຈຸດປະສານງານແຫ່ງຊາດ ແລະ ອົງກອນຮັບຜິດຊອບແຫ່ງຊາດ;
12. ສູນຂໍ້ມູນການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ແລະ ການແລກປ່ຽນຂໍ້ມູນ;
13. ສິດຜູກພັນກັບລະບຽບການພາຍໃນປະເທດ ຫຼື ຄວາມຕ້ອງການທາງດ້ານການຄຸ້ມຄອງທີ່ກ່ຽວຂ້ອງກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ;

14. ສິດຜູກພັນກັບລະບຽບການພາຍໃນປະເທດ ຫຼື ຄວາມຕ້ອງການທາງດ້ານການຄຸ້ມຄອງທີ່ກ່ຽວຂ້ອງກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ສຳລັບພູມປັນຍາພື້ນບ້ານອັນເປັນມູນເຊື້ອທີ່ກ່ຽວພັນກັບຊັບພະຍາກອນພັນທຸກຳ;
15. ການຕິດຕາມກວດກາການນຳໃຊ້ຊັບພະຍາກອນພັນທຸກຳ;
16. ການປະຕິບັດພັນທະສັນຍາຕາມບັນດາຂໍ້ຕົກລົງຮ່ວມກັນ;
17. ຮູບແບບການຕົກລົງຮ່ວມງານ;
18. ລະຫັດຂອງການເຂົ້າຮ່ວມ; ຄູ່ມື ແລະ ປະສົບການໆນຳໃຊ້ ແລະ ມາດຕະຖານ;
19. ການສ້າງຈິດສຳນຶກ;
20. ຄວາມອາດສາມາດ;
21. ການຖ່າຍທອດເຕັກໂນໂລຊີ, ການປະສານງານ ແລະ ການຮ່ວມມື.

### 1.3.1 ນະໂຍບາຍທາງດ້ານນິຕິກຳທີ່ມີຕໍ່ການຄຸ້ມຄອງດ້ານການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ

ລັດຖະບານແຫ່ງ ສປປ ລາວ ຕ້ອງກຳນົດ ແລະ ຜັນຂະຫຍາຍນະໂຍບາຍແຫ່ງຊາດ ກ່ຽວກັບຄວາມຫຼາກຫຼາຍດ້ານຊີວະພາບ ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳໃຫ້ກາຍເປັນແຜນການດຳເນີນງານແຫ່ງຊາດທາງດ້ານນິຕິກຳ, ຄູ່ມືທາງດ້ານເຕັກນິກ, ແຜນການ ແລະ ໂຄງການລະອຽດໃນການຄຸ້ມຄອງ ແລະ ຕິດຕາມກວດກາການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ.

### 1.3.2 ນະໂຍບາຍທີ່ມີຕໍ່ການຄຸ້ມຄອງບໍລິຫານຈັດການກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ

ບັນດາລະບົບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດຕ້ອງອີງຕາມຍຸດທະສາດລວມໃນການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດຂອງລະດັບປະເທດ ແລະ ພາກພື້ນ. ຍຸດທະສາດໃນການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດອັນນີ້ ແມ່ນຕ້ອງບັນລຸເປົ້າໝາຍໃນການອະນຸລັກ ແລະ ການພັດທະນາແບບຍືນຍົງຂອງຄວາມຫຼາກຫຼາຍດ້ານຊີວະພາບ ແລະ ອາດແມ່ນພາກສ່ວນອັນໜຶ່ງຂອງຍຸດທະສາດ ແລະ ແຜນດຳເນີນງານແຫ່ງຊາດດ້ານຊີວະນາໆພັນ ແລະ ເປັນການສົ່ງເສີມການແບ່ງປັນຜົນປະໂຫຍດແບບສະເໝີພາບ ແລະ ເປັນທຳ. ບັນດາບາດກ້າວຕ່າງໆທີ່ກ່ຽວຂ້ອງກັບຂະບວນການໄດ້ຮັບສິດໃນການເຂົ້າເຖິງຊັບພະຍາກອນພັນທຸກຳ ແລະ ການແບ່ງປັນຜົນປະໂຫຍດບັນຈຸບັນດາກິດຈະກຳທີ່ກ່ຽວກັບການເຂົ້າເຖິງ, ການຄົ້ນຄວ້າ ແລະ ການພັດທະນາທີ່ຕິດພັນກັບຊັບພະຍາກອນພັນທຸກຳ, ດັ່ງດຽວກັນກັບການຜະລິດເປັນສິນຄ້າ ແລະ ການນຳໃຊ້ອື່ນໆໂດຍຮວມເອົາການແບ່ງປັນຜົນປະໂຫຍດ. ບັນດາເປົ້າໝາຍຂອງລະບົບການຄຸ້ມຄອງບໍລິຫານຈັດການກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ປະກອບດັ່ງນີ້:

1. ເພື່ອປະກອບສ່ວນໃນການອະນຸລັກ ແລະ ການນຳໃຊ້ແບບຍືນຍົງຂອງຄວາມຫຼາກຫຼາຍດ້ານຊີວະພາບ;
2. ເພື່ອຕອບສະໜອງແຜນດຳເນີນງານທີ່ມີຄວາມໂປ່ງໃສ ໃຫ້ແກ່ອົງກອນຮັບຜິດຊອບແຫ່ງຊາດ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ ສຳລັບການອຳນວຍຄວາມສະດວກໃນການເຂົ້າເຖິງຊັບພະຍາກອນພັນທຸກຳ

ແລະ ຮັບປະກັນການແບ່ງປັນຜົນປະໂຫຍດແບບສະເໝີພາບ ແລະ ເປັນທຳ;

3. ເພື່ອຕອບສະໜອງຄູ່ມືໃຫ້ແກ່ອົງກອນຮັບຜິດຊອບແຫ່ງຊາດ ໃນການພັດທະນາບັນດາລະບອບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ;
4. ເພື່ອແຈ້ງຂ່າວກ່ຽວກັບບັນດາຄວາມສຳນານງານ ແລະ ເງື່ອນໄຂ (ຜູ້ເປັນເຈົ້າຂອງ ແລະ ຜູ້ນຳໃຊ້) ໃນການບໍລິຫານກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ;
5. ເພື່ອຕອບສະໜອງໃຫ້ກ່ຽວກັບການເສີມສ້າງຄວາມອາດສາມາດໃນການຮັບປະກັນການເຈລະຈາທີ່ມີປະສິດທິຜົນ ແລະ ການຈັດຕັ້ງປະຕິບັດນການບໍລິຫານກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ, ເປັນກໍລະນີສະເພາະແກ່ປະເທດທີ່ກຳລັງພັດທະນາ, ຮວມທັງບັນດາປະເທດດ້ອຍພັດທະນາ ແລະ ປະເທດທີ່ເປັນເກາະດອນທີ່ກຳລັງພັດທະນາ;
6. ເພື່ອສົ່ງເສີມການສ້າງຈິດສຳນຶກ ໃນການຈັດຕັ້ງປະຕິບັດບັນດາລະດັບຄາດໝາຍຂອງສົນທິສັນຍາຊີວະນາໆພັນ;
7. ເພື່ອສົ່ງເສີມຕາມຄວາມເໝາະສົມ ແລະ ຢ່າງມີປະສິດທິຜົນໃນການຖ່າຍທອດເຕັກໂນໂລຊີທີ່ເໝາະສົມ ໃຫ້ແກ່ປະເທດທີ່ເປັນພາຄີ, ເປັນກໍລະນີສະເພາະແກ່ປະເທດທີ່ກຳລັງພັດທະນາ, ຮວມທັງບັນດາປະເທດດ້ອຍພັດທະນາ ແລະ ປະເທດທີ່ເປັນເກາະດອນທີ່ກຳລັງພັດທະນາ, ບັນດາຊຸມຊົນ ແລະ ທ້ອງຖິ່ນ;
8. ເພື່ອສົ່ງເສີມຄາດໝາຍກ່ຽວກັບຊັບພະຍາກອນດ້ານການເງິນທີ່ຈຳເປັນໃນການຕອບສະໜອງໃຫ້ແກ່ປະເທດທີ່ກຳລັງພັດທະນາ, ຮວມທັງບັນດາປະເທດດ້ອຍພັດທະນາ ແລະ ປະເທດທີ່ເປັນເກາະດອນ

ທີ່ກຳລັງພັດທະນາ ຫຼື ບັນດາປະເທດທີ່ຢູ່ໃນໄລຍະເສດຖະກິດຂ້າມຜ່ານໃນການປະກອບສ່ວນບຸກທະລຸບັນດາເປົ້າໝາຍ ທີ່ໄດ້ກ່າວຜ່ານມາຂ້າງເທິງນີ້;

9. ເພື່ອສ້າງຄວາມເຂັ້ມແຂງສູນຂໍ້ມູນຂ່າວສານ ທີ່ນຳໃຊ້ເປັນກົນໄກການຮ່ວມມືພາຍໃນປະເທດທີ່ເປັນພາຄີ ໃນການເຂົ້າເຖິງ ແລະການແບ່ງປັນຜົນປະໂຫຍດ;

10. ເພື່ອປະກອບສ່ວນໃນການພັດທະນາບັນດາກົນໄກ ແລະ ລະບອບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ໂດຍອີງກອນຮັບຜິດຊອບແຫ່ງຊາດ, ທີ່ມີການຮັບຮອງການປົກປ້ອງພູມປັນຍາພື້ນບ້ານອັນເປັນມູນເຊື້ອ, ນະວັດຕະກຳ ແລະ ປະສົບການຂອງບັນດາຊຸມຊົນ ແລະ ທ້ອງຖິ່ນ, ທີ່ມີຄວາມສອດຄ່ອງກັບບັນດາກົດໝາຍພາຍໃນປະເທດ ແລະ ລະບຽບການສາກົນທີ່ກ່ຽວຂ້ອງ;

11. ເພື່ອປະກອບສ່ວນໃນການຫຼຸດຜ່ອນຄວາມທຸກຍາກ ແລະ ເປັນການສະໜັບສະໜູນການບັນລຸໃຫ້ເປັນຈິງ ກ່ຽວກັບຍຸດທະສາດຄວາມໝັ້ນຄົງດ້ານສະບຽງອາຫານ, ສຸຂະພາບ ແລະ ການເຊື່ອມໂຍງດ້ານວັດທະນະທຳຂອງມວນມະນຸດ, ເປັນກໍລະນີສະເພາະແກ່ປະເທດທີ່ກຳລັງພັດທະນາ, ຮວມທັງບັນດາປະເທດດ້ອຍພັດທະນາ ແລະ ປະເທດທີ່ເປັນເກາະດອນທີ່ກຳລັງພັດທະນາ;

12. ການຄົ້ນຄວ້າທາງດ້ານອະນຸກົມວິທານ, ອັນເປັນກໍລະນີສະເພາະກ່ຽວກັບຈຸດລິເລີ່ມດ້ານອະນຸກົມວິທານລະດັບໂລກ ແມ່ນຕ້ອງບໍ່ຖືກສະກັດກັ້ນ ແລະ ບັນດາຜູ້ເປັນເຈົ້າຂອງ ຄວນອຳນວຍຄວາມສະດວກທີ່ກ່ຽວຂ້ອງກັບຂໍ້ມູນຂອງຊັບພະຍາກອນທາງດ້ານວັດຖຸພັນກ່ຽວກັບລະບົບການນຳໃຊ້ ແລະ ບັນດາຜູ້ນຳໃຊ້ ຄວນຕອບສະ

ໜອງໃຫ້ໄດ້ກ່ຽວກັບບັນດາຂໍ້ມູນທັງໝົດເທົ່າທີ່ມີຂອງບັນດາຊະນິດພັນທີ່ຕົນໄດ້ຮັບ.

### 1.3.3 ນະໂຍບາຍທີ່ມີຕໍ່ການສຶກສາ, ສ້າງຈິດສຳນຶກ ແລະ ມີສ່ວນຮ່ວມຂອງມວນຊົນ ກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ

ອົງກອນຮັບຜິດຊອບແຫ່ງຊາດຕ້ອງກຳນົດມາດຕະການ ເພື່ອເສີມສ້າງຈິດສຳນຶກກ່ຽວກັບຄວາມສຳຄັນຂອງຊັບພະຍາກອນທາງດ້ານພັນທຸກຳ ແລະ ພູມປັນຍາພື້ນບ້ານອັນເປັນມູນເຊື້ອ ທີ່ກ່ຽວພັນກັບຊັບພະຍາກອນພັນທຸກຳ ແລະ ກ່ຽວພັນກັບກໍລະນີການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ. ບັນດາມາດຕະການປະກອບດ້ວຍ:

1. ການສົ່ງເສີມອະນຸສັນຍາສະບັບນີ້ ແລະ ຮວມເອົາຈຸດປະສົງຂອງມັນ;
2. ການຈັດຕັ້ງກອງປະຊຸມຂອງຊຸມຊົນສ່ວນນ້ອຍ ແລະ ທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ;
3. ການສ້າງຕັ້ງ ແລະ ປັບປຸງໂຕະການຊ່ວຍເຫຼືອບັນດາຊຸມຊົນ ແລະ ທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ;
4. ການແຈ້ງຂ່າວໂດຍຜ່ານ ສູນຂໍ້ມູນລະດັບຊາດ;
5. ການສົ່ງເສີມລະຫັດແບບອາສາສະໝັກຂອງການເຂົ້າຮ່ວມ, ບັນດາຄູ່ມື ແລະ ປະສົບການໆນຳໃຊ້ ແລະ ຫຼື ມາດຕະຖານໃນການປຶກສາຫາລືກັບບັນດາຊຸມຊົນ ແລະ ທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ;
6. ການສົ່ງເສີມຕາມຄວາມເໝາະສົມກ່ຽວກັບການແລກປ່ຽນບັນດາປະສົບການພາຍໃນປະເທດ, ພາກພື້ນ ແລະ ສາກົນ;

7. ການໃຫ້ການສຶກສາ ແລະ ການຝຶກອົບຮົມກ່ຽວກັບຂໍ້ກຳນົດຂອງການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ໃຫ້ແກ່ບັນດາຜູ້ນຳໃຊ້ ແລະ ຜູ້ເປັນເຈົ້າຂອງ ຊັບພະຍາກອນພັນທຸກຳ ແລະ ພູມປັນຍາພື້ນບ້ານອັນເປັນມູນເຊື້ອ ທີ່ກ່ຽວຂ້ອງກັບຊັບພະຍາກອນພັນທຸກຳ;
8. ການມີສ່ວນເຂົ້າຮ່ວມຂອງບັນດາຊຸມຊົນ ແລະ ທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດອະນຸສັນຍາສະບັບນີ້; ແລະ
9. ການເສີມສ້າງຈິດສຳນຶກຂອງບັນດາອະນຸສັນຍາທີ່ກ່ຽວຂ້ອງກັບຊຸມຊົນ ແລະ ຂະບວນການຂອງຊຸມຊົນ ແລະ ທ້ອງຖິ່ນ.

### 1.4 ສະພາບຂອງ ສປປ ລາວ ກ່ຽວກັບການຮັບຮອງ ການໃຫ້ສັດຕະຍາບັນສົນທິສັນຍາວ່າດ້ວຍ ຄວາມຫຼາກຫຼາຍທາງດ້ານຊີວະນາໆພັນ ແລະ ການເຂົ້າເປັນພາຄີຂອງອະນຸສັນຍານາໂກຢາວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ

ສົນທິສັນຍາວ່າດ້ວຍ ຄວາມຫຼາກຫຼາຍທາງດ້ານຊີວະນາໆພັນ ແມ່ນໄດ້ເປີດໃຫ້ເຊັນຮັບຮອງຢູ່ໃນກອງປະຊຸມສຸດຍອດກ່ຽວກັບໜ່ວຍໂລກ ຢູ່ເມືອງຣິໂອ ເດີຈາເນໂຣ, ປະເທດເບຼຊິນ, ໃນປີ 1992 ແລະ ມີຜົນບັງຄັບໃຊ້ໃນວັນທີ 29 ທັນວາ 1993. ສົນທິສັນຍາວ່າດ້ວຍ ຄວາມຫຼາກຫຼາຍທາງດ້ານຊີວະນາໆພັນ ແມ່ນສົນທິສັນຍາສາກົນໃນການອະນຸລັກຊີວະນາໆພັນ, ການນຳໃຊ້ແບບຍືນຍົງຂອງບັນດາສ່ວນປະກອບຂອງຊີວະນາໆພັນ ແລະ ການແບ່ງປັນຜົນປະໂຫຍດແບບສະເໝີພາບ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ, ລັດຖະບານແຫ່ງສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ ໄດ້ເຂົ້າເປັນພາຄີສົນທິສັນຍາວ່າດ້ວຍ ຄວາມຫຼາກຫຼາຍທາງ

ດ້ານຊີວະນາໆພັນ ໃນວັນທີ 20 ກັນຍາ 1996. ໃນປະຈຸບັນມີ 193 ປະເທດໄດ້ເປັນພາຄີ, ສົນທິສັນຍາໄດ້ມີການມີສ່ວນຮ່ວມຂອງບັນດາປະເທດຕ່າງໆຢ່າງກວ້າງຂວາງ. ສົນທິສັນຍາໄດ້ຮຽກຮ້ອງໃຫ້ບັນດາສັນຍາສາກົນທັງໝົດທີ່ກ່ຽວພັນກັບຊີວະນາໆພັນ ແລະ ການບໍລິການທາງດ້ານລະບົບນິເວດວິທະຍາ, ໂດຍຮວມເອົາບັນດາສົນທິສັນຍາສາກົນ ທາງດ້ານການປ່ຽນແປງດິນຟ້າອາກາດ, ໄດ້ມີການບໍລິຫານຈັດການທາງດ້ານວິທະຍາສາດ, ການພັດທະນາບັນດາເຄື່ອງມື, ການກະຕຸກຊຸກຍູ້ ແລະ ຂະບວນການ, ການຖ່າຍທອດບັນດາເຕັກໂນໂລຊີ ແລະ ປະສົບການທີ່ມີຄຸນຄ່າ ແລະ ມີການປະກອບສ່ວນແບບເຕັມສ່ວນ ແລະ ຕັ້ງໜ້າຂອງບັນດາຂະແໜງການທີ່ມີສ່ວນກ່ຽວຂ້ອງຮວມເອົາບັນດາຊຸມຊົນ ແລະ ທ້ອງຖິ່ນ, ຊາວໜຸ່ມ, ອົງການຈັດຕັ້ງທີ່ບໍ່ສັງກັດໃນກົງຈັກລັດຖະບານ, ເພດຍິງ ແລະ ບັນດານັກທຸລະກິດ.

ບັນດາປະມຸກລັດ ແລະ ລັດຖະບານ, ພາຍໃນກອງປະຊຸມສຸດຍອດຂອງໂລກວ່າດ້ວຍ ການພັດທະນາແບບຍືນຍົງ ທີ່ໄດ້ຖືກຈັດຂຶ້ນຢູ່ນະຄອນໂຈຮານແນສເບີກ, ປະເທດອາຟຼິກກາໃຕ້, ໃນເດືອນກັນຍາ, 2002, ໄດ້ມີຮັບຮອງກ່ອນອື່ນໝົດໃນຄວາມຈຳເປັນສຳລັບກົນໄກສາກົນ ເພື່ອສົ່ງເສີມ ແລະ ວາງກົນໄກການແບ່ງປັນຜົນປະໂຫຍດແບບສະເໝີພາບ ແລະ ເປັນທຳ ແລະ ຮຽກຮ້ອງໃຫ້ມີການເຈລະຈາ ທີ່ປຶກສາຫາລືພາຍໃນຂອບດຳເນີນງານຂອງສົນທິສັນຍາວ່າດ້ວຍ ຄວາມຫຼາກຫຼາຍທາງດ້ານຊີວະນາໆພັນ. ກອງປະຊຸມບັນດາປະເທດທີ່ເປັນພາຄີຂອງສົນທິສັນຍາຄັ້ງທີ 7, ໃນປີ 2004, ໄດ້ເຫັນດີເຫັນພ້ອມກັບຜົນຂອງກອງປະຊຸມໜ່ວຍງານສະເພາະກິດກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ໃນການວິເຄາະ ແລະ ເຈລະຈາປຶກສາຫາລືກ່ຽວກັບ ລະບອບສາກົນກ່ຽວກັບການເຂົ້າເຖິງຊັບພະຍາກອນພັນທຸກຳ ແລະ ການແບ່ງປັນບັນດາຜົນປະໂຫຍດ ເພື່ອ

ການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ ກ່ຽວກັບມາດຕາທີ 15 ຂອງສົນທິສັນຍາ (ການເຂົ້າເຖິງຊັບພະຍາກອນພັນທຸກຳ) ແລະ 8(j) (ພູມປັນຍາພື້ນບ້ານອັນເປັນມູນເຊື້ອ) ແລະ ຈຸດປະສົງອັນດັບສາມຂອງສົນທິສັນຍາ.

ອະນຸສັນຍານາໂກຍາໄດ້ສົ່ງສັນຍານກ່ຽວກັບ ຈຸດປະສົງຂອງສົນທິສັນຍາກ່ຽວກັບການແບ່ງປັນຜົນປະໂຫຍດແບບສະເໝີພາບ ແລະ ເປັນທຳຈາກການນຳໃຊ້ຊັບພະຍາກອນພັນທຸກຳ, ດ້ວຍຮູບການສະໜອງລະບຽບການທີ່ສັກສິດເຈາະຈົງ ແລະ ໂປ່ງໃສສຳລັບທັງສອງຝ່າຍຜູ້ເປັນເຈົ້າຂອງ ແລະ ຜູ້ນຳໃຊ້ຊັບພະຍາກອນພັນທຸກຳ. ບັນດາພັນທະພິເສດໃນການສະໜັບສະໜູນການປະຕິບັດຕາມລະບຽບການພາຍໃນ ຫຼື ເງື່ອນໄຂຂອງປະເທດທີ່ໄດ້ສະໜອງຊັບພະຍາກອນພັນທຸກຳໃຫ້ ແລະ ພັນທະຜູກພັນທີ່ກຳນົດໄວ້ໃນບັນດາຂໍ້ຕົກລົງຮ່ວມກັນ ແມ່ນໄດ້ກາຍເປັນສັນຍານແຫ່ງການກໍ່ເກີດເປັນນະວັດຕະກຳຂອງອະນຸສັນຍານາໂກຍາ. ບັນດາພັນທະຜູກພັນການປະຕິບັດຕາມລະບຽບການ ດັ່ງດຽວກັນກັບພັນທະທີ່ຖືກສ້າງຕັ້ງຂຶ້ນເພື່ອພະຍາກອນໃນການເຂົ້າເຖິງຊັບພະຍາກອນພັນທຸກຳ ແມ່ນຈະເປັນການປະກອບສ່ວນໃນການຄ້ຳປະກັນການແບ່ງປັນຜົນປະໂຫຍດໃນເມື່ອຊັບພະຍາກອນໄດ້ຖືກນຳສົ່ງອອກຈາກປະເທດ ທີ່ໄດ້ຕອບສະໜອງຊັບພະຍາກອນພັນທຸກຳ. ອີກດ້ານໜຶ່ງ, ມາດຕະການຂອງອະນຸສັນຍາກ່ຽວກັບພູມປັນຍາພື້ນບ້ານອັນເປັນມູນເຊື້ອທີ່ເກີດຈາກຊຸມຊົນທ້ອງຖິ່ນ ແລະ ພື້ນເມືອງໃນກໍລະນີທີ່ກ່ຽວພັນກັບຊັບພະຍາກອນພັນທຸກຳ ຈະເປັນການເສີມສ້າງຄວາມເຂັ້ມແຂງຂອງຊຸມຊົນທີ່ສາມາດເປັນໄປໄດ້ໃນການຮັບຜົນປະໂຫຍດຈາກການນຳໃຊ້ບັນດາອົງຄວາມຮູ້, ນະວັດຕະກຳ ແລະ ປະສົບການ.

ໂດຍການສົ່ງເສີມການນຳໃຊ້ຊັບພະຍາກອນພັນທຸກຳ ແລະ ກ່ຽວພັນກັບພູມປັນຍາພື້ນບ້ານອັນເປັນມູນເຊື້ອ ແລະ ໂດຍການສ້າງຄວາມເຂັ້ມແຂງບັນດາເງື່ອນໄຂໃນການແບ່ງປັນຜົນປະໂຫຍດແບບສະເໝີພາບ ແລະ

ເປັນທຳຈາກການນຳໃຊ້ສິ່ງດັ່ງກ່າວ, ອະນຸສັນຍາຈະເສີມສ້າງບັນດາການກະຕຸກຊຸກຍູ້ ເພື່ອການອະນຸລັກຄວາມຫຼາກຫຼາຍທາງດ້ານຊີວະນາໆພັນ, ການນຳໃຊ້ແບບຍືນຍົງຂອງບັນດາສ່ວນປະກອບ ແລະ ການເພີ່ມທະວີການປະກອບສ່ວນຂອງຊີວະນາໆພັນແກ່ການພັດທະນາແບບຍືນຍົງ ແລະ ຊີວິດການເປັນຢູ່ອັນອຸດົມສົມບູນຂອງມວນມະນຸດ.

ພາຍໃນກອງປະຊຸມ ບັນປະເທດທີ່ເປັນພາຄີຂອງສົນທິສັນຍາ ຄັ້ງທີ 11 ທີ່ໄດ້ຈັດຂຶ້ນຢູ່ເມືອງໄຮແດຣາບັດ, ວັນທີ 08-19 ຕຸລາ 2012, ປະເທດພາຄີໄດ້ມີການສະແດງເຈດຈຳນົງອັນຊັດເຈນ ທີ່ຕ້ອງການໃຫ້ອະນຸສັນຍານາໂກຢາມີຜົນໃນການບັງຄັບໃຊ້ ແລະ ສາມາດຈັດຕັ້ງປະຕິບັດໃນເວລາອັນໃກ້ໆນີ້. ປະເທດພາຄີໄດ້ມີການຕົກລົງ ກ່ຽວກັບບັນດາກິດຈະກຳໃນທົດສັດຕະວັດໜ້າ, ທີ່ໄດ້ຮວມເອົາການເປີດກອງປະຊຸມຂອງໜ່ວຍງານສະເພາະກິດຂອງຄະນະກຳ ມະການສາກົນກ່ຽວກັບອະນຸສັນຍານາໂກຢາ ເປັນຄັ້ງທີ 3 ໃນການກະກຽມການເປີດກອງປະຊຸມຄັ້ງທຳອິດຂອງບັນດາປະເທດທີ່ເປັນພາຄີຂອງອະນຸສັນຍາ. ກອງປະຊຸມຄັ້ງທີ 11 ຂອງປະເທດພາຄີຂອງສົນທິສັນຍາ ຍັງໄດ້ສະເໜີຕໍ່ກອງທຶນສິ່ງແວດລ້ອມໂລກ (ກົນໄກທາງດ້ານການເງິນສຳລັບອະນຸສັນຍາ) ໃນການສະໜັບສະໜູນອະນຸສັນຍານາໂກຢາ, ສ້າງຄວາມພຽບພ້ອມອັນຈຳເປັນໃນການສະໜັບສະໜູນທາງດ້ານການເງິນ ແລະ ເຕັກນິກ ເພື່ອບັນລຸເປົ້າໝາຍໃນການສົ່ງເສີມການໃຫ້ສັດຕະຍາບັນ ແລະ ການຈັດຕັ້ງປະຕິບັດອະນຸສັນຍາ.

ສປປ ລາວ ໄດ້ເປັນອັນດັບ 6 ຂອງບັນດາປະເທດທີ່ເປັນພາຄີຂອງສົນທິສັນຍາຊີວະນາໆພັນ ທີ່ໄດ້ມີການລົງທະບຽນເຄື່ອງມືການໃຫ້ສັດຕະຍາບັນແກ່ ອະນຸສັນຍານາໂກຢາວ່າດ້ວຍ ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດຈາກການນຳໃຊ້ຊັບພະຍາກອນພັນທຸກຳ ແບບສະເໝີພາບ ແລະ ເປັນທຳ ຂອງສົນທິສັນຍາວ່າດ້ວຍ ຄວາມຫຼາກຫຼາຍທາງດ້ານຊີ

ວິນາໆພັນ ໃນວັນທີ 26 ກັນຍາ 2012. ອະນຸສັນຍານາໂກຢາ ມີຜົນບັງຄັບໃຊ້ພາຍໃນ 90 ວັນພາຍຫຼັງຈາກທີ່ໄດ້ມີການລົງທະບຽນການໃຫ້ສັດຕະຍາບັນຈຳນວນ 50 ສະບັບ.

# ພາກທີ II

# ລະບົບກົນໄກການຄຸ້ມຄອງກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ

ຈຸດປະສົງຂອງລະບົບກົນໄກການຄຸ້ມຄອງການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ແມ່ນການສ້າງ ແລະ ພັດທະນາຂອບດຳເນີນງານດ້ານລະບຽບການ ເພື່ອການແບ່ງປັນຜົນປະໂຫຍດແບບສະເໝີພາບ ແລະ ເປັນທຳ ທີ່ໄດ້ຮັບຈາກການນຳໃຊ້ຊັບພະຍາກອນພັນທຸກຳ, ທີ່ລວມເອົາຕາມຄວາມເໝາະສົມດ້ວຍການເຂົ້າເຖິງຊັບພະຍາກອນພັນທຸກຳ ແລະ ການຖ່າຍທອດເຕັກໂນໂລຊີທີ່ເໝາະສົມ ຂອງບັນດາເຕັກໂນໂລຊີທີ່ກ່ຽວຂ້ອງ, ໂດຍເອົາໃຈໃສ່ເຖິງບັນດາສິດທັງໝົດເໜືອຊັບພະຍາກອນເຫຼົ່ານັ້ນ ແລະ ເຕັກໂນໂລຊີ ແລະ ໂດຍງົບປະມານທີ່ເໝາະສົມ ເປັນການປະກອບສ່ວນເຂົ້າໃນການອະນຸລັກຊີວະນາໆພັນ ແລະ ການນຳໃຊ້ແບບຍືນຍົງ ຂອງອົງປະກອບຂອງສິ່ງເຫຼົ່ານັ້ນ, ໂດຍຜ່ານກົດໝາຍ, ລັດຖະບັນຍັດ, ດຳລັດ, ຂໍ້ຕົກລົງຂອງລັດຖະມົນຕີ, ຄູ່ມື ແລະ ຂໍ້ແນະນຳ.

## 2.1 ການຈັດແບ່ງລະດັບຂັ້ນຂອງບັນດາເຄື່ອງມືໃນການຄຸ້ມຄອງຂອງ ສປປ ລາວ

ເຄື່ອງມືໃນການຄຸ້ມຄອງຂອງ ສປປ ລາວ ແມ່ນມີຫຼາຍຮູບແບບໃນລະດັບຕ່າງໆທີ່ແຕກຕ່າງກັນ ເຊິ່ງສາມາດຈັດລຽງໄດ້ດັ່ງຕໍ່ໄປນີ້:

1. ລະດັບທີ 1: ປະກອບດ້ວຍ ລັດຖະທຳມະນູນ;
2. ລະດັບທີ 2: ປະກອບດ້ວຍບັນດາກົດໝາຍ ທີ່ໄດ້ຮັບຮອງໂດຍສະພາແຫ່ງຊາດ;

3. ລະດັບທີ 3: ປະກອບດ້ວຍລັດຖະບັນຍັດຂອງປະທານປະເທດ ທີ່ໄດ້ຮັບຮອງໂດຍລັດຖະບານແຫ່ງ ສປປ ລາວ ແລະ ຄະນະປະຈໍາສະພາແຫ່ງຊາດ;
4. ລະດັບທີ 4: ປະກອບດ້ວຍດໍາລັດຂອງນາຍົກລັດຖະມົນຕີ ເຊິ່ງໄດ້ຮັບຮອງໂດຍລັດຖະບານ ແຫ່ງ ສປປ ລາວ;
5. ລະດັບທີ 5: ປະກອບດ້ວຍຂໍ້ຕົກລົງຂອງລັດຖະມົນຕີ ເຊິ່ງໄດ້ຮັບຮອງໂດຍກະຊວງທີ່ກ່ຽວຂ້ອງ;
6. ລະດັບທີ 6: ປະກອບດ້ວຍຄູ່ມື ແລະ ຂໍ້ແນະນໍາ ເຊິ່ງຖືວ່າບໍ່ມີລັກສະນະທາງດ້ານນິຕິກໍາ ເຊິ່ງຮັບຮອງໂດຍຄະນະກໍາມະການ, ກົມ ຫຼື ສະຖາບັນທີ່ກ່ຽວຂ້ອງ.

### 2.2 ຮ່າງກົດໝາຍວ່າດ້ວຍຊັບພະຍາກອນພັນທຸກໍາ

ຮ່າງກົດໝາຍວ່າດ້ວຍຊັບພະຍາກອນພັນທຸກໍາ (ທີ່ຮວມເອົາການເຂົ້າເຖິງພະຍາກອນພັນທຸກໍາ ແລະ ພູມປັນຍາພື້ນບ້ານອັນເປັນມູນເຊື້ອ ແລະ ການແບ່ງປັນຜົນປະໂຫຍດແບບສະເໝີພາບ ແລະ ເປັນທໍາ ຈາກການນໍາໃຊ້ບັນດາສິ່ງດັ່ງກ່າວ) ພິຈາລະນາໂດຍກອງປະຊຸມຂອງລັດຖະບານແຫ່ງ ສປປ ລາວ ແລະ ພິຈາລະນາຮັບຮອງໂດຍສະພາແຫ່ງຊາດ.

ຮ່າງກົດໝາຍວ່າດ້ວຍຊັບພະຍາກອນພັນທຸກໍາ ປະກອບຕົ້ນຕໍມີດັ່ງນີ້:

**ພາກທີ 01 ບັນດາບົດບັນຍັດເບື້ອງຕົ້ນ**

**ມາດຕາ 1 ຊື່ຂອງກົດໝາຍ**

(ກ) ກົດໝາຍວ່າດ້ວຍຊັບພະຍາກອນພັນທຸກໍາ;
(ຂ) ກົດໝາຍວ່າດ້ວຍການນໍາໃຊ້ຊັບພະຍາກອນພັນທຸກໍາ;
(ຄ) ກົດໝາຍວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸກໍາ;

(ງ) ກົດໝາຍວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດແບບສະເໝີພາບ ແລະ ເປັນທຳ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ;

(ຈ) ກົດໝາຍວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດແບບສະເໝີພາບ ແລະ ເປັນທຳ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ແລະ ພູມປັນຍາພື້ນບ້ານອັນເປັນມູນເຊື້ອ;

(ສ) ກົດໝາຍວ່າດ້ວຍການເຂົ້າເຖິງພະຍາກອນພັນທຸກຳ ແລະ ພູມປັນຍາພື້ນບ້ານອັນເປັນມູນເຊື້ອ ແລະ ການແບ່ງປັນຜົນປະໂຫຍດແບບສະເໝີພາບ ແລະ ເປັນທຳ ຈາກການນຳໃຊ້ບັນດາສິ່ງດັ່ງກ່າວ;

**ມາດຕາ 2 ຈຸດປະສົງຂອງກົດໝາຍ**

ຈຸດປະສົງຂອງກົດໝາຍວ່າດ້ວຍ ຊັບພະຍາກອນພັນທຸກຳແມ່ນເພື່ອຈັດຕັ້ງປະຕິບັດອະນຸສັນຍານາໂກຢາວ່າດ້ວຍການເຂົ້າເຖິງຊັບພະຍາກອນພັນທຸກຳ ແລະ ການແບ່ງປັນຜົນປະໂຫຍດແບບສະເໝີພາບ ແລະ ເປັນທຳຈາກການນຳໃຊ້ສິ່ງດັ່ງກ່າວ ຂອງສົນທິສັນຍາຊີວະນາໆພັນ ທີ່ ສປປ ລາວ ໄດ້ໃຫ້ສັດຕະຍາບັນໃນການເປັນປະເທດພາຄີ ວັນທີ 26 ກັນຍາ 2012.

**ມາດຕາ 3 ຄຳສັບທີ່ມີການນຳໃຊ້ໃນກົດໝາຍ**

1. "ຄວາມຫຼາກຫຼາຍດ້ານຊີວະພາບ ຫຼື ຊີວະນາໆພັນ" ໝາຍເຖິງຄວາມຫຼວງຫຼາຍພາຍໃນສິ່ງທີ່ມີຊີວິດ, ຈາກບັນດາຊັບພະຍາກອນທັງໝົດທີ່ປະກອບມີຢູ່ໃນບັນດາລະບົບນິເວດຂອງບັນຍາກາດ, ດິນ, ນ້ຳ, ທະເລ ແລະ ລະບົບອັນສັບສົນທາງດ້ານນິເວດວິທະຍາ, ຊຶ່ງສິ່ງທີ່ມີຊີວິດໄດ້ກາຍເປັນສ່ວນໜຶ່ງຂອງມັນ, ອັນໄດ້ປະກອບດ້ວຍ

ຄວາມຫຼາກຫຼາຍພາຍໃນບັນດາຊະນິດພັນ, ລະຫວ່າງບັນດາຊະນິດພັນ ແລະ ຂອງບັນດາລະບົບນິເວດ;

2. "ຊັບພະຍາກອນດ້ານຊີວະພາບ" ໝາຍເຖິງບັນດາຊັບພະຍາກອນພັນທຸກຳ, ສິ່ງທີ່ມີຊີວິດ ຫຼື ບາງສິ້ນສ່ວນຂອງມັນ, ປະຊາກອນ ຫຼື ອົງປະກອບທີ່ມີຊີວິດອື່ນໆ ຂອງລະບົບນິເວດວິທະຍາ ທີ່ໄດ້ມີຄຸນຄ່າໃນການນຳໃຊ້ ຫຼື ຄຸນຄ່າສຳລັບມະນຸດຊາດ;
3. "ເຕັກໂນໂລຊີ ຊີວະພາບ ຫຼື ຊີວະເຕັກໂນໂລຊີ" ໝາຍເຖິງທຸກໆການນຳໃຊ້ເຕັກໂນໂລຊີ ທີ່ນຳໃຊ້ບັນດາລະບົບຊີວະພາບ, ສິ່ງທີ່ມີຊີວິດ ຫຼື ອົງປະກອບຂອງມັນ, ເພື່ອສ້າງ ຫຼື ປັບດັດຜົນຜະລິດ ຫຼື ຂະບວນການທີ່ນຳໃຊ້ເປັນອັນສະເພາະພິເສດ;
4. "ປະເທດແຫຼ່ງກຳເນີດຂອງຊັບພະຍາກອນພັນທຸກຳ" ໝາຍເຖິງປະເທດ ທີ່ຊັບພະຍາກອນພັນທຸກຳເຫຼົ່ານັ້ນໄດ້ຖືກກຳເນີດເກີດຂຶ້ນພາຍໃນບັນດາເງື່ອນໄຂພື້ນທີ່ດັ່ງເດີມ;
5. "ປະເທດຕອບສະໜອງຊັບພະຍາກອນພັນທຸກຳ" ໝາຍເຖິງປະເທດທີ່ໄດ້ຕອບສະໜອງຊັບພະຍາກອນພັນທຸກຳທີ່ໄດ້ມາຈາກບັນດາຊັບພະຍາກອນຢູ່ໃນພື້ນທີ່ດັ່ງເດີມ, ຮວມທັງບັນດາປະຊາກອນທີ່ໄດ້ມາຈາກຊະນິດປ່າ ແລະ ຊະນິດການເພາະລ້ຽງ ຫຼື ໄດ້ມາຈາກບັນດາຊັບພະຍາກອນຢູ່ນອກພື້ນທີ່ດັ່ງເດີມ, ຊຶ່ງສາມາດເປັນ ຫຼື ບໍ່ເປັນແຫຼ່ງກຳເນີດໃນປະເທດນັ້ນໆ;
6. "ອົງປະກອບ" ໝາຍເຖິງ ສິ່ງທີ່ເປັນຂອງທຳມະຊາດທີ່ມີສ່ວນປະກອບທາງດ້ານຊີວະເຄມີ ທີ່ໄດ້ຈາກຖ່າຍທອດຄຸນລັກສະນະດ້ານພັນທຸກຳ ຫຼື ການປ່ຽນສະຫຼາຍຂອງຊັບພະຍາກອນຊີວະພາບ ຫຼື ພັນທຸກຳ, ສະເພາະໃນກໍລະນີທີ່ບໍ່ໄດ້ບັນຈຸບັນດາຫົວໜ່ວຍການຖ່າຍທອດພັນທຸກຳໃດໆ;

7. “ການອະນຸລັກຢູ່ນອກພື້ນທີ່ດັ່ງເດີມ” ໝາຍເຖິງການອະນຸລັກບັນດາອົງປະກອບຂອງຊັບພະຍາກອນພັນທຸກໍາ ຢູ່ພາຍນອກເງື່ອນໄຂສະພາບແວດລ້ອມເປັນຢູ່ໃນທໍາມະຊາດຂອງພວກເຂົາ;
8. “ວັດສະດຸພັນທຸກໍາ” ໝາຍເຖິງທຸກໆສິ້ນສ່ວນຂອງພືດ, ສັດ, ຈຸລິນຊີ ແລະ ຈຸດກໍາເນີດອື່ນໆ ທີ່ໄດ້ບັນຈຸບັນດາຫົວໜ່ວຍພື້ນຖານຂອງການຖ່າຍທອດລະຫັດພັນທຸກໍາ;
9. “ຊັບພະຍາກອນພັນທຸກໍາ” ໝາຍເຖິງ ທຸກໆສິ້ນສ່ວນຂອງພືດ, ສັດ, ຈຸລິນຊີ ແລະ ຈຸດກໍາເນີດອື່ນໆ ທີ່ມີຄຸນຄ່າການນໍາໃຊ້, ໂດຍໄດ້ບັນຈຸບັນດາຫົວໜ່ວຍພື້ນຖານຂອງການຖ່າຍທອດລະຫັດພັນທຸກໍາ;
10. “ການອະນຸລັກຢູ່ໃນພື້ນທີ່ດັ່ງເດີມ” ໝາຍເຖິງການອະນຸລັກ, ການບໍາລຸງຮັກສາ ແລະ ການຟື້ນຄືນຂອງປະຊາກອນຂອງບັນດາຊະນິດພັນໃນ (1) ບັນດາເງື່ອນໄຂ ທີ່ຊັບພະຍາກອນພັນທຸກໍາ ໄດ້ຖືກກໍາເນີດເກີດຂຶ້ນ ພາຍໃຕ້ລະບົບນິເວດວິທະຍາ ແລະ ສະພາບແວດລ້ອມຕາມທໍາມະຊາດ ແລະ (2) ໃນກໍລະນີທີ່ເປັນຊະນິດພັນຜ່ານຈາກປູກຝັງ ຫຼື ເພາະລ້ຽງ, ບັນດາເງື່ອນໄຂທີ່ພວກມັນໄດ້ມີການພັດທະນາຕາມຄຸນລັກສະນະພິເສດຈໍາເພາະ;
11. “ເງື່ອນໄຂຢູ່ໃນພື້ນທີ່ດັ່ງເດີມ” ໝາຍເຖິງ (1) ບັນດາເງື່ອນໄຂ ທີ່ຊັບພະຍາກອນພັນທຸກໍາ ໄດ້ຖືກກໍາເນີດເກີດຂຶ້ນພາຍໃຕ້ລະບົບນິເວດວິທະຍາ ແລະ ສະພາບແວດລ້ອມຕາມທໍາມະຊາດ ແລະ (2) ໃນກໍລະນີທີ່ເປັນຊະນິດພັນຜ່ານຈາກປູກຝັງ ຫຼື ເພາະລ້ຽງ, ບັນດາເງື່ອນໄຂທີ່ພວກມັນໄດ້ມີການພັດທະນາຕາມຄຸນລັກສະນະພິເສດຈໍາເພາະ;

12. “ການນຳໃຊ້ຊັບພະຍາກອນພັນທຸກຳ” ໝາຍເຖິງການເຮັດການຄົ້ນຄວ້າ ແລະ ພັດທະນາພັນທຸກຳ ແລະ/ຫຼື ສ່ວນປະກອບທາງດ້ານຊີວະເຄມີ ຂອງຊັບພະຍາກອນພັນທຸກຳ ໂດຍຮວມເຖິງຮູບການນຳໃຊ້ທາງດ້ານເຕັກໂນໂລຊີ ຊີວະພາບ.

**ມາດຕາ 4 ຂອບເຂດຂອງການນຳໃຊ້ກົດໝາຍ**

ຂອບຂອງການນຳໃຊ້ກົດໝາຍວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳສະບັບນີ້ຕ້ອງນຳໃຊ້ກັບ:

1. ວັດສະດຸຊີວະພາບ ທີ່ບັນຈຸໃນຊັບພະຍາກອນພັນທຸກຳ;
2. ບັນດາຊັບພະຍາກອນພັນທຸກຳ;
3. ບັນດາຜົນປະໂຫຍດທີ່ໄດ້ຮັບຈາກການນຳໃຊ້ຂອງບັນດາຊັບພະຍາກອນເຫຼົ່ານັ້ນ;
4. ບັນດາພູມປັນຍາພື້ນບ້ານອັນເປັນມູນເຊື້ອທີ່ກ່ຽວຂ້ອງກັບຊັບພະຍາກອນພັນທຸກຳ;
5. ບັນດາຜົນປະໂຫຍດຈາກການນຳໃຊ້ພູມປັນຍາດັ່ງກ່າວ.

**ພາກທີ 02 ອົງກອນຮັບຜິດຊອບແຫ່ງຊາດ ແລະ ອົງກອນຄຸ້ມຄອງ ແລະ ຕິດຕາມກວດກາ**

**ມາດຕາ 5 ອົງກອນຮັບຜິດຊອບແຫ່ງຊາດວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ**

ອົງກອນຮັບຜິດຊອບແຫ່ງຊາດວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ໄດ້ຮັບການສ້າງຕັ້ງຂຶ້ນໂດຍສອດຄ່ອງກັບລະບຽບການພາຍໃນປະເທດ ແລະ ມາດຕະການທາງດ້ານນະໂຍບາຍການບໍລິຫານຈັດການ, ເປັນຄະນະກຳ

ມະການປະສານງານທາງດ້ານວິຊາການ, ຊຶ່ງມີຄວາມຮັບຜິດຊອບໃນການພິຈາລະນາຮັບຮອງການໃຫ້ສິດໃນການເຂົ້າເຖິງຊັບພະຍາກອນພັນທຸກໍາ ແລະ ໃຫ້ຄໍາປຶກສາຫາລືແກ່ອົງກອນຄຸ້ມຄອງ ແລະ ຕິດຕາມກວດກາກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸກໍາ ໃນບັນຫາຕ່າງໆດັ່ງນີ້:

1. ຂະບວນການເຈລະຈາ;
2. ບັນດາເງື່ອນໄຂໃນການໄດ້ຮັບຂະບວນການແຈ້ງຂ່າວການອະນຸມັດສິດ ແລະ ການຈັດຕັ້ງປະຕິບັດບັນດາຂໍ້ຕົກລົງຮ່ວມກັນ;
3. ຕິດຕາມກວດກາ ແລະ ປະເມີນຜົນຂໍ້ຕົກລົງກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ;
4. ຈັດຕັ້ງປະຕິບັດ ແລະ ຊຸກຍູ້ຕິດຕາມການປະຕິບັດບັນດາຂໍ້ຕົກລົງກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ;
5. ດໍາເນີນການກ່ຽວກັບບັນດາຄໍາຮ້ອງຂໍ ແລະ ການອະນຸມັດກ່ຽວກັບບັນດາຂໍ້ຕົງລົງ;
6. ການອະນຸລັກ ແລະ ການພັດທະນາແບບຍືນຍົງ ກ່ຽວກັບບັນດາຊັບພະຍາກອນພັນທຸກໍາ ທີ່ໄດ້ອະນຸມັດໃຫ້ມີການເຂົ້າເຖິງ;
7. ກົນໄກກ່ຽວກັບການເຂົ້າຮ່ວມຢ່າງມີປະສິດທິຜົນ ຂອງບັນດາຜູ້ທີ່ມີສ່ວນຮ່ວມ ຈາກຂະແໜງການທີ່ແຕກຕ່າງ, ໂດຍຕາມຄວາມເໝາະສົມສໍາລັບບາດກ້າວຕ່າງໆ ພາຍໃນຂະບວນການຂອງການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ, ພາຍໃນບັນດາຊຸມຊົນ ແລະ ທ້ອງຖິ່ນ;
8. ກົນໄກກ່ຽວກັບການເຂົ້າຮ່ວມຢ່າງມີປະສິດທິຜົນ ຂອງບັນດາຊຸມຊົນ ແລະ ທ້ອງຖິ່ນ, ຕາມຈຸດປະສົງເພື່ອສົ່ງເສີມການມີສ່ວນໃນການ

ຕັດສິນ ແລະ ດຳເນີນການແປເປັນພາສາ ທີ່ສາມາດເຂົ້າໃຈໄດ້ ຂອງບັນດາຊຸມຊົນ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ.

**ມາດຕາ 6 ອົງກອນຄຸ້ມຄອງ ແລະ ຕິດຕາມກວດກາກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ**

ອົງກອນຄຸ້ມຄອງ ແລະ ຕິດຕາມກວດກາກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ແມ່ນປະກອບດ້ວຍ :

1. ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເປັນອົງກອນຄຸ້ມຄອງ ແລະ ຕິດຕາມກວດກາກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ໃນລະດັບສູນກາງ;
2. ໃນກໍລະນີທີ່ກະຊວງກ່ຽວຂ້ອງ ມີຄວາມຕ້ອງການຢາກສ້າງຕັ້ງອົງກອນຄຸ້ມຄອງ ແລະ ຕິດຕາມກວດກາຂອງຕົນຂຶ້ນທາງດ້ານເຕັກໂນໂລຊີ ຊີວະພາບ ແລະ ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ໃນລະດັບຂະແໜງການ ແມ່ນຕ້ອງໄດ້ປະສານງານກັບກະຊວງວິທະຍາສາດ ແລະ ເຕັກໂນໂລຊີ;
3. ບັນດາແຂວງ, ນະຄອນຫຼວງ, ນະຄອນ ແລະ ເຂດພິເສດ ໃຫ້ສ້າງຕັ້ງອົງກອນຄຸ້ມຄອງ ແລະ ຕິດຕາມກວດກາ ຂັ້ນຂອງຕົນຂຶ້ນໃນລະດັບທ້ອງຖິ່ນທາງດ້ານເຕັກໂນໂລຊີ ຊີວະພາບ ແລະ ການ ເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ໂດຍການປະສານງານກັບກະຊວງວິທະຍາສາດ ແລະ ເຕັກໂນໂລຊີ;

4. ບັນດາເມືອງ ແລະ ເທດສະບານ ສາມາດສ້າງຕັ້ງອົງກອນຄຸ້ມຄອງ ແລະ ຕິດຕາມກວດກາຂັ້ນຂອງຕົນຂຶ້ນທາງດ້ານເຕັກໂນໂລຊີ ຊີວະພາບ ແລະ ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸກໍາ ໂດຍການປະສານງານກັບອົງກອນຄຸ້ມຄອງ ແລະ ຕິດຕາມກວດກາໃນລະດັບທ້ອງຖິ່ນຂັ້ນແຂວງ, ນະຄອນຫຼວງ ແລະ ເຂດພິເສດ.

## ພາກທີ 03 ການເຂົ້າເຖິງຊັບພະຍາກອນພັນທຸກໍາ ແລະ ພູມປັນຍາພື້ນບ້ານອັນເປັນມູນເຊື້ອ

### ມາດຕາ 7 ການເຂົ້າເຖິງຊັບພະຍາກອນພັນທຸກໍາ

ໃນການຈັດຕັ້ງປະຕິບັດບັນດາສິດອໍານາດອະທິປະໄຕຂອງປະເທດຕໍ່ຊັບພະຍາກອນທໍາມະຊາດ, ການເຂົ້າເຖິງຊັບພະຍາກອນພັນທຸກໍາ ເພື່ອການນໍາໃຊ້ສິ່ງດັ່ງກ່າວ, ຕ້ອງໄດ້ບັນຈຸເປັນຂະບວນການແຈ້ງຂ່າວການອະນຸມັດສິດຂອງ ສປປ ລາວ ໂດຍອົງກອນຮັບຜິດຊອບແຫ່ງຊາດວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸກໍາ (ອົງກອນຮັບຜິດຊອບແຫ່ງຊາດ) ທີ່ໄດ້ສະໜອງຊັບພະຍາກອນເຫຼົ່ານັ້ນທີ່ ສປປ ລາວ ແມ່ນປະເທດຖິ່ນກໍາເນີດຂອງຊັບພະຍາກອນເຫຼົ່ານັ້ນ ຫຼື ປະເທດທີ່ໄດ້ມີສິດໃນຊັບພະຍາກອນພັນທຸກໍາຕາມສົນທິສັນຍາວ່າດ້ວຍ ຄວາມຫຼາກຫຼາຍທາງດ້ານຊີວະນາໆພັນ.

ອົງກອນຮັບຜິດຊອບແຫ່ງຊາດວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸກໍາ ຕ້ອງໄດ້ກໍານົດມາດຕະການອັນເໝາະສົມ, ເພື່ອບັນລຸເປົ້າໝາຍທີ່ຄໍ້າປະກັນໄວ້ວ່າການບັນຈຸເປັນຂະບວນການແຈ້ງຂ່າວການອະນຸມັດສິດ ຫຼື ການຮັບຮອງ ແລະ ການມີສ່ວນຮ່ວມຂອງບັນດາຊຸມຊົນ ແລະ ທ້ອງຖິ່ນ ແມ່ນການໄດ້ຮັບອະນຸຍາດກ່ຽວກັບການເຂົ້າເຖິງຊັບພະຍາກອນພັນທຸກໍາ ໃນເມື່ອພວກເຂົາເຈົ້າ

ໄດ້ຮັບສິດການອອກໃບອະນຸມັດການເຂົ້າເຖິງ ບັນດາຊັບພະຍາກອນເຫຼົ່ານັ້ນ.

ໃນເມື່ອມີການຮ້ອງຂໍການບັນຈຸເປັນຂະບວນການແຈ້ງຂ່າວການອະນຸມັດສິດ, ອົງກອນຮັບຜິດຊອບແຫ່ງຊາດ ວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ຕ້ອງໄດ້ກຳນົດລະບຽບການທີ່ຈຳເປັນ, ມາດຕະການຂອງການຄຸ້ມຄອງບໍລິຫານ ແລະ ດ້ານນະໂຍບາຍ:

1. ຕອບສະໜອງລະບຽບການທີ່ມີຄວາມຊັດເຈນ, ແຈ່ມແຈ້ງ ແລະ ໂປ່ງໃສ ກ່ຽວກັບບັນດາເງື່ອນໄຂລະບຽບການພາຍໃນປະເທດທີ່ຕ້ອງການໃນການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ;
2. ຕອບສະໜອງສິດ ແລະ ຂະບວນການທີ່ເປັນທຳ ແລະ ບໍ່ແບ່ງແຍກປະເພດໃນການເຂົ້າເຖິງຊັບພະຍາກອນພັນທຸກຳ;
3. ຕອບສະໜອງຂໍ້ມູນເຖິງວິທີການ ໃນການຍື່ນຂໍການບັນຈຸເປັນຂະບວນການແຈ້ງຂ່າວອະນຸມັດສິດ;
4. ຕອບສະໜອງໃນການຂຽນມະຕິຕົກລົງທີ່ແຈ່ມແຈ້ງ ແລະ ໂປ່ງໃສ ໂດຍອົງກອນຮັບຜິດຊອບແຫ່ງຊາດ, ກ່ຽວກັບມູນຄ່າທີ່ມີປະສິດທິຜົນໃນການດຳເນີນການ ແລະ ພາຍໃຕ້ຂອບເວລາຢ່າງມີເຫດມີຜົນ;
5. ຕອບສະໜອງການອອກໃບອະນຸຍາດຕາມເວລາຂອງການເຂົ້າເຖິງ ຫຼື ທຽບເທົ່າຕາມການຢັ້ງຢືນຂອງການຕົກລົງໃນການອະນຸຍາດການບັນຈຸເປັນຂະບວນການແຈ້ງຂ່າວການອະນຸມັດສິດ ແລະ ການສ້າງຕັ້ງບັນດາບົດບັນທຶກຮ່ວມກັນ ແລະ ມີການແຈ້ງການລົງໃນສູນຂໍ້ມູນຂອງການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ທີ່ກ່ຽວຂ້ອງ;

6. ໃນກໍລະນີທີ່ເປັນໄປໄດ້ ແລະ ບັນຈຸໃນລະບຽບການພາຍໃນຂອງ ສປປ ລາວ, ຕ້ອງວາງເງື່ອນໄຂ ແລະ ຫຼື ຂະບວນການໃນການໄດ້ຮັບການບັນຈຸເປັນຂະບວນການແຈ້ງຂ່າວການອະນຸມັດສິດ ຫຼື ການຮັບຮອງ ແລະ ການມີສ່ວນຮ່ວມຂອງຊຸມຊົນ ແລະ ທ້ອງຖິ່ນໃນການເຂົ້າເຖິງຊັບພະຍາກອນພັນທຸກໍາ; ແລະ
7. ໃຫ້ສ້າງຕັ້ງບັນດາລະບຽບການ ແລະ ຂະບວນການທີ່ແຈ່ມແຈ້ງເພື່ອໃຊ້ໃນການຮ້ອງຂໍ ແລະ ການສ້າງຕັ້ງບັນດາຂໍ້ຕົກລົງຮ່ວມກັນ, ຊຶ່ງຂໍ້ຕົກລົງດັ່ງກ່າວແມ່ນຕ້ອງກໍານົດໃນບົດບັນທຶກເປັນລາຍລັກອັກສອນ ແລະ ປະກອບດ້ວຍ:
    (ກ) ການແກ້ໄຂຂໍ້ຂັດແຍ່ງ;
    (ຂ) ບັນດາຂໍ້ກໍານົດກ່ຽວກັບການແບ່ງປັນຜົນປະໂຫຍດ, ຮວມທັງການພົວພັນເຖິງສິດຊັບສິນປັນຍາ;
    (ຄ) ບັນດາຂໍ້ກໍານົດກ່ຽວກັບການນໍາໃຊ້ຂອງບຸກຄົນທີ່ສາມ;
    (ງ) ບັນດາຂໍ້ກໍານົດກ່ຽວກັບການປ່ຽນແປງລາຍລະອຽດ.

**ມາດຕາ 8 ການປະກອບສ່ວນໃນການອະນຸລັກ ແລະ ການນໍາໃຊ້ແບບຍືນຍົງ**

ອົງກອນຮັບຜິດຊອບແຫ່ງຊາດວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸກໍາ ຕ້ອງໄດ້ຊຸກຍູ້ໃຫ້ຜູ້ນໍາໃຊ້ ແລະ ຜູ້ເປັນເຈົ້າຂອງ ໄດ້ແບ່ງປັນຜົນປະໂຫຍດໂດຍກົງຈາກການນໍາໃຊ້ຊັບພະຍາກອນພັນທຸກໍາ ເພື່ອເປົ້າໝາຍໃນການອະນຸລັກຄວາມຫຼາກຫຼາຍດ້ານຊີວະພາບ ແລະ ການນໍາໃຊ້ແບບຍືນຍົງຂອງສິ່ງດັ່ງກ່າວ.

**ມາດຕາ 9 ພູມປັນຍາພື້ນບ້ານອັນເປັນມູນເຊື້ອ ທີ່ກ່ຽວຂ້ອງກັບຊັບພະຍາກອນພັນທຸກໍາ**

ພາຍໃຕ້ລະບຽບການກົດໝາຍໃນ ສປປ ລາວ, ບັນດາມາດຕະການດ້ານນະໂຍບາຍ ແລະ ການບໍລິຫານຈັດການ, ອົງກອນຮັບຜິດຊອບແຫ່ງຊາດວ່າດ້ວຍ ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸກໍາ ຕ້ອງໄດ້ເອົາໃຈໃສ່ພິຈາລະນາກົດໝາຍວ່າດ້ວຍພາສີຂອງຊຸມຊົນ ແລະ ທ້ອງຖິ່ນ, ບັນດາຂະບວນການ ແລະ ອະນຸສັນຍາຂອງຊຸມຊົນ ທີ່ກ່ຽວຂ້ອງກັບຊັບພະຍາກອນດ້ານພັນທຸກໍາ.

ເພື່ອການເຂົ້າຮ່ວມຢ່າງມີປະສິທິຜົນຂອງຊຸມຊົນ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ, ອົງກອນຮັບຜິດຊອບແຫ່ງຊາດວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸກໍາຕ້ອງໄດ້ສ້າງກົນໄກໃນການແຈ້ງຂໍ້ມູນ ໃຫ້ຜູ້ນໍາໃຊ້ທີ່ມີສົນໃຈກ່ຽວກັບພູມປັນຍາພື້ນບ້ານອັນເປັນມູນເຊື້ອ ທີ່ກ່ຽວຂ້ອງກັບຊັບພະຍາກອນພັນທຸກໍາ ກ່ຽວກັບບັນດາສິດໜ້າທີ່ຂອງພວກເຂົາເຈົ້າ, ລວມເອົາບັນດາມາດຕະການທີ່ມີ ແຈ້ງຜ່ານສູນຂໍ້ມູນການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດສໍາລັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດແບບສະເໝີພາບ ແລະ ເປັນທໍາຈາກການນໍາໃຊ້ພູມປັນຍາດັ່ງກ່າວ.

ອົງກອນຮັບຜິດຊອບແຫ່ງຊາດວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸກໍາ ຕ້ອງໄດ້ໃຫ້ການສະໜັບສະໜູນ ໃນການພັດທະນາບັນດາຊຸມຊົນ ແລະ ທ້ອງຖິ່ນ, ລວມທັງເພດຍິງພາຍໃນຊຸມຊົນເຫຼົ່ານີ້, ທີ່ກ່ຽວກັບ:

1. ບັນດາອະນຸສັນຍາຂອງຊຸມຊົນ ກ່ຽວກັບການເຂົ້າເຖິງພູມປັນຍາພື້ນບ້ານອັນເປັນມູນເຊື້ອ ທີ່ກ່ຽວຂ້ອງກັບຊັບພະຍາກອນພັນທຸກໍາ ແລະ

ການແບ່ງປັນຜົນປະໂຫຍດແບບສະເໝີພາບ ແລະ ເປັນທຳຈາກ ການນຳໃຊ້ພູມປັນຍາດັ່ງກ່າວ;

2. ຫຼຸດຜ່ອນເງື່ອນໄຂໃນບັນດາຂໍ້ຕົກລົງຮ່ວມກັນ ເພື່ອຮັບປະກັນການແບ່ງປັນຜົນປະໂຫຍດແບບສະເໝີພາບ ແລະ ເປັນທຳຈາກການນຳໃຊ້ພູມປັນຍາພື້ນບ້ານອັນເປັນມູນເຊື້ອ ທີ່ກ່ຽວຂ້ອງກັບຊັບພະຍາກອນພັນທຸກຳ;
3. ສ້າງຮູບແບບຈຳລອງໃນການຮ່ວມມື ທີ່ມີການແບ່ງຜົນປະໂຫຍດຈາກການນຳໃຊ້ພູມປັນຍາພື້ນບ້ານອັນເປັນມູນເຊື້ອ ທີ່ກ່ຽວຂ້ອງກັບຊັບພະຍາກອນພັນທຸກຳ; ແລະ
4. ຕາມຄວາມເປັນໄປໄດ້ ແມ່ນບໍ່ໃຫ້ຈຳກັດເບິ່ງບັນຫາສະເພາະພຽງແຕ່ພາສີການນຳໃຊ້ ແລະ ການແລກປ່ຽນ ຊັບພະຍາກອນພັນທຸກຳ ແລະ ສິ່ງກ່ຽວຂ້ອງກັບພູມປັນຍາພື້ນບ້ານອັນເປັນມູນເຊື້ອ ຢູ່ພາຍໃນບັນດາຊຸມຊົນ ແລະ ທ້ອງຖິ່ນເທົ່ານັ້ນ, ໃຫ້ເບິ່ງພາບລວມຂອງບັນດາຈຸດປະສົງຂອງສົນທິສັນຍາວ່າດ້ວຍຄວາມຫຼາກຫຼາຍດ້ານຊີວະພາບ.

## ມາດຕາ 10 ການເຂົ້າເຖິງພູມປັນຍາພື້ນບ້ານອັນເປັນມູນເຊື້ອທີ່ກ່ຽວຂ້ອງກັບຊັບພະຍາກອນພັນທຸກຳ

ອົງກອນຮັບຜິດຊອບແຫ່ງຊາດວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ຕ້ອງດຳເນີນມາດຕະການຕາມຄວາມເໝາະສົມ, ໃນການບັນລຸເປົ້າໝາຍເພື່ອຄ້ຳປະກັນໃຫ້ພູມປັນຍາພື້ນບ້ານອັນເປັນມູນເຊື້ອ ທີ່ກ່ຽວຂ້ອງກັບຊັບພະຍາກອນພັນທຸກຳ ທີ່ໄດ້ສ້າງຂຶ້ນໂດຍຊຸມຊົນ ແລະ ທ້ອງຖິ່ນ ແມ່ນການໄດ້ເຂົ້າເຖິງກັບຂະບວນການ ແລະ ເງື່ອນໄຂໃນການໄດ້ຮັບຂໍ້ມູນ ຫຼື ການຮັບຮອງ

ແລະ ມີສ່ວນຮ່ວມຂອງບັນດາຊຸມຊົນ ແລະ ທ້ອງຖິ່ນເຫຼົ່ານີ້, ແລະ ບັນດາຂໍ້ຕົກລົງທັງສອງຝ່າຍທີ່ໄດ້ຖືກສ້າງຂຶ້ນ.

**ມາດຕາ 11 ການພິຈາລະນາບັນຫາພິເສດ**

ໃນການພັດທະນາ ແລະ ການຈັດຕັ້ງປະຕິບັດລະບຽບການ ຫຼື ບັນດາເງື່ອນໄຂຂໍ້ກຳນົດໃນການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດຂອງ ສປປ ລາວ, ອົງກອນຮັບຜິດຊອບແຫ່ງຊາດວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳຕ້ອງ:

1. ສ້າງເງື່ອນໄຂໃນການສົ່ງເສີມ ແລະ ຊຸກຍູ້ການຄົ້ນຄວ້າທີ່ມີການປະກອບສ່ວນໃນການອະນຸລັກ ແລະ ການພັດທະນາແບບຍືນຍົງຊີວະນາໆພັນ, ລວມເອົາມາດຕະການທີ່ກະທັດຮັດໃນການເຂົ້າເຖິງສຳລັບເປົ້າໝາຍການຄົ້ນຄວ້າທີ່ບໍ່ເປັນການຄ້າ, ໂດຍເອົາໃຈໃສ່ເຖິງຄວາມຕ້ອງການ ເພື່ອກ້າວໄປເຖິງການປ່ຽນແປງຜົນສຳລັບການຄົ້ນຄວ້ານັ້ນໆ. ບັນດາເງື່ອນອັນຕ່ຳສຸດສຳລັບບັນດາມາດຕະການທີ່ກະທັດຮັດມີການບັນຈຸໄວ້ວ່າ ຜູ້ນຳໃຊ້ຕ້ອງ:
   - (ກ) ບໍ່ຕັ້ງໃຈເພື່ອນຳໃຊ້ບັນດາຊັບພະຍາກອນຊີວະພາບສຳລັບການກຳນົດກິດຈະກຳເພື່ອເປົ້າໝາຍກາຍເປັນສິນຄ້າ;
   - (ຂ) ດຳເນີນການຂຽນບົດສະຫຼຸບຜົນການຄົ້ນຄວ້າອັນໃດໆກ່ຽວກັບຊັບພະຍາກອນດ້ານຊີວະພາບ ເຖິງອົງກອນຮັບຜິດຊອບແຫ່ງຊາດ;
   - (ຄ) ດຳເນີນການຮ້ອງຂໍ ການເພີ່ມທະວີການຕົວແບບທີ່ຊ້ຳຊ້ອນເພື່ອການຈັດແບ່ງຊະນິດພັນດ້ານອະນຸກົມວິທານຂອງຊະນິດເຜົ່າ ຫຼື ເລົ່າອັນດຽວກັນທີ່ໄດ້ມີການເກັບກຳ

ສຳລັບຜູ້ທີ່ຕ້ອງການລົງທຶນ ຫຼື ສະຖາບັນທີ່ກ່ຽວຂ້ອງ ຕາມທີ່ໄດ້ມີການກຳນົດໄວ້ຂອງ ອົງກອນຮັບຜິດຊອບແຫ່ງຊາດວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ;

(ງ) ການດຳເນີນການຕ້ອງບໍ່ໄດ້ໃຫ້ຕົວຢ່າງອັນໃດໆແກ່ບຸກຄົນອື່ນ ທີ່ແຕກຕ່າງຈາກສະຖາບັນທີ່ໄດ້ມີການກ່າວໄວ້ພາຍໃນວັກ (ຄ) ຂ້າງເທິງ, ໂດຍປາສະຈາກການເຫັນດີອະນຸມັດຈາກ ສປປ ລາວ;

(ຈ) ການດຳເນີນການທີ່ບໍ່ໄດ້ມີຄວາມຮັບຜິດຊອບ ຫຼື ການດຳເນີນການອັນອື່ນໆນອກເໜືອຈາກການຄົ້ນຄວ້າ ຫຼື ການພັດທະນາເພື່ອເປົ້າໝາຍການເປັນສິນຄ້າກ່ຽວກັບຊັບພະຍາກອນພັນທຸກຳອັນໃດໆ ຫຼື ສ່ວນປະກອບດ້ານຊີວະເຄມີ, ສ່ວນປະກອບ ຫຼື ບັນຈຸພາຍໃນຊັບພະຍາກອນພັນທຸກຳ ໂດຍເປັນຢ່າງໜ້ອຍສຸດທີ່ຂໍ້ຕົກລົງໃນການແບ່ງປັນຜົນປະໂຫຍດໄດ້ຖືກຈັດຕັ້ງປະຕິບັດ.

2. ເອົາໃຈໃສ່ພິຈາລະນາເຖິງໃນກໍລະນີປະຈຸບັນ ຫຼື ໃນກໍລະນີເກີດເຫດການສຸກເສີນທີ່ເກີດ ຫຼື ສ້າງຄວາມເສຍຫາຍຕໍ່ກັບສຸຂະພາບຂອງຄົນ, ສັດ ແລະ ພືດ ຊຶ່ງໄດ້ມີການກຳນົດເປັນໃນລະດັບຊາດ ຫຼື ລະດັບສາກົນ. ບັນດາອົງກອນຮັບຜິດຊອບແຫ່ງຊາດວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ຕ້ອງໄດ້ມີການກຳນົດສິ່ງຈຳເປັນໃນການພິຈາລະນາ ທີ່ຕ້ອງໄດ້ເຮັດແບບກະທັນຫັນໃນການເຂົ້າເຖິງຊັບພະຍາກອນພັນທຸກຳ ແລະ ການແບ່ງປັນຜົນປະໂຫຍດ ແບບສະເໝີພາບ ແລະ ເປັນທຳຈາກການນຳໃຊ້ບັນດາຊັບພະຍາກອນພັນທຸກຳ,

ລວມເອົາເຖິງການເຂົ້າເຖິງການແກ້ໄຂສະພາບບັນຫາ ທີ່ສາມາດຄ້ຳປະກັນໄດ້ ໃນບັນດາສິ່ງທີ່ມີຄວາມຈຳເປັນແບບສະເພາະພິເສດໃນ ສປປ ລາວ ແລະ ບັນດາປະເທດທີ່ກຳລັງພັດທະນາ.

3. ພິຈາລະນາຄວາມຈຳເປັນຂອງຊັບພະຍາກອນພັນທຸກຳ ທີ່ນຳໃຊ້ສຳລັບການເປັນອາຫານ ແລະ ການກະເສດ ແລະ ບົດບາດອັນຈຳເປັນສະເພາະຄວາມໝັ້ນຄົງດ້ານສະບຽງອາຫານ.

## ພາກທີ 04 ການແບ່ງປັນຜົນປະໂຫຍດ

### ມາດຕາ 12 ການແບ່ງປັນຜົນປະໂຫຍດແບບສະເໝີພາບ ແລະ ເປັນທຳ

ບັນດາຜົນປະໂຫຍດທີ່ໄດ້ຈາກການນຳໃຊ້ ແລະ ການຊົມໃຊ້ໃນບາງເປົ້າໝາຍ ແລະ ການຄ້າຂອງຊັບພະຍາກອນພັນທຸກຳຂອງ ສປປ ລາວ ຫຼື ຈາກຊັບພະຍາກອນພັນທຸກຳ ຕາມທີ່ໄດ້ມີການບັນຍັດໄວ້ພາຍໃນສົນທິສັນຍາຊີວະນາໆພັນ ທີ່ຕ້ອງໄດ້ຖືກແບ່ງປັນແບບສະເໝີພາບ ແລະເປັນທຳ. ການແບ່ງປັນດັ່ງກ່າວຕ້ອງເປັນໄປຕາມບັນດາຂໍ້ຕົກລົງຮ່ວມກັນ.

ພາຍໃຕ້ລະບຽບການກົດໝາຍໃນ ສປປ ລາວ, ບັນດາມາດຕະການດ້ານນະໂຍບາຍ ແລະ ການບໍລິຫານຈັດການ, ອົງກອນຮັບຜິດຊອບແຫ່ງຊາດວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ຕ້ອງໄດ້ວາງເປົ້າໝາຍໃນການຄ້ຳປະກັນຜົນປະໂຫຍດທີ່ໄດ້ຮັບຈາກການນຳໃຊ້ຊັບພະຍາກອນພັນທຸກຳ ທີ່ໄດ້ສ້າງຂຶ້ນໂດຍບັນດາຊຸມຊົນ ແລະ ທ້ອງຖິ່ນ, ພາຍໃຕ້ລະບຽບການພາຍໃນ ສປປ ລາວ ຫຼື ນະໂຍບາຍ ທີ່ກ່ຽວກັບການກຳນົດສິດຂອງຊຸມຊົນ ແລະ ທ້ອງຖິ່ນເຫຼົ່ານັ້ນຕໍ່ກັບຊັບພະຍາກອນພັນທຸກຳ, ໄດ້ຖືກແບ່ງປັນແບບສະເໝີພາບ ແລະເປັນທຳກັບຊຸມຊົນທີ່ກ່ຽວຂ້ອງ ແລະ ຕາມພື້ນຖານຂອງບັນດາຂໍ້ຕົກລົງທີ່ເຫັນພ້ອມຕ້ອງກັນ.

ບັນດາຜົນປະໂຫຍດສາມາດປະກອບດ້ວຍຜົນປະໂຫຍດທີ່ເປັນເງິນຕາ ແລະ ບໍ່ເປັນເງິນຕາ, ຍົກເປັນຕົວຢ່າງປະກອບໃນບັນຊີ ແຕ່ບໍ່ໄດ້ຈຳກັດໄວ້ພຽງແຕ່ໃນເອກະສານຊ້ອນທ້າຍຂອງອະນຸສັນຍານາໂກຢາ.

ພາຍໃຕ້ລະບຽບການກົດໝາຍໃນ ສປປ ລາວ, ບັນດາມາດຕະການດ້ານນະໂຍບາຍ ແລະ ການບໍລິຫານຈັດການ, ອົງກອນຮັບຜິດຊອບແຫ່ງຊາດວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ຕ້ອງໄດ້ວາງເປົ້າໝາຍໃນການຄ້ຳປະກັນຜົນປະໂຫຍດທີ່ໄດ້ຮັບຈາກການນຳໃຊ້ພູມປັນຍາພື້ນບ້ານອັນເປັນມູນເຊື້ອ ທີ່ກ່ຽວຂ້ອງກັບຊັບພະຍາກອນພັນທຸກຳ ແມ່ນໄດ້ຖືກແບ່ງປັນແບບສະເໝີພາບ ແລະ ເປັນທຳກັບຊຸມຊົນ ແລະ ທ້ອງຖິ່ນທີ່ມີສິດຕາມພູມປັນຍາດັ່ງກ່າວ. ການແບ່ງປັນຕ້ອງດຳເນີນ ຕາມພື້ນຖານຂອງບັນດາຂໍ້ຕົກລົງຮ່ວມກັນ.

## ພາກທີ 05 ການສ້າງຈິດສຳນຶກ ແລະ ການເຂົ້າເຖິງຂໍ້ມູນຂ່າວສານ

### ມາດຕາ 13 ການສ້າງຈິດສຳນຶກ ແລະ ການມີສ່ວນຮ່ວມ

ອົງກອນຮັບຜິດຊອບແຫ່ງຊາດວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ຕ້ອງກຳນົດມາດຕະການ ເພື່ອເສີມສ້າງຈິດສຳນຶກກ່ຽວກັບຄວາມສຳຄັນຂອງຊັບພະຍາກອນພັນທຸກຳ ແລະ ພູມປັນຍາພື້ນບ້ານອັນເປັນມູນເຊື້ອ ທີ່ກ່ຽວພັນກັບຊັບພະຍາກອນພັນທຸກຳ ແລະ ກ່ຽວພັນກັບກໍລະນີການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ. ບັນດາມາດຕະການ ປະກອບດ້ວຍ:

1. ການສົ່ງເສີມແຜນດຳເນີນງານແຫ່ງຊາດວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳສະບັບນີ້ ແລະ ລວມເອົາຈຸດປະສົງຂອງສິ່ງດັ່ງກ່າວ;
2. ການຈັດຕັ້ງກອງປະຊຸມຂອງຊຸມຊົນ ແລະ ທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ;

3. ການສ້າງຕັ້ງ ແລະ ປັບປຸງເວທີການຊ່ວຍເຫຼືອບັນດາຊຸມຊົນ ແລະ ທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ;
4. ການແຈ້ງຂ່າວໂດຍຜ່ານ ສູນຂໍ້ມູນລະດັບຊາດ;
5. ການສົ່ງເສີມລະຫັດແບບອາສາສະໝັກຂອງການເຂົ້າຮ່ວມ, ບັນດາຄູ່ມື ແລະ ປະສົບການໆນຳໃຊ້ ແລະ ຫຼື ມາດຕະຖານໃນການປຶກສາຫາລືກັບບັນດາຊຸມຊົນສ່ວນນ້ອຍ ແລະ ທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ;
6. ການສົ່ງເສີມຕາມຄວາມເໝາະສົມ ກ່ຽວກັບການແລກປ່ຽນບັນດາປະສົບການພາຍໃນປະເທດ, ພາກພື້ນ ແລະ ສາກົນ;
7. ການໃຫ້ການສຶກສາ ແລະ ການຝຶກອົບຮົມກ່ຽວກັບຂໍ້ກຳນົດຂອງການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດໃຫ້ແກ່ບັນດາຜູ້ນຳໃຊ້ ແລະ ຜູ້ເປັນເຈົ້າຂອງ ຊັບພະຍາກອນພັນທຸກຳ ແລະ ພູມປັນຍາພື້ນບ້ານອັນເປັນມູນເຊື້ອທີ່ກ່ຽວຂ້ອງກັບຊັບພະຍາກອນພັນທຸກຳ;
8. ການມີສ່ວນເຂົ້າຮ່ວມຂອງບັນດາຊຸມຊົນ ແລະ ທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດອະນຸສັນຍາສະບັບນີ້; ແລະ
9. ການເສີມສ້າງຈິດສຳນຶກຂອງບັນດາອະນຸສັນຍາຂອງຊຸມຊົນ ແລະ ຂະບວນການຂອງຊຸມຊົນ ແລະ ທ້ອງຖິ່ນ.

**ມາດຕາ 14 ສູນຂໍ້ມູນສາກົນໃນການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ**

ສູນຂໍ້ມູນການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ມີຄວາມສຳຄັນເພື່ອນຳໃຊ້ເປັນສະຖານທີ່ໃນການແບ່ງປັນຂໍ້ມູນທີ່ກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ແລະ ການຕອບສະໜອງລະບຽບ

ການທີ່ຊັດເຈນ ແລະ ດຳເນີນການເປັນຈຸດເຊື່ອມປະສານໃນບັນດາມາດຕະການທີ່ເປັນພັນທະຜູກພັນ ນຳສະເໜີໂດຍປະເທດຕ່າງໆທີ່ໄດ້ຮັບການສ້າງຂຶ້ນພາຍໃຕ້ອະນຸສັນຍານາໂກຍາ. ພ້ອມດຽວກັນນີ້, ມັນຈະເປັນບ່ອນການເຂົ້າເຖິງບັນດາຂໍ້ມູນທີ່ມີການດຳເນີນການໂດຍແຕ່ລະປະເທດທີ່ເປັນພາຄີປາສະຈາກການປົກປ້ອງຂໍ້ມູນທີ່ເປັນຄວາມລັບ. ອົງກອນຮັບຜິດຊອບແຫ່ງຊາດວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳຂອງ ສປປ ລາວ ຕ້ອງຕອບສະໜອງໃຫ້ແກ່ສູນຂໍ້ມູນກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຕາມບັນດາຂໍ້ມູນດັ່ງນີ້:

1. ລະບຽບການທາງດ້ານກົດໝາຍ, ບັນດາມາດຕະການດ້ານບໍລິຫານຄຸ້ມຄອງບໍລິຫານ ແລະ ນະໂຍບາຍທີ່ກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ;
2. ຂໍ້ມູນທີ່ກ່ຽວກັບຈຸດປະສານງານແຫ່ງຊາດ ແລະ ອົງກອນຮັບຜິດຊອບແຫ່ງຊາດ;
3. ບັນດາການອະນຸມັດ ຫຼື ການດຳເນີນການທີ່ທຽບເທົ່າໃນຂະນະດຽວກັນ ຂອງການເຂົ້າເຖິງຕາມທີ່ໄດ້ມີການຕັດສິນໃຈ ທີ່ອະນຸມັດພາຍໃນຂະບວນການແຈ້ງຂ່າວການອະນຸມັດສິດ ແລະ ການສ້າງບັນດາຂໍ້ຕົກລົງຮ່ວມກັນ;
4. ອົງກອນຮັບຜິດຊອບທີ່ກ່ຽວຂ້ອງກັບຊຸມຊົນ ແລະ ທ້ອງຖິ່ນ ແລະ ບັນດາຂໍ້ມູນທີ່ໄດ້ມີການຕັດສິນໃຈ;
5. ຮູບແບບການຕົກລົງຮ່ວມງານ;
6. ການພັດທະນາວິທີການ ແລະ ເຄື່ອງມືເພື່ອຕິດຕາມກວດກາຊັບພະຍາກອນພັນທຸກຳ;
7. ລະຫັດຂອງການເຂົ້າຮ່ວມ ແລະ ປະສົບການໃນການນຳໃຊ້.

## ພາກທີ 06 ຄວາມອາດສາມາດການຖ່າຍທອດເຕັກໂນໂລຊີ ແລະ ການຮ່ວມມື

### ມາດຕາ 15 ຄວາມອາດສາມາດ

ອົງກອນຮັບຜິດຊອບແຫ່ງຊາດຂອງ ສປປ ລາວ ວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸກໍາ ຕ້ອງໄດ້ເອົາໃຈໃສ່ໃນການຮ່ວມມືສາກົນເພື່ອເສີມສ້າງຄວາມອາດສາມາດ, ການພັດທະນາ ແລະ ການສ້າງຄວາມເຂັ້ມແຂງດ້ານຊັບພະຍາກອນມະນຸດ ແລະ ຄວາມອາດສາມາດຂອງສະຖາບັນ, ລວມທັງການຮ່ວມມືກັບບັນດາສະຖາບັນ ແລະ ອົງການຈັດຕັ້ງທີ່ມີໃນລະດັບໂລກ, ພາກພື້ນ, ອະນຸພາກພື້ນ ແລະ ລະດັບຊາດ; ໂດຍອໍານວຍການໃຫ້ມີສ່ວນຮ່ວມຂອງບັນດາພາກສ່ວນທີ່ກ່ຽວຂ້ອງ ນັບທັງບັນດາຊຸມຊົນ ແລະ ທ້ອງຖິ່ນ ແລະ ຂະແໜງການທີ່ກ່ຽວຂ້ອງ, ລວມເອົາບັນດາອົງການຈັດຕັ້ງທີ່ບໍ່ແມ່ນຂອງລັດຖະບານ ແລະ ຂະແໜງການຂອງເອກະຊົນ.

ອົງກອນຮັບຜິດຊອບແຫ່ງຊາດຂອງ ສປປ ລາວ ວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸກໍາ ຕ້ອງກໍານົດຄວາມຕ້ອງການດ້ານການເສີມສ້າງຄວາມອາດສາມາດແຫ່ງຊາດ ແລະ ບຸລິມະສິດ ທີ່ໄດ້ຜ່ານການປະເມີນທີ່ພໍພຽງຈາກຄວາມອາດສາມາດແຫ່ງຊາດ. ການດໍາເນີນໄປພ້ອມໆກັນ, ມັນຕ້ອງໄດ້ສະໜັບສະໜູນຄວາມຕ້ອງການ ແລະ ບຸລິມະສິດຂອງບັນດາຊຸມຊົນ ແລະ ທ້ອງຖິ່ນ ແລະ ບັນດາພາກສ່ວນທີ່ກ່ຽວຂ້ອງ, ຕາມຄວາມຕ້ອງການທີ່ສະເໜີໂດຍເຂົາເຈົ້າເອງ ແລະ ໃຫ້ຄວາມດຸ່ນດ່ຽງຕາມຄວາມຕ້ອງການ ແລະ ບຸລິມະສິດຂອງເພດຍິງ. ການເສີມສ້າງຄວາມອາດສາມາດ ແລະ ການພັດທະນາຄວາມອາດສາມາດ ຕ້ອງໃຫ້ການເອົາໃຈໃສ່ບັນດາຈຸດທີ່ເປັນໃຈກາງດັ່ງນີ້:

1. ຄວາມອາດສາມາດໃນການຈັດຕັ້ງປະຕິບັດ ແລະ ປະຕິບັດພັນທະທີ່ກ່ຽວກັບຂໍ້ກຳນົດຂອງອະນຸສັນຍາວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດຈາກການນຳໃຊ້ຊັບພະຍາກອນພັນທຸກຳ;
2. ຄວາມອາດສາມາດໃນການເຈລະຈາບັນດາຂໍ້ຕົກລົງຮ່ວມກັນ;
3. ຄວາມອາດສາມາດໃນການພັດທະນາ, ການຈັດຕັ້ງປະຕິບັດ ແລະ ການກວດກາລະບຽບການພາຍໃນປະເທດ, ການບໍລິຫານ ຫຼື ມາດຕະການທາງດ້ານນະໂຍບາຍກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ;
4. ຄວາມອາດສາມາດຂອງປະເທດເພື່ອພັດທະນາຄວາມເປັນໄປໄດ້ໃນການດຳເນີນການຄົ້ນຄວ້າພາຍໃນເພື່ອເປັນການສ້າງມູນຄ່າເພີ່ມໃຫ້ແກ່ແຫຼ່ງຊັບພະຍາກອນພັນທຸກຳ;
5. ການພັດທະນາດ້ານລະບຽບການ ແລະ ສະຖາບັນ;
6. ການສົ່ງເສີມໃນການເຈລະຈາແບບເທົ່າທຽມ ແລະ ເປັນທຳ, ເຊັ່ນ ຈັດການຝຶກອົບຮົມໃນການເຈລະຈາບັນດາຂໍ້ຕົກລົງຮ່ວມກັນ;
7. ຕິດຕາມ ແລະ ກວດກາການປະຕິບັດຕາມພັນທະຜູກພັນ;
8. ອຳນວຍສ້າງເຄື່ອງມືການສື່ສານທີ່ມີໃຫ້ດີທີ່ສຸດ ແລະ ລະບົບພື້ນຖານທາງດ້ານອິນເຕີເນັດ ສຳລັບບັນດາກິດ ຈະກຳທີ່ກ່ຽວຂ້ອງກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ;
9. ພັດທະນາ ແລະ ນຳໃຊ້ບັນດາວິທີການປະເມີນຜົນ;
10. ນະວັດຕະກຳຊີວະພາບທີ່ກ່ຽວພັນກັບການຄົ້ນຄວ້າ ແລະ ການສຶກສາທາງດ້ານຈັດລຽງຊະນິດພັນ;
11. ການຖ່າຍທອດເຕັກໂນໂລຊີ ແລະ ຄວາມອາດສາມາດທາງດ້ານໂຄງລ່າງພື້ນຖານ ແລະ ເຕັກໂນໂລຊີ ເພື່ອຊອກຮູ້ກ່ຽວກັບການຖ່າຍທອດເຕັກໂນໂລຊີທີ່ຍືນຍົງ;

12. ເພີ່ມຂີດຄວາມສາມາດໃນການປະກອບສ່ວນ ກ່ຽວກັບບັນດາກິດຈະກໍາດ້ານການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດຈາກການອະນຸລັກຊີວະນາໆພັນ ແລະ ການນໍາໃຊ້ແບບຍືນຍົງຂອງບັນດາສ່ວນປະກອບຕ່າງໆຂອງສິ່ງເຫຼົ່ານັ້ນ;
13. ມາດຕະການພິເສດໃນການເພີ່ມຈໍານວນຄວາມອາດສາມາດ ຂອງພາກສ່ວນທີ່ກ່ຽວຂ້ອງດ້ານການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ; ແລະ
14. ມາດຕະການພິເສດໃນການເພີ່ມຈໍານວນ ກ່ຽວກັບຄວາມອາດສາມາດຂອງບັນດາຊຸມຊົນ ແລະ ທ້ອງຖິ່ນໄປຄຽງຄູ່ກັນກັບການໃຫ້ຄວາມສໍາຄັນຕໍ່ຄວາມອາດສາມາດຂອງເພດຍິງ ພາຍໃນຊຸມຊົນເຫຼົ່ານັ້ນ ທີ່ກ່ຽວພັນກັບ ການເຂົ້າເຖິງຊັບພະຍາກອນພັນທຸກໍາ ແລະ ພູມປັນຍາພື້ນບ້ານອັນທີ່ເປັນມູນເຊື້ອ ທີ່ກ່ຽວພັນກັບຊັບພະຍາກອນພັນທຸກໍາ.

### ມາດຕາ 16 ການຖ່າຍທອດເຕັກໂນໂລຊີ

ອົງກອນຮັບຜິດຊອບແຫ່ງຊາດວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸກໍາ ຕ້ອງໄດ້ປະສານງານ ແລະ ຮ່ວມມືກັບສາກົນໃນການຄົ້ນຄວ້າວິທະຍາສາດ ແລະ ແຜນງານການພັດທະນາ, ລວມເຖິງບັນດາກິດຈະກໍາທາງດ້ານການຄົ້ນຄວ້າເຕັກໂນໂລຊີ ຊີວະພາບ ເພື່ອສົ່ງເສີມ ແລະ ຊຸກຍູ້ການເຂົ້າເຖິງເຕັກໂນໂລຊີ, ເພື່ອອໍານວຍການພັດທະນາ ແລະ ເສີມສ້າງຄວາມເຂັ້ມແຂງທີ່ມີສຽງຕອບຮັບ ແລະ ສາມາດສໍາພັດພື້ນຖານດ້ານວິທະຍາສາດ ແລະ ເຕັກໂນໂລຊີ.

### ມາດຕາ 17 ການຮ່ວມມືຂ້າມແດນ

ໃນກໍລະນີທີ່ຊັບພະຍາກອນພັນທຸກໍາຊະນິດດຽວກັນ ໄດ້ມີການຄົ້ນພົບຕາມທໍາມະຊາດ ພາຍໃຕ້ສິດອະທິປະໄຕຂອງຫຼາຍກວ່າໜຶ່ງປະເທດ, ອົງກອນຮັບຜິດຊອບແຫ່ງຊາດຂອງ ສປປ ລາວ ວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸກໍາ ຕ້ອງໄດ້ປະສານງານຕາມຄວາມເໝາະສົມກັບບັນດາຊຸມຊົນ ແລະ ທ້ອງຖິ່ນໃນແຫ່ງທີ່ພູມປັນຍາພື້ນບ້ານອັນເປັນມູນເຊື້ອຊະນິດດຽວກັນ ທີ່ກ່ຽວພັນກັບຊັບພະຍາ ກອນພັນທຸກໍາ ແມ່ນໄດ້ມີການແບ່ງປັນຜົນປະໂຫຍດກັບໜຶ່ງ ຫຼື ຫຼາຍຊຸມຊົນ ແລະ ທ້ອງຖິ່ນໃນບັນດາປະເທດທີ່ເປັນພາຄີ.

**ມາດຕາ 18 ຮູບແບບການຕົກລົງຮ່ວມງານ**

ອົງກອນຮັບຜິດຊອບແຫ່ງຊາດວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸກໍາ ຕ້ອງໄດ້ຊຸກຍູ້ຕາມຄວາມເໝາະສົມໃນການພັດທະນາ, ປັບປຸງ ແລະ ນໍາໃຊ້ບັນດາຮູບແບບຂອງການຮ່ວມງານໃນຂະແໜງການ ແລະ ລະຫວ່າງຂະແໜງເພື່ອບັນລຸບັນດາຂໍ້ຕົກລົງຮ່ວມກັນ.

**ມາດຕາ 19 ລະຫັດຂອງການເຂົ້າຮ່ວມ, ຄູ່ມື ແລະ ປະສົບການໆນໍາໃຊ້ ແລະ ຫຼື ມາດຕະຖານ**

ອົງກອນຮັບຜິດຊອບແຫ່ງຊາດວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸກໍາ ຕ້ອງໄດ້ຊຸກຍູ້ຕາມຄວາມເໝາະສົມ ໃນການພັດທະນາ, ປັບປຸງ ແລະ ນໍາໃຊ້ບັນດາລະຫັດແບບອາສາສະໝັກຂອງການເຂົ້າຮ່ວມ, ຄູ່ມື ແລະ ປະສົບການໆນໍາໃຊ້ ແລະ ມາດຕະຖານທີ່ກ່ຽວພັນກັບການເຂົ້າເຖິງ ແລະ ແບ່ງປັນຜົນປະໂຫຍດ.

**ພາກທີ 07 ການຕິດຕາມກວດກາ ແລະ ການບັງຄັບໃຊ້ກົດໝາຍ**

## ມາດຕາ 20 ການຕິດຕາມກວດກາການນຳໃຊ້ຊັບພະຍາກອນພັນທຸກຳ

ເພື່ອສະໜັບສະໜູນການປະຕິບັດສິດຜູກພັນ, ອົງກອນຮັບຜິດຊອບແຫ່ງຊາດວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດຈາກການນຳໃຊ້ຊັບພະຍາກອນພັນທຸກຳ ຕ້ອງໄດ້ກຳນົດມາດຕະການຕາມຄວາມເໝາະສົມ, ໃນການຕິດຕາມກວດກາ ແລະ ລາຍງານແບບໂປ່ງໃສກ່ຽວກັບການນຳໃຊ້ຊັບພະຍາກອນພັນທຸກຳຢູ່ ສປປ ລາວ.

1. ບັນດາມາດຕະການດັ່ງກ່າວ ປະກອບດ້ວຍການແຕ່ງຕັ້ງໜຶ່ງ ຫຼື ຫຼາຍຈຸດກວດກາ, ດັ່ງນີ້: (ກ) ການແຕ່ງຕັ້ງຫຼາຍຈຸດກວດກາຕາມຄວາມເໝາະສົມ, ເພື່ອສາມາດເກັບກຳ ຫຼື ໄດ້ຮັບຂໍ້ມູນທີ່ກ່ຽວຂ້ອງກັບຂະບວນການແຈ້ງຂ່າວການອະນຸມັດສິດ, ແຫຼ່ງຊັບພະຍາກອນພັນທຸກຳ, ການສ້າງຕັ້ງບັນດາຂໍ້ຕົກລົງຮ່ວມກັນ, ແລະ ການນຳໃຊ້ຊັບພະຍາກອນພັນທຸກຳ, ຕາມຄວາມເໝາະສົມ; (ຂ) ໂດຍຕາມຄວາມເໝາະສົມ ແລະ ຂຶ້ນກັບກັບຄຸນລັກສະນະທີ່ກ່ຽວຂ້ອງຂອງການແຕ່ງຕັ້ງຈຸດກວດກາ, ແມ່ນຮ້ອງຂໍໃຫ້ຜູ້ນຳໃຊ້ຊັບພະຍາກອນພັນທຸກຳ ຕ້ອງໄດ້ປະກອບຂໍ້ມູນສະເພາະຕາມທີ່ໄດ້ມີການກຳນົດໄວ້ໃນວັກຂ້າງເທິງນີ້ ຢູ່ຈຸດກວດກາທີ່ໄດ້ມີການແຕ່ງຕັ້ງ. ອົງກອນຮັບຜິດຊອບແຫ່ງຊາດວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ຕ້ອງໄດ້ກຳນົດຕາມຄວາມເໝາະສົມ ກ່ຽວກັບບັນດາມາດຕະການ ທີ່ມີປະສິດທິຜົນ ແລະ ຂັ້ນຕອນການດຳເນີນໃນກໍລະນີທີ່ບໍ່ໄດ້ມີການປະຕິບັດຕາມພັນທະສັນຍາ; (ຄ) ຂໍ້ມູນດັ່ງກ່າວນັ້ນ ມີການປະກອບດ້ວຍບັນດາໃບຢັ້ງຢືນທີ່ໄດ້ຮັບການຮັບຮອງຈາກສາກົນ ໃນການປະຕິບັດພັນທະສັນຍາໃນກໍລະນີເປັນໄປໄດ້, ປາສະຈາກທີ່ວ່າເພື່ອການປ້ອງກັນຂໍ້ມູນທີ່ເປັນຄວາມລັບ, ຖືກສະໜອງໃຫ້ແກ່ບັນດາອົງກອນຮັບ

ຜິດຊອບແຫ່ງຊາດທີ່ກ່ຽວຂ້ອງ, ໃຫ້ແກ່ປະເທດພາຄີທີ່ໄດ້ມີການສະໜອງເປັນຂະບວນ ການແຈ້ງຂ່າວການອະນຸມັດສິດ ແລະ ໃຫ້ແກ່ສູນຂໍ້ມູນການການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ, ຕາມຄວາມເໝາະສົມ; (ງ) ຈຸດກວດກາຕ້ອງມີປະສິດທິຜົນ ແລະ ສາມາດປະຕິບັດຕາມໜ້າທີ່ໃນການການນຳໃຊ້ບັນດາຊັບພະຍາກອນພັນທຸກຳ, ການເກັບກຳຂໍ້ມູນທີ່ກ່ຽວຂ້ອງຕາມແຕ່ລະຈຸດ, ທຸກໆຂັ້ນຕອນໃນການຄົ້ນຄວ້າ, ການພັດທະນາ, ນະວັດຕະກຳ, ການສ້າງເປັນສິນຄ້າ ແລະ ການເປັນສິນຄ້າ;

2. ອົງກອນຮັບຜິດຊອບແຫ່ງຊາດວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳຊຸກຍູ້ໃຫ້ບັນດາຜູ້ນຳໃຊ້ ແລະ ຜູ້ເປັນເຈົ້າຂອງ ຊັບພະຍາກອນພັນທຸກຳ ເພື່ອໃຫ້ໄດ້ມີບັນຈຸບັນດາບົດບັນຍັດໃນບັນດາຕົກລົງຮ່ວມກັນ ເພື່ອສາມາດແບ່ງປັນຂໍ້ມູນໃນການຈັດຕັ້ງປະຕິບັດບັນດາຂໍ້ຕົກລົງດັ່ງກ່າວ, ທີ່ລວມເອົາບັນດາເງື່ອນໄຂໃນການລາຍງານ;
3. ຊຸກຍູ້ໃຫ້ມີການນຳໃຊ້ບັນດາເຄື່ອງມື ແລະ ລະບົບການສື່ສານທີ່ມີປະສິດທິຜົນ;
4. ການອະນຸມັດ ຫຼື ບັນດາສິ່ງທີ່ມີຄຸນຄ່າເທົ່າທຽມ ຕ້ອງໄດ້ມີການແຈ້ງຜ່ານສູນຂໍ້ມູນການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ແລະ ຕ້ອງໄດ້ມີການສອດຄ່ອງກັບໃບຢັ້ງຢືນທີ່ສາກົນໄດ້ໃຫ້ການຮັບຮອງ ກ່ຽວກັບການປະຕິບັດຕາມພັນທະສັນຍາ ສອດຄ່ອງກັບອະນຸສັນຍານາໂກຢາ;
5. ໃບຢັ້ງຢືນທີ່ສາກົນໄດ້ໃຫ້ການຮັບຮອງ ກ່ຽວກັບການປະຕິບັດຕາມພັນທະສັນຍາພາຍໃນ ສປປ ລາວ ຕ້ອງໄດ້ໃຊ້ເປັນການຄ້ຳປະກັນວ່າຊັບພະຍາກອນພັນທຸກຳ ແມ່ນໄດ້ມີການຮັບຮອງທີ່ກວມເອົາບັນ

ຫາຂອງການເຂົ້າເຖິງ ແລ້ວ ທີ່ກ່ຽວພັນກັບການບັນຈຸເປັນຂະບວນການແຈ້ງຂ່າວການອະນຸມັດສິດ ແລະ ບັນດາຂໍ້ຕົກລົງຮ່ວມກັນ ແມ່ນໄດ້ຖືກສ້າງຕັ້ງຂຶ້ນແລ້ວ ຕາມທີ່ໄດ້ກຳນົດໄວ້ໂດຍລະບຽບການພາຍໃນຂອງການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຫຼື ບັນດາລະບຽບການທີ່ກ່ຽວຂ້ອງຂອງປະເທດພາຄີ ທີ່ສະໜອງຂະບວນການແຈ້ງຂ່າວການອະນຸມັດສິດ;

6. ສປປ ລາວ ຮັບຮູ້ວ່າໃບຢັ້ງຢືນທີ່ສາກົນໄດ້ໃຫ້ການຮັບຮອງກ່ຽວກັບການປະຕິບັດຕາມພັນທະສັນຍາ ໄດ້ປະກອບບັນດາຂໍ້ມູນຢ່າງຕ່ຳສຸດ ດ້ວຍສິ່ງທີ່ບໍ່ໄດ້ເປັນຄວາມລັບດັ່ງນີ້:
    (ກ) ອົງກອນທີ່ອະນຸມັດ;
    (ຂ) ວັນທີ ທີ່ອອກການອະນຸມັດ;
    (ຄ) ຜູ້ເປັນເຈົ້າຂອງ;
    (ງ) ສິ່ງທີ່ກວດສອບອັນຄົບຊຸດ ຂອງໃບຢັ້ງຢືນ;
    (ຈ) ເຖິງບຸກຄົນ ຫຼື ອົງກອນ ທີ່ໄດ້ສະໜອງຂະບວນການແຈ້ງຂ່າວການອະນຸມັດສິດ;
    (ສ) ສິ່ງທີ່ເປັນເປົ້າໝາຍ ຫຼື ຊັບພະຍາກອນພັນທຸກຳ ທີ່ໄດ້ມີການຮັບຮອງດ້ວຍໃບຢັ້ງຢືນ;
    (ຊ) ການຢັ້ງຢືນຄືນວ່າ ບັນດາຂໍ້ຕົກລົງຮ່ວມກັນ ໄດ້ຮັບການສ້າງຕັ້ງຂຶ້ນແລ້ວ;
    (ນ) ການຢັ້ງຢືນຄືນວ່າ ການບັນຈຸເປັນຂະບວນການແຈ້ງຂ່າວອະນຸມັດສິດໄດ້ມີແລ້ວ;
    (ບ) ການນຳໃຊ້ເພື່ອເປົ້າໝາຍເປັນການຄ້າ ແລະ ບໍ່ເປັນການຄ້າ;

### ມາດຕາ 21 ສິດຜູກພັນກັບບັນດາຂໍ້ຕົກລົງບັນທຶກຮ່ວມກັນ

ອົງກອນຮັບຜິດຊອບແຫ່ງຊາດວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸກໍາ ຕ້ອງຊຸກຍູ້ບັນດາຜູ້ເປັນເຈົ້າຂອງ ແລະ ຜູ້ນໍາໃຊ້ຊັບພະຍາກອນພັນທຸກໍາ ແລະ ພູມປັນຍາພື້ນບ້ານອັນເປັນມູນເຊື້ອທີ່ກ່ຽວຂ້ອງກັບຊັບພະຍາກອນພັນທຸກໍາ ເພື່ອບັນຈຸເປັນບັນດາບົດບັນຍັດຂອງຂໍ້ຕົກລົງຮ່ວມກັນ ໂດຍໃຫ້ກວມເອົາເຖິງການແກ້ໄຂຂໍ້ຂັດແຍ່ງຕາມຄວາມເໝາະສົມໄວ້ດັ່ງນີ້:

1. ຂະບວນການທາງສານ ທີ່ກ່ຽວກັບຂະບວນການແກ້ໄຂຂໍ້ຂັດແຍ່ງ;
2. ກົດໝາຍທີ່ຮອງຮັບ; ແລະ
3. ທາງເລືອກໃນການແກ້ໄຂຂໍ້ຂັດແຍ່ງເປັນຕົ້ນແມ່ນການໄກ່ເກ່ຍ ຫຼື ເປັນຕົວກາງໄກ່ເກ່ຍ.

ອົງກອນຮັບຜິດຊອບແຫ່ງຊາດວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸກໍາ ຕ້ອງໄດ້ຄໍ້າປະກັນວ່າທາງອອກໃນການແກ້ໄຂຄວາມຂັດແຍ່ງ ແມ່ນຢູ່ພາຍໃຕ້ລະບົບດ້ານກົດໝາຍຂອງ ສປປ ລາວ ທີ່ບັນຈຸໄວ້ພາຍໃນລະບຽບເງື່ອນໄຂຂອງການຕັດສິນ ໃນກໍລະນີທີ່ຂໍ້ຂັດແຍ່ງອັນເກີດຈາກບັນດາຂໍ້ຕົກລົງຮ່ວມກັນ ແລະ ຕ້ອງດໍາເນີນຕາມບັນດາມາດຕະການທີ່ມີປະສິດທິຜົນດ້ວຍຄວາມເໝາະສົມກ່ຽວກັບ:

1. ການເຂົ້າເຖິງຂະບວນການທາງສານ; ແລະ
2. ການນໍາໃຊ້ບັນດາຂະບວນການທີ່ກ່ຽວກັບການຕົກລົງຍິນຍອມຄວາມ ແລະ ຈັດຕັ້ງປະຕິບັດຕາມບັນດາການຕັດສິນສາກົນ ແລະ ການຍ້ອງຍໍຜູ້ມີຜົນງານ.

**ມາດຕາ 22 ສິດຜູກພັນກັບລະບຽບການທີ່ກ່ຽວຂ້ອງກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ**

ອົງກອນຮັບຜິດຊອບແຫ່ງຊາດວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸກໍາ ຕ້ອງດໍາເນີນຕາມຄວາມເໝາະສົມ ທາງດ້ານລະບຽບການດ້ານກົດໝາຍທີ່ມີປະສິດທິຜົນ ແລະ ຄວບຄຸມ, ມາດຕະການໃນການຄຸ້ມຄອງບໍລິຫານ ຫຼື ດ້ານນະໂຍບາຍ ເພື່ອຕອບສະໜອງໃຫ້ຊັບພະຍາກອນພັນທຸກໍາ ໄດ້ມີການນໍາໃຊ້ພາຍໃຕ້ສິດອໍານາດອະທິປະໄຕ ແມ່ນໄດ້ມີການເຂົ້າເຖິງພາຍໃຕ້ເງື່ອນໄຂທີ່ກ່ຽວຂ້ອງກັບການໄດ້ຮັບຂໍ້ມູນ ແລະ ບັນດາຂໍ້ຕົກລົງທີ່ໄດ້ຮັບການສ້າງຕັ້ງຂຶ້ນ, ຕາມລະບຽບການພາຍໃນປະເທດທີ່ກ່ຽວຂ້ອງກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຫຼື ລະບຽບການທີ່ມີຄວາມຕ້ອງການຂອງປະເທດພາຄີອື່ນໆ.

ອົງກອນຮັບຜິດຊອບແຫ່ງຊາດວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸກໍາ ຕ້ອງດໍາເນີນກິດຈະກໍາຕາມຄວາມເໝາະສົມ, ມີປະສິດທິຜົນ ແລະ ຕາມບາດກ້າວໃນການຈັດຕັ້ງປະຕິບັດລະບຽບການຂອງ ສປປ ລາວ, ບັນດາມາດຕະການທີ່ເປັນນະໂຍບາຍ ແລະ ການບໍລິຫານຈັດການ ເພື່ອບັນລຸວ່າຊັບພະຍາກອນພັນທຸກໍາໄດ້ຖືກນໍາໃຊ້ ພາຍໃນຂອບຂອງສິດອໍານາດອະທິປະໄຕແມ່ນໄດ້ມີການເຂົ້າເຖິງທີ່ກ່ຽວພັນກັບຂະບວນການແຈ້ງຂ່າວການອະນຸມັດສິດ ແລະ ບັນດາຂໍ້ຕົກລົງຮ່ວມກັນໄດ້ຖືກສ້າງຕັ້ງຂຶ້ນ ຕາມການຮ້ອງຂໍໂດຍນິຕິກໍາກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຫຼື ບັນດາເງື່ອນໄຂທີ່ເປັນລະບຽບການຂອງປະເທດພາຄີອື່ນໆ.

ອົງກອນຮັບຜິດຊອບແຫ່ງຊາດວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸກໍາ ຕ້ອງດໍາເນີນກິດຈະກໍາຕາມຄວາມເໝາະສົມ, ມີປະສິດທິຜົນ ແລະ ຕາມບາດກ້າວໃນການຄວບຄຸມເຫດການທີ່ບໍ່ໄດ້ມີການປະຕິບັດຕາມ ບັນດາມາດຕະການທີ່

ໄດ້ມີການຮັບຮອງຂອງ ສປປ ລາວ ແລະ ຕ້ອງໄດ້ມີການຮ່ວມມືໃນກໍລະນີມີການລະເມີດຢ່າງຊໍ້າຊາກ ຕໍ່ກັບລະບຽບການພາຍໃນ ແລະ ຕ່າງປະເທດທີ່ກ່ຽວຂ້ອງກັບນິຕິກຳການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຫຼື ບັນດາເງື່ອນໄຂທີ່ເປັນລະບຽບການ.

**ມາດຕາ 23 ສິດພູກພັນທີ່ກ່ຽວຂ້ອງກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ສຳລັບພູມປັນຍາພື້ນບ້ານອັນເປັນມູນເຊື້ອທີ່ກ່ຽວພັນກັບຊັບພະຍາກອນພັນທຸກຳ**

ອົງກອນຮັບຜິດຊອບແຫ່ງຊາດວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ຕ້ອງດຳເນີນກິດຈະກຳຕາມຄວາມເໝາະສົມ, ມີປະສິດທິຜົນ ແລະ ຕາມບາດກ້າວໃນການຈັດຕັ້ງປະຕິບັດລະບຽບການຂອງ ສປປ ລາວ, ບັນດາມາດຕະການທີ່ເປັນນະໂຍບາຍ ແລະ ການບໍລິຫານຈັດການ ເພື່ອບັນລຸວ່າພູມປັນຍາພື້ນບ້ານອັນເປັນມູນເຊື້ອ ທີ່ກ່ຽວຂ້ອງກັບການນຳໃຊ້ຊັບພະຍາກອນພັນທຸກຳຈາກປະເທດພາຄີອື່ນໆ ພາຍໃນຂອບຂອງສິດອຳນາດອະທິປະໄຕຂອງພວກເຂົາເຈົ້າ ແມ່ນໄດ້ມີການເຂົ້າເຖິງທີ່ສອດຄ່ອງກັບຂະບວນການແຈ້ງຂ່າວ ຫຼື ການຮັບຮອງ ແລະ ການມີສ່ວນຮ່ວມຂອງບັນດາຊຸມຊົນ ແລະທ້ອງຖິ່ນ ແລະ ບັນລຸວ່າບັນດາຂໍ້ຕົກລົງຮ່ວມກັນໄດ້ສ້າງຕັ້ງຂຶ້ນ ຕາມເງື່ອນໄຂທີ່ໄດ້ມີການກຳນົດໄວ້ພາຍໃນນິຕິກຳກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຫຼື ບັນດາເງື່ອນໄຂທີ່ເປັນລະບຽບການຂອງປະເທດພາຄີອື່ນໆໃນສະຖານທີ່ໆຊຸມຊົນ ແລະ ທ້ອງຖິ່ນໄດ້ມີການອາໄສຢູ່.

ອົງກອນຮັບຜິດຊອບແຫ່ງຊາດວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ຕ້ອງດຳເນີນກິດຈະກຳຕາມຄວາມເໝາະສົມ, ມີປະສິດທິຜົນ ແລະ ຕາມບາດກ້າວໃນການຄວບຄຸມເຫດການທີ່ບໍ່ໄດ້ມີການປະຕິບັດຕາມ ບັນດາມາດຕະການທີ່

ໄດ້ມີການຮັບຮອງຂອງ ສປປ ລາວ ແລະ ຕ້ອງໄດ້ມີການຮ່ວມມືໃນກໍລະນີມີການລະເມີດຢ່າງຊໍ້າຊາກ ຕໍ່ກັບລະບຽບການພາຍໃນ ແລະ ຕ່າງປະເທດທີ່ກ່ຽວຂ້ອງກັບນິຕິກຳການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຫຼື ບັນດາເງື່ອນໄຂທີ່ເປັນລະບຽບການ.

ພາກທີ 08 ການຍ້ອງຍໍ ແລະ ມາດຕະການລົງໂທດ

ມາດຕາ 24 ການຍ້ອງຍໍ

ມາດຕາ 25 ການລົງໂທດ

ມາດຕາ 26 ຄວາມຮັບຜິດຊອບ ແລະ ການຊົດເຊີຍຄ່າເສຍຫາຍ

ພາກທີ 09 ບັດດາມາດຕະການໃນການຈັດຕັ້ງປະຕິບັດ

ມາດຕາ 27 ການກວດສອບ

ມາດຕາ 28 ບົດບັນຍັດສຸດທ້າຍ

2.3 ແຜນດຳເນີນງານໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍຊັບພະຍາກອນພັນທຸກຳ

2.3.1 ແຜນດຳເນີນງານໃນການສ້າງ ແລະ ຮັບຮອງກົດໝາຍວ່າດ້ວຍຊັບພະຍາກອນພັນທຸກຳ

2.3.2 ແຜນດຳເນີນງານໃນການສ້າງດຳລັດນາຍົກລັດຖະມົນຕີວ່າດ້ວຍຊັບພະຍາກອນພັນທຸກຳ

2.3.3 ແຜນດຳເນີນງານໃນການສ້າງບັນດາຂໍ້ຕົກລົງລັດຖະມົນຕີວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ

2.3.4 ແຜນດຳເນີນງານໃນການສ້າງບັນຕາຄູ່ມືທາງດ້ານວິຊາການວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ

# ພາກທີ III

## ລະບົບການຄຸ້ມຄອງບໍລິຫານຈັດການກ່ຽວກັບ ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ

ພາຍໃຕ້ອະນຸສັນຍານາໂກຢາ, ບັນດາລະບົບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ແມ່ນໄດ້ອີງໃສ່ພື້ນຖານຍຸດທະສາດລວມໃນການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດໃນລະດັບປະເທດ ແລະ ພາກພື້ນ. ຍຸດທະສາດໃນການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດອັນນີ້ ຕ້ອງໄດ້ບັນລຸເປົ້າໝາຍໃນການອະນຸລັກ ແລະ ການພັດທະນາແບບຍືນຍົງຂອງຄວາມຫຼາກຫຼາຍດ້ານຊີວະພາບ ແລະ ແມ່ນພາກສ່ວນອັນໜຶ່ງຂອງຍຸດທະສາດ ແລະ ແຜນດຳເນີນງານແຫ່ງຊາດທາງດ້ານຊີວະນາໆພັນ ແລະ ເປັນການສົ່ງເສີມການແບ່ງປັນຜົນປະໂຫຍດ ແບບສະເໝີພາບ ແລະ ເປັນທຳ. ບັນດາບາດກ້າວຕ່າງໆທີ່ກ່ຽວຂ້ອງກັບຂະບວນການໄດ້ຮັບສິດໃນການເຂົ້າເຖິງຊັບພະຍາກອນພັນທຸກຳ ແລະ ການແບ່ງປັນຜົນປະໂຫຍດອາດບັນຈຸດ້ວຍບັນດາກິດຈະກຳທີ່ກ່ຽວກັບການເຂົ້າເຖິງ, ການຄົ້ນຄວ້າ ແລະ ການພັດທະນາທີ່ຕິດພັນກັບຊັບພະຍາກອນພັນທຸກຳ, ດັ່ງດຽວກັນກັບການຜະລິດເປັນສິນຄ້າ ແລະ ການນຳໃຊ້ອື່ນໆ, ໂດຍຮວມເອົາການແບ່ງປັນຜົນປະໂຫຍດ.

ເປົ້າໝາຍຂອງລະບົບການຄຸ້ມຄອງບໍລິຫານຈັດການກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ແມ່ນການສ້າງຕັ້ງ ແລະ ພັດທະນາ: ອົງກອນຮັບຜິດຊອບແຫ່ງຊາດ; ຈຸດປະສານງານແຫ່ງຊາດ ແລະ ການມີສ່ວນຮ່ວມຂອງບັນດາຜູ້ທີ່ກ່ຽວຂ້ອງ; ອົງກອນຄຸ້ມຄອງ ແລະ ຕິດຕາມກວດກາ; ຂະບວນການແຈ້ງຂ່າວການອະນຸມັດສິດ; ບັນດາຂໍ້ຕົກລົງຮ່ວມກັນ ແລະ ບົດບັນຍັດອື່ນໆທີ່

ກ່ຽວກັບອະນຸສັນຍານາໂກຍາ ແລະ ແຜນດຳເນີນງານແຫ່ງຊາດວ່າດ້ວຍ ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ.

**3.1 ອົງກອນຮັບຜິດຊອບແຫ່ງຊາດວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ**

ກົງຈັກການຈັດຕັ້ງຂອງອົງກອນຮັບຜິດຊອບແຫ່ງຊາດວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ປະກອບດ້ວຍ:

1. ປະທານໂດຍລັດຖະມົນຕີວ່າການກະຊວງວິທະຍາສາດ ແລະ ເຕັກໂນໂລຊີ;
2. ເລຂາປະຈຳການໂດຍຈຸດປະສານງານແຫ່ງຊາດ ຂອງອະນຸສັນຍານາໂກຍາວ່າດ້ວຍການເຂົ້າເຖິງຊັບພະຍາກອນພັນທຸກຳ ແລະ ການແບ່ງປັນຜົນປະໂຫຍດແບບສະເໝີພາບ ແລະ ເປັນທຳ ຈາກການນຳໃຊ້ສິ່ງດັ່ງກ່າວ ຂອງສົນທິສັນຍາຊີວະນາໆພັນ; ແລະ
3. ຄະນະປະກອບດ້ວຍບັນດາລັດຖະກອນຕຳແໜ່ງລັດບໍລິຫານປະເພດ 2 ຫຼື 3 (ຂັ້ນຫົວໜ້າກົມ ຫຼື ຮອງຫົວໜ້າກົມ) ທີ່ຖືກຄົ້ນຄວ້ານຳສະເໜີ ແລະ ແຕ່ງຕັ້ງໂດຍບັນດາກະຊວງ ແລະ ຂະແໜງການທີ່ກ່ຽວຂ້ອງ.

ອົງກອນຮັບຜິດຊອບແຫ່ງຊາດວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ທີ່ມີຄວາມຮັບຜິດຊອບໃນການພິຈາລະນາຮັບຮອງການໃຫ້ສິດໃນການເຂົ້າເຖິງຊັບພະຍາກອນພັນທຸກຳ ອາດໄດ້ແບ່ງບົດບາດຄວາມຮັບຜິດຊອບອັນນີ້ ໃຫ້ແກ່ບັນດາຂະແໜງການອື່ນໆຕາມຄວາມເໝາະສົມ. ໂດຍຮັບຮູ້ວ່າບັນດາປະ

ເທດພາຄີ ແລະ ຜູ້ມີສ່ວນກ່ຽວຂ້ອງ ທີ່ສາມາດເປັນໄດ້ທັງຜູ້ນຳໃຊ້ ແລະ ຜູ້ເປັນເຈົ້າຂອງ, ບັນຊີ ທີ່ຄວາມສົມດູນດັ່ງລຸ່ມນີ້ກ່ຽວກັບບັນດາໜ້າທີ່ ແລະ ຄວາມຮັບຜິດຊອບ, ຕາມທີ່ໄດ້ມີການພັດທະນາ ແລະ ຮັບຮອງໂດຍກອງປະຊຸມຂອງບັນດາປະເທດທີ່ເປັນພາຄີ ຂອງສົນທິສັນຍາວ່າດ້ວຍຄວາມຫຼາກຫຼາຍດ້ານຊີວະພາບ ຕາມມະຕິຕົກລົງ VI/24 ໄດ້ຕອບສະໜອງບັນດາອົງປະກອບທີ່ເປັນຈຸດໃຈກາງອັນສຳຄັນໃນການພິຈາລະນາ ໂດຍອົງກອນຮັບຜິດຊອບແຫ່ງຊາດ ໃນການພັດທະນາ ແລະ ຄຸ້ມຄອງກວດກາຕາມພາລະບົດບາດຂອງເຂົາເຈົ້າ, ອັນປະກອບມີ:

**3.1.1 ບັນດາພາກສ່ວນທີ່ກ່ຽວຂ້ອງ ທີ່ເປັນປະເທດຖິ່ນກຳເນີດຂອງຊັບພະຍາກອນພັນທຸກຳ ຫຼື ປະເທດອື່ນໆທີ່ມີຄວາມຕ້ອງການສະໜອງຊັບພະຍາກອນພັນທຸກຳທີ່ສອດຄ່ອງກັບສົນທິສັນຍາຕ້ອງໄດ້:**

1. ເປັນຜູ້ຊຸກຍູ້ໃນການທົບທວນຄືນທາງດ້ານນະໂຍບາຍ, ບັນດາມາດຕະການທາງດ້ານລະບຽບການ ແລະ ບໍລິຫານຈັດການ ເພື່ອເປັນການຄ້ຳປະກັນໃນການປະຕິບັດບັນດາພັນທະທີ່ໄດ້ກຳນົດໄວ້ພາຍໃນມາດຕາທີ 15 ຂອງສົນທິສັນຍາ;
2. ຊຸກຍູ້ການສະຫຼຸບລາຍງານກ່ຽວກັບການເຂົ້າເຖິງບັນດາການຮ້ອງຂໍຜ່ານສູນປະສານງານຂໍ້ມູນການແຈ້ງຂ່າວອະນຸມັດສິດ ແລະ ບັນດາລະບົບການລາຍງານຂອງສົນທິສັນຍາ;
3. ດຳເນີນການທີ່ເປັນການຮັບປະກັນວ່າການຄ້າ ແລະ ການນຳໃຊ້ບັນດາຊັບພະຍາກອນພັນທຸກຳ ຕ້ອງບໍ່ໄດ້ມີການຕັດແຍກຈາກການນຳໃຊ້ພູມປັນຍາທີ່ກ່ຽວຂ້ອງກັບຊັບພະຍາກອນພັນທຸກຳ;
4. ຮັບປະກັນວ່າພວກເຂົາເຈົ້າ ໄດ້ປະຕິບັດບັນດາໜ້າທີ່ ແລະ ຄວາມຮັບຜິດຊອບດ້ວຍຄວາມແຈ່ມແຈ້ງ, ບັນລຸເປົ້າໝາຍ ແລະ ບໍລິຫານໂປ່ງໃສ;

5. ຮັບປະກັນວ່າບັນດາຜູ້ທີ່ມີສ່ວນກ່ຽວຂ້ອງທັງໝົດ ຕ້ອງໄດ້ມີການພິຈາລະນາກ່ຽວກັບການປຶກປັກຮັກສາທາງດ້ານສິ່ງແວດລ້ອມຂອງບັນດາກິດຈະກຳກ່ຽວກັບການເຂົ້າເຖິງ;
6. ສ້າງຕັ້ງກົນໄກເພື່ອຄ້ຳປະກັນວ່າບັນດາການຕັດສິນທີ່ໄດ້ມີການຕົກລົງ ແມ່ນເກີດຈາກມີສ່ວນຮ່ວມກ່ຽວຂ້ອງຂອງ ບັນດາຊຸມຊົນ ແລະ ທ້ອງຖິ່ນ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ;
7. ສະໜັບສະໜູນບັນດາກົນໄກ, ຕາມຄວາມເໝາະສົມ, ເພື່ອເສີມສ້າງການມີສ່ວນຮ່ວມຂອງບັນດາຊຸມຊົນ ແລະ ທ້ອງຖິ່ນ ເພື່ອສະແດງເຈດຈຳນົງທີ່ເປັນຄວາມສົນໃຈຂອງພວກເຂົາເຈົ້າຢ່າງເຕັມປ່ຽມຢູ່ພາຍໃນຂະບວນການເຈລະຈາປຶກສາຫາລື.

### 3.1.2 ໃນການຈັດຕັ້ງປະຕິບັດບັນດາຂໍ້ຕົກລົງຮ່ວມກັນ, ບັນດາຜູ້ນຳໃຊ້ຊັບພະຍາກອນຕ້ອງ:

1. ເຮັດໃຫ້ຂະບວນການແຈ້ງຂ່າວການອະນຸມັດສິດໃນການເຂົ້າເຖິງຊັບພະຍາກອນພັນທຸກຳ ແມ່ນເປັນໄປຕາມມາດຕາທີ 15, ວັກທີ 5 ຂອງສົນທິສັນຍາ;
2. ຮັບຮູ້ບັນດາຄຸນຄ່າທາງດ້ານພາສີ, ປະເພນີ, ມູນຄ່າ ແລະ ປະສົບການທາງດ້ານພາສີຂອງບັນດາຊຸມຊົນ ແລະ ທ້ອງຖິ່ນ;
3. ຕອບສະໜອງຕໍ່ບັນດາການຮຽກຮ້ອງກ່ຽວກັບຂໍ້ມູນຂ່າວສານຈາກບັນດາຊຸມຊົນ ແລະ ທ້ອງຖິ່ນ;
4. ການນຳໃຊ້ບັນດາຊັບພະຍາກອນພັນທຸກຳ ພຽງແຕ່ເພື່ອຈຸດປະສົງໃນການຍິນຍອມ ກັບບັນດາຂໍ້ຕົກລົງ ແລະ ເງື່ອນໄຂພາຍໃຕ້ສິ່ງທີ່ໄດ້ມີການບັນລຸໄວ້;
5. ຮັບປະກັນວ່າບັນດາການນຳໃຊ້ບັນດາຊັບພະຍາກອນພັນທຸກຳ ເພື່ອຈຸດປະສົງອື່ນໆນອກຈາກສິ່ງທີ່ໄດ້ມີຂໍ້ຕົກລົງບັນລຸໄວ້, ໄດ້ຖືກປະຕິ

ບັດ ພຽງແຕ່ພາຍຫຼັງທີ່ຂະບວນການແຈ້ງຂ່າວອະນຸມັດສິດ ແລະ ບັນດາຂໍ້ຕົກລົງຮ່ວມກັນສະບັບໃໝ່ ໄດ້ມີການອະນຸຍາດ;

6. ຮັກສາຂໍ້ມູນທີ່ກ່ຽວຂ້ອງທັງໝົດ ທີ່ກ່ຽວພັນກັບບັນດາຊັບພະຍາກອນພັນທຸກຳ, ເປັນອັນສະເພາະແມ່ນການ ຂຶ້ນທະບຽນຂະບວນການແຈ້ງຂ່າວການອະນຸມັດສິດ ແລະ ຂ່າວສານທີ່ກ່ຽວຂ້ອງຖິ່ນກຳເນີດ ແລະ ການນຳໃຊ້ບັນດາຊັບພະຍາກອນພັນທຸກຳ ແລະ ຜົນປະໂຫຍດທີ່ເກີດຈາກການນຳໃຊ້ສິ່ງເຫຼົ່ານັ້ນ;

7. ເພື່ອປະຕິບັດຕາມເປົ້າໝາຍການນຳໃຊ້ບັນດາຊັບພະຍາກອນພັນທຸກຳ, ຕ້ອງເຮັດໃຫ້ເກີດການມີສ່ວນຮ່ວມຂອງບັນດາປະເທດທີ່ໄດ້ມີການສະໜອງຊັບພະຍາກອນ;

8. ໃນກໍລະນີທີ່ການສະໜອງບັນດາຊັບພະຍາກອນພັນທຸກຳ ແກ່ບັນດາພາກສ່ວນທີສາມ, ຕ້ອງໄດ້ຄະນຶງເຖິງທຸກໆຫົວຂໍ້ ແລະ ບັນດາເງື່ອນໄຂທີ່ກ່ຽວພັນກັບວັດຖຸພັນຮ້ອງຂໍ ມັນສາມາດຕອບສະໜອງໃຫ້ແກ່ພາກສ່ວນທີສາມນີ້ໄດ້ ພາຍໃນຂໍ້ມູນກ່ຽວກັບການຮ້ອງຂໍ, ຮວມທັງຂະບວນການແຈ້ງຂ່າວການອະນຸມັດສິດ ແລະ ບັນດາເງື່ອນໄຂຂອງການນຳໃຊ້ ແລະ ຕ້ອງໄດ້ບັນທຶກ ແລະ ສ້າງຖານຂໍ້ມູນກ່ຽວກັບການສະໜອງບັນດາຊັບພະຍາກອນພັນທຸກຳ ແກ່ພາກສ່ວນທີສາມ. ຫົວຂໍ້ສະເພາະພິເສດ ແລະ ບັນດາເງື່ອນໄຂຕ້ອງໄດ້ຖືກສ້າງຕັ້ງຂຶ້ນພາຍໃຕ້ຂໍ້ຕົກລົງຮ່ວມກັນ ເພື່ອອຳນວຍຄວາມສະດວກໃນການຄົ້ນຄວ້າດ້ານອະນຸກົມວິທານສຳລັບບັນດາເປົ້າໝາຍທີ່ບໍ່ໄດ້ເປັນການຄ້າ;

9. ຄ້ຳປະກັນວ່າບັນດາການແບ່ງປັນຜົນປະໂຫຍດ ແບບສະເໝີພາບ ແລະ ເປັນທຳ, ລວມເຖິງການຖ່າຍທອດເຕັກໂນໂລຊີແກ່ບັນດາປະເທດທີ່ຕອບສະໜອງຊັບພະຍາກອນ, ໄດ້ມີຄວາມສອດຄ່ອງກັບ

ມາດຕາ 16 ຂອງສົນທິສັນຍາທີ່ເກີດຈາກການຄ້າ ຫຼື ການນຳໃຊ້ບັນດາຊັບພະຍາກອນພັນທຸກຳ, ຮັບປະກັນດ້ວຍຂໍ້ຕົກລົງຮ່ວມກັນທີ່ໄດ້ມີການສ້າງຕັ້ງຂຶ້ນກັບການມີສ່ວນຮ່ວມຂອງບັນດາຊຸມຊົນ ແລະ ທ້ອງຖິ່ນ.

### 3.1.3 ບັນດາຜູ້ເປັນເຈົ້າຂອງຊັບພະຍາກອນຕ້ອງ:

1. ພຽງແຕ່ຕອບສະໜອງຊັບພະຍາກອນພັນທຸກຳ ແລະ ພູມປັນຍາພື້ນບ້ານອັນເປັນມູນເຊື້ອ ໃນເມື່ອເວລາທີ່ພວກເຂົາເຈົ້າໄດ້ຮັບສິດເພື່ອເຮັດເຊັ່ນນັ້ນ;
2. ພະຍາຍາມດຳເນີນການຕໍ່ສູ້ເພື່ອຫຼີກລ້ຽງບັນດາຂໍ້ຈຳກັດໃນການເຂົ້າເຖິງຊັບພະຍາກອນພັນທຸກຳ.

### 3.1.4 ປະເທດທີ່ມີສ່ວນກ່ຽວຂ້ອງກັບບັນດາການນຳໃຊ້ຊັບພະຍາກອນພັນທຸກຳພາຍໃຕ້ສິດອຳນາດອະທິປະໄຕ ໄດ້:

ກຳນົດລະບຽບການທີ່ຄວາມເໝາະສົມ, ບັນດາມາດຕະການດ້ານນະໂຍບາຍ ແລະ ການບໍລິຫານຈັດການ, ຕາມຄວາມເໝາະສົມ, ເພື່ອເປັນການສະໜັບສະໜູນ ການປະຕິບັດຕາມສິດພັນທະທີ່ກ່ຽວຂ້ອງກັບຂະບວນການແຈ້ງຂ່າວການອະນຸມັດສິດ ຂອງປະເທດທີ່ກ່ຽວຂ້ອງໃນການຕອບສະໜອງຊັບພະຍາກອນພັນທຸກຳ ແລະ ບັນດາຂໍ້ຕົກລົງຮ່ວມກັນກ່ຽວກັບການເຂົ້າເຖິງທີ່ໄດ້ຖືກການອະນຸມັດ. ບັນດາປະເທດເຫຼົ່ານີ້ຕ້ອງໄດ້ມີການພິຈາລະນາໃນບັນດາມາດຕະການຕໍ່ໄປນີ້ກ່ຽວກັບ:

1. ບັນດາກົນໄກເພື່ອສະໜອງຂໍ້ມູນ ແກ່ບັນດາຜູ້ນຳໃຊ້ທີ່ສາມາດຈະເປັນໄປໄດ້ ກ່ຽວກັບບັນດາຄວາມຮັບຜິດຊອບຂອງເຂົາເຈົ້າ ທີ່ກ່ຽວຂ້ອງກັບຊັບພະຍາກອນພັນທຸກຳ;

2. ບັນດາມາດຕະການເພື່ອຊຸກຍູ້ການເປີດເຜີຍຂອງ ປະເທດທີ່ເປັນແຫຼ່ງກຳເນີດຂອງ ບັນດາຊັບພະຍາກອນພັນທຸກຳ ແລະ ແຫຼ່ງກຳເນີດຂອງພູມປັນຍາພື້ນບ້ານອັນເປັນມູນເຊື້ອ, ນະວັດຕະກຳ ແລະ ຄວາມສຳນານງານຂອງບັນດາຊຸມຊົນ ແລະ ທ້ອງຖິ່ນ ໃນການຮ້ອງຂໍສິດທິຊັບສິນທາງປັນຍາ;
3. ບັນດາມາດຕະການທີ່ເປັນເປົ້າໝາຍເພື່ອການປ້ອງກັນການນຳໃຊ້ ບັນດາຊັບພະຍາກອນພັນທຸກຳ ທີ່ຖືກໄດ້ຮັບນອກຈາກຂອບຂະບວນການແຈ້ງຂ່າວການອະນຸມັດສິດ ຂອງປະເທດທີ່ມີສ່ວນໃນການຕອບສະໜອງຊັບພະຍາກອນດັ່ງກ່າວ;
4. ການຮ່ວມມືລະຫວ່າງບັນດາປະເທດທີ່ມີການສົງໄສວ່າຈະມີການລະເມີດຂອງບັນດາສັນຍາການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ;
5. ບັນດາແຜນການຍັ້ງຢືນຕາມຄວາມສະໝັກໃຈຕະຫຼອດໄປຂອງບັນດາສະຖາບັນດ້ວຍບົດບາດຂອງການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ;
6. ບັນດາມາດຕະການ ທີ່ຫ້າມປາມບັນດາການຄ້າທີ່ບໍ່ເປັນທຳ;
7. ບັນດາມາດຕະການອື່ນໆທີ່ຊຸກຍູ້ໃຫ້ບັນດາຜູ້ຊົມໃຊ້ຊັບພະຍາກອນຕ້ອງໄດ້ປະຕິບັດສິດພັນທະຕາມບົດບັນຍັດດ້ານລະບຽບການ.

### 3.2 ຈຸດປະສານງານແຫ່ງຊາດ ແລະ ການມີສ່ວນຮ່ວມຂອງຜູ້ທີ່ກ່ຽວຂ້ອງ

ອົງກອນຮັບຜິດຊອບແຫ່ງຊາດຕ້ອງໄດ້ແຕ່ງຕັ້ງ ຈຸດປະສານງານແຫ່ງຊາດໃນການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ "ຊັບພະຍາກອນພັນທຸກຳ ແລະ ຕ້ອງແຈ້ງຂໍ້ມູນທີ່ມີດັ່ງກ່າວນີ້ຜ່ານກົນໄກຂອງສູນຂໍ້ມູນຂ່າວສານ. ຈຸດປະສານງານແຫ່ງຊາດຕ້ອງໄດ້ແຈ້ງແກ່

ບັນດາຜູ້ຮ້ອງຂໍໃນການເຂົ້າເຖິງຊັບພະຍາກອນພັນທຸກຳ ກ່ຽວກັບບັນດາຂະບວນການໃນການໄດ້ຮັບ ຂະບວນການແຈ້ງຂ່າວການອະນຸມັດສິດ ແລະ ຂໍ້ຕົກລົງຮ່ວມກັນ, ລວມເຖິງການແບ່ງປັນຜົນປະໂຫຍດ ແລະ ກ່ຽວກັບອົງກອນຮັບຜິດຊອບແຫ່ງຊາດ, ບັນດາຊຸມຊົນ ແລະ ທ້ອງຖິ່ນ ແລະ ບັນດາຜູ້ທີ່ມີສ່ວນກ່ຽວຂ້ອງ ໂດຍຜ່ານກົນໄກຂອງສູນຂໍ້ມູນຂ່າວສານ.

ການມີສ່ວນຮ່ວມຂອງບັນດາຜູ້ທີ່ມີສ່ວນກ່ຽວຂ້ອງແມ່ນສິ່ງທີ່ຈຳເປັນໃນການຄ້ຳປະກັນການພັດທະນາ ແລະ ການຈັດຕັ້ງປະຕິບັດບັນດາການດຳເນີນການ ກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ. ເຖິງຢ່າງໃດກໍຕາມ, ອີງໃສ່ຄວາມຫຼາກຫຼາຍຂອງຜູ້ມີສ່ວນຮ່ວມ ແລະ ຄວາມສົນໃຈທີ່ແຕກຕ່າງຂອງພວກເຂົາເຈົ້າ, ການມີສ່ວນຮ່ວມຕາມຄວາມເໝາະສົມຂອງພວກເຂົາເຈົ້າ ສາມາດຖືກກຳນົດໄດ້ພຽງແຕ່ເປັນໄປຕາມພື້ນຖານໃນແຕ່ລະກໍລະນີ. ບັນດາຜູ້ທີ່ມີສ່ວນກ່ຽວຂ້ອງ ຕ້ອງໄດ້ຖືກປຶກສາຫາລື ແລະ ບັນດາຄວາມເຫັນຂອງພວກເຂົາເຈົ້າທີ່ຖືກນຳເຂົ້າໃນການພິຈາລະນາ ເປັນແຕ່ລະບາດກ້າວຂອງຂະບວນການ, ຊຶ່ງຮວມມີ: (1) ການກຳນົດການເຂົ້າເຖິງ, ການປຶກສາຫາລື ແລະ ການຈັດຕັ້ງປະຕິບັດບັນດາຂໍ້ຕົກລົງຮ່ວມກັນ ແລະ ໃນການແບ່ງປັນບັນດາຜົນປະໂຫຍດ; (2) ໃນການພັດທະນາກ່ຽວກັບຍຸດທະສາດແຫ່ງຊາດ, ບັນດານະໂຍບາຍ ຫຼື ລະບອບກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ.

ເພື່ອອຳນວຍຄວາມສະດວກໃນການມີສ່ວນຮ່ວມຂອງບັນດາຜູ້ທີ່ມີສ່ວນກ່ຽວຂ້ອງ, ຮວມເອົາບັນດາຊຸມຊົນ ແລະ ທ້ອງຖິ່ນ, ບັນດາການດຳເນີນການໃນປຶກສາຫາລືຕາມຄວາມເໝາະສົມເຊັ່ນ ຄະນະກຳມະການປຶກສາຫາລືລະດັບຊາດທີ່ອາດປະກອບດ້ວຍບັນດາຜູ້ຕາງໜ້າຂອງພາກສ່ວນທີ່ກ່ຽວຂ້ອງ. ການມີສ່ວນຮ່ວມຂອງບັນດາຜູ້ທີ່ກ່ຽວຂ້ອງຕ້ອງຖືກມີການສົ່ງເສີມໂດຍ:

1. ການຕອບສະໜອງຂ່າວສານ, ຕາມການມີຄວາມເຫັນແນະນຳທາງດ້ານວິທະຍາສາດ ແລະ ລະບຽບການ, ອັນໄດ້ເຮັດໃຫ້ພວກເຂົາເຈົ້າມີຄວາມສາມາດປະກອບສ່ວນໄດ້ຢ່າງມີປະສິດທິຜົນ;
2. ຕອບສະໜອງການສະໜັບສະໜູນໃນການເສີມສ້າງຄວາມອາດສາມາດ, ອັນໄດ້ເຮັດໃຫ້ພວກເຂົາເຈົ້າມີການຕໍ່ສູ້ຢ່າງດຸເດືອດ ໃນທຸກໆບາດກ້າວຂອງບັນດາການດຳເນີນກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ, ເຊັ່ນການພັດທະນາ ແລະ ການຈັດຕັ້ງປະຕິບັດຂອງບັນດາຂໍ້ຕົກລົງຮ່ວມກັນ ແລະ ບັນດາການຈັດການກ່ຽວກັບການປະສານ;
3. ບັນດາຜູ້ທີ່ມີສ່ວນເຂົ້າຮ່ວມໃນການເຂົ້າເຖິງຊັບພະຍາກອນພັນທຸກຳ ແລະ ການແບ່ງປັນຜົນປະໂຫຍດອາດຮ້ອງຂໍໃຫ້ມີການສະໜັບສະໜູນຂອງຜູ້ປະສານ ຫຼື ຜູ້ອຳນວຍຄວາມສະດວກໃນເມື່ອມີການປຶກສາຫາລືບັນດາຂໍ້ຕົກລົງຮ່ວມກັນ.

## 3.3 ອົງກອນຄຸ້ມຄອງ ແລະ ຕິດຕາມກວດກາກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ

### 3.3.1 ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເປັນອົງກອນຄຸ້ມຄອງ ແລະ ຕິດຕາມກວດກາວຽກງານການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດຈາກການນຳໃຊ້ຊັບພະຍາກອນພັນທຸກຳຂັ້ນສູນກາງ, ຜ່ານອົງກອນຮັບຜິດຊອບແຫ່ງຊາດ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ເປັນເສນາທິການ ໃຫ້ແກ່ລັດຖະບານແຫ່ງ ສປປ ລາວ ໃນການຜັນຂະຫຍາຍນະໂຍບາຍທາງດ້ານເຕັກໂນໂລຊີ ຊີວະພາບ ແລະ ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້

ຊັບພະຍາກອນພັນທຸກຳ ໃຫ້ກາຍເປັນແຜນດຳເນີນງານແຫ່ງຊາດ, ກົດໝາຍ ແລະ ລະບຽບການ, ບົດແນະນຳ ທາງດ້ານເຕັກນິກ, ແຜນການ ແລະ ໂຄງການລະອຽດ ເພື່ອການຄຸ້ມຄອງ ແລະ ຕິດຕາມກວດກາ.

2. ຈັດຕັ້ງປະຕິບັດວຽກງານການຄຸ້ມຄອງ ແລະ ຕິດຕາມກວດກາ ພ້ອມທັງລາຍງານສະພາບດ້ານການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ພາຍໃນຂອບເຂດທົ່ວປະເທດແກ່ລັດຖະບານ.
3. ເປັນໃຈກາງປະສານສົມທົບກັບບັນດາຂະແໜງການ ແລະ ອຳນາດການປົກຄອງທ້ອງຖິ່ນຂັ້ນຕ່າງໆ, ເພື່ອສຶກສາວິໄຈ ແລະ ແກ້ໄຂບັນຫາກ່ຽວພັນກັບວຽກງານການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ.
4. ແນະນຳໃຫ້ໂຄງການພັດທະນາ ແລະ ກິດຈະການຕ່າງ ໃຫ້ກະກຽມບົດລາຍງານກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ແລະ ບົດບັນຍັດອື່ນໆ.
5. ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດແຜນດຳເນີນງານແຫ່ງຊາດ, ກົດໝາຍ ແລະ ລະບຽບການ, ບົດແນະນຳທາງດ້ານເຕັກນິກ, ແຜນການ ແລະ ບັນດາກິດຈະກຳຂອງໂຄງການທີ່ກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ.
6. ອອກໃບອະນຸຍາດ, ຖອນໃບອະນຸຍາດ ຫຼື ຍົກເລີກການຈັດຕັ້ງໃດໜຶ່ງ ທີ່ດຳເນີນການບໍລິການກ່ຽວກັບເຕັກໂນໂລຊີ ຊີວະພາບ

ແລະ ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ.

7. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທີ່ມີສິດອຳນາດສັ່ງດັດແກ້, ໂຈະ, ຍົກຍ້າຍ ຫຼື ຍົກເລີກກິດຈະການໃດໜຶ່ງ ທີ່ກໍ່ໃຫ້ເກີດຜົນສະທ້ອນອັນບໍ່ດີ ຕໍ່ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ.

8. ຮັບ ແລະ ແກ້ໄຂ ຄຳສະເໜີຂອງປະຊາຊົນ ແລະ ພາກສ່ວນຕ່າງໆກ່ຽວກັບການເຂົ້າເຖິງ ແລະ ການປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ.

9. ຮຽກໂຮມກອງປະຊຸມ ແລະ ປຶກສາຫາລື ກ່ຽວກັບວຽກງານເຕັກໂນໂລຊີ ຊີວະພາບ ແລະ ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ.

10. ກໍ່ສ້າງ ແລະ ຍົກລະດັບພະນັກງານວິຊາການທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີ ຊີວະພາບ ພ້ອມທັງ ສຶກສາອົບຮົມ ແລະ ສ້າງຈິດສຳນຶກກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ໃຫ້ທຸກພາກສ່ວນຂອງສັງຄົມໃນທົ່ວປະເທດ, ໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ອຳນາດການປົກຄອງທ້ອງຖິ່ນ.

11. ຈັດຕັ້ງເຜີຍແຜ່ ສັງລວມ ແລະ ຕີລາຄາ ລະບົບຂໍ້ມູນຂ່າວສານກ່ຽວກັບເຕັກໂນໂລຊີ ຊີວະພາບ ແລະ ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ.

12. ສົ່ງເສີມການປະສານງານ ແລະ ຮ່ວມມືກັບສາກົນໃນຂົງເຂດເຕັກໂນໂລຊີ ຊີວະພາບ ແລະ ວຽກງານການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ.

13. ປະຕິບັດສິດ ແລະ ໜ້າທີ່ອື່ນໆກ່ຽວກັບວຽກງານເຕັກໂນໂລຊີ ຊີວະພາບ ແລະ ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ຕາມການມອບໝາຍ ຂອງລັດຖະບານ ຫຼື ຕາມລະບຽບການ ແລະ ກົດໝາຍທີ່ໄດ້ກຳນົດໄວ້.

### 3.3.2 ຂະແໜງການຄຸ້ມຄອງ ແລະ ຕິດຕາມກວດກາຂອງກະຊວງ

ກະຊວງທີ່ເຫັນວ່າມີຄວາມຈຳເປັນຕ້ອງການສ້າງຕັ້ງຂະແໜງການ ຄຸ້ມຄອງ ແລະ ຕິດຕາມກວດກາດ້ານເຕັກໂນໂລຊີ ຊີວະພາບ ແລະ ການ ເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນ ພັນທຸກຳຂອງຕົນຂຶ້ນ ໃຫ້ປະສານສົມທົບກັບກະຊວງວິທະຍາສາດ ແລະ ເຕັກໂນໂລຊີ. ຂະແໜງການຄຸ້ມຄອງ ແລະ ຕິດຕາມກວດກາຂອງກະ ຊວງມີສິດ ແລະ ໜ້າທີ່ເຄື່ອນໄຫວວຽກງານພາຍໃນຂະແໜງການຂອງຕົນ ດັ່ງນີ້:

1. ສ້າງ ແລະ ຈັດຕັ້ງປະຕິບັດ ແຜນການ ແລະ ລະບຽບການກ່ຽວກັບ ເຕັກໂນໂລຊີ ຊີວະພາບ ແລະ ການເຂົ້າເຖິງ ແລະ ການແບ່ງປັນ ຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ທີ່ພົວພັນ ກັບຂະແໜງການຂອງຕົນ, ໂດຍອີງໃສ່ແຜນການ ແລະ ລະບຽບ ການລວມທີ່ກະຊວງວິທະຍາສາດ ແລະ ເຕັກໂນໂລຊີວາງອອກ;
2. ສຶກສາ ວິໄຈ ແລະ ແກ້ໄຂບັນຫາ ກ່ຽວພັນກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນ ທຸກຳ ທີ່ຕິດພັນກັບຂະແໜງການຂອງຕົນ;
3. ຕິດຕາມກວດກາ ການຈັດຕັ້ງປະຕິບັດ ລະບຽບກົດໝາຍ, ດຳລັດ, ຂໍ້ກຳນົດ ແລະ ກົດລະບຽບຕ່າງໆ ທີ່ພົວພັນກັບຂະແໜງການຂອງ

ຕົນທາງດ້ານການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ;

4. ຮັບ ແລະ ຄົ້ນຄວ້າ ຄຳສະເໜີຂອງປະຊາຊົນ ແລະ ພາກສ່ວນຕ່າງໆ ທີ່ພົວພັນກັບຂະແໜງການຂອງຕົນທາງດ້ານການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ແລະ ນຳສະເໜີໃຫ້ຄະນະກຳມະການແຫ່ງຊາດພິຈາລະນາແກ້ໄຂ;
5. ລາຍງານ, ເຂົ້າຮ່ວມປຶກສາຫາລື ແລະ ແລກປ່ຽນປະສົບການທາງດ້ານວິທະຍາສາດ ເຕັກໂນໂລຊີ ຊີວະພາບກັບກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ແລະ ພາກສ່ວນທີ່ກ່ຽວຂ້ອງພາຍໃນຂະແໜງການຂອງຕົນ ເພື່ອແກ້ໄຂບັນຫາການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ;
6. ກໍ່ສ້າງ ແລະ ຍົກລະດັບພະນັກງານວິຊາການ ທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີ ຊີວະພາບ, ສຶກສາອົບຮົມ ແລະ ສ້າງຈິດສຳນຶກ ກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ໃຫ້ແກ່ປະຊາຊົນ ແລະ ພາກສ່ວນຕ່າງໆ;
7. ເກັບກຳ ສັງລວມ ຄົ້ນຄວ້າ ແລະ ເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ;
8. ສົ່ງເສີມການປະສານງານ ແລະ ຮ່ວມມືກັບສາກົນໃນຂົງເຂດເຕັກໂນໂລຊີ ຊີວະພາບ ແລະ ວຽກງານການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ທີ່ກ່ຽວພັນກັບຂະແໜງການຂອງຕົນ;

9. ປະຕິບັດສິດ ແລະ ໜ້າທີ່ອື່ນໆກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ຕາມລະບຽບການ ແລະ ກົດໝາຍທີ່ໄດ້ກຳນົດໄວ້.

### 3.3.3 ຂະແໜງຄຸ້ມຄອງ ແລະ ຕິດຕາມກວດກາ ຂອງແຂວງ, ນະຄອນຫຼວງ, ນະຄອນ ແລະ ເຂດພິເສດ

ແຂວງ, ນະຄອນຫຼວງ, ນະຄອນ ແລະ ເຂດພິເສດ ສາມາດຈັດຕັ້ງໜ່ວຍງານຄຸ້ມຄອງ ແລະ ຕິດຕາມກວດກາ ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳຂອງຕົນຂຶ້ນ, ໂດຍປະສານສົມທົບກັບ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ. ໜ່ວຍງານຄຸ້ມຄອງ ແລະ ຕິດຕາມກວດກາ ຂອງແຂວງ, ນະຄອນຫຼວງ, ນະຄອນ ແລະ ເຂດພິເສດ ມີສິດ ແລະ ໜ້າທີ່ເຄື່ອນໄຫວວຽກງານພາຍໃນທ້ອງຖິ່ນຂອງຕົນ ດັ່ງນີ້:

1. ສ້າງ ແລະ ຈັດຕັ້ງປະຕິບັດ ແຜນການ ແລະ ລະບຽບການກ່ຽວກັບເຕັກໂນໂລຊີ ຊີວະພາບ ແລະ ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ທີ່ພົວພັນກັບ ແຂວງ ນະຄອນຫຼວງ, ນະຄອນ ແລະ ເຂດພິເສດຂອງຕົນ, ໂດຍອີງໃສ່ແຜນການ ແລະ ລະບຽບການລວມທີ່ກະຊວງວິທະຍາສາດ ແລະ ເຕັກໂນໂລຊີວາງອອກ;
2. ສຶກສາ ວິໄຈ ແລະ ແກ້ໄຂບັນຫາກ່ຽວພັນກັບການເຂົ້າເຖິງ ແລະການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ທີ່ຕິດພັນກັບທ້ອງຖິ່ນຂອງຕົນ;
3. ຕິດຕາມກວດກາ ການຈັດຕັ້ງປະຕິບັດ ລະບຽບກົດໝາຍ, ດຳລັດ, ຂໍ້ກຳນົດ ແລະ ກົດລະບຽບຕ່າງໆ ທີ່ພົວພັນກັບຂະແໜງການທ້ອງ

ຖິ່ນຂອງຕົນທາງດ້ານການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ;

4. ຮັບ ແລະ ຄົ້ນຄວ້າ ຄຳສະເໜີຂອງປະຊາຊົນ ແລະ ພາກສ່ວນຕ່າງໆ ທີ່ພົວພັນກັບຂະແໜງການທ້ອງຖິ່ນຂອງຕົນທາງດ້ານການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ແລະ ນຳສະເໜີໃຫ້ກະຊວງວິທະຍາສາດ ແລະ ເຕັກໂນໂລຊີພິຈາລະນາແກ້ໄຂ;
5. ລາຍງານ, ເຂົ້າຮ່ວມປຶກສາຫາລື ແລະ ແລກປ່ຽນປະສົບການ ທາງດ້ານວິທະຍາສາດເຕັກໂນໂລຊີ ຊີວະພາບກັບ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ແລະ ພາກສ່ວນທີ່ກ່ຽວຂ້ອງ ພາຍໃນຂະແໜງການທ້ອງຖິ່ນຂອງຕົນ ເພື່ອແກ້ໄຂບັນຫາການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ;
6. ກໍ່ສ້າງ ແລະ ຍົກລະດັບພະນັກງານວິຊາການ ທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີ ຊີວະພາບ, ສຶກສາອົບຮົມ ແລະ ສ້າງຈິດສຳນຶກ ກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ໃຫ້ແກ່ປະຊາຊົນ ແລະ ພາກສ່ວນຕ່າງໆ;
7. ເກັບກຳ ສັງລວມ ຄົ້ນຄວ້າ ແລະ ເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ;
8. ສົ່ງເສີມການປະສານງານ ແລະ ຮ່ວມມືກັບສາກົນໃນຂົງເຂດເຕັກໂນໂລຊີ ຊີວະພາບ ແລະ ວຽກງານການເຂົ້າເຖິງ ແລະ ການແບ່ງ

ປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ທີ່ກ່ຽວພັນກັບພະແນກການຂອງຕົນ;

9. ປະຕິບັດສິດ ແລະ ຫນ້າທີ່ອື່ນໆກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ຕາມການມອບໝາຍຂອງເຈົ້າແຂວງ ເຈົ້າຄອງນະຄອນຫຼວງ ແລະ ຫົວໜ້າເຂດພິເສດ ຫຼື ຕາມລະບຽບກົດໝາຍທີ່ໄດ້ກຳນົດໄວ້.

### 3.3.4 ຂະແໜງຄຸ້ມຄອງ ແລະ ຕິດຕາມກວດກາຂັ້ນເມືອງ ແລະ ເທດສະບານ

ເມືອງ ແລະ ເທດສະບານ ສາມາດຈັດຕັ້ງໜ່ວຍງານຄຸ້ມຄອງ ແລະ ຕິດຕາມກວດກາ ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນທາງດ້ານພັນທຸກຳຂອງຕົນຂຶ້ນ, ໂດຍປະສານສົມທົບກັບ ໜ່ວຍງານຄຸ້ມ ແລະ ຕິດຕາມກວດກາ ຂອງແຂວງ, ນະຄອນຫຼວງ, ນະຄອນ ແລະ ເຂດພິເສດ ບ່ອນທີ່ຕົນຂຶ້ນກັບໜ່ວຍງານຄຸ້ມຄອງ ແລະ ຕິດຕາມກວດກາເມືອງ ແລະ ເທດສະບານ ມີສິດ ແລະ ໜ້າທີ່ເຄື່ອນໄຫວວຽກງານພາຍໃນເມືອງຂອງຕົນ ດັ່ງນີ້:

1. ສ້າງ ແລະ ຈັດຕັ້ງປະຕິບັດແຜນການ ແລະ ລະບຽບການກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນທາງດ້ານພັນທຸກຳ ພາຍໃນເມືອງ ແລະ ເທດສະບານຂອງຕົນ ໂດຍອີງໃສ່ແຜນການ ແລະ ລະບຽບການຂອງແຂວງ, ນະຄອນຫຼວງ, ນະຄອນ ແລະ ເຂດພິເສດ ທີ່ຕົນຂຶ້ນກັບ;
2. ສຶກສາ ວິໄຈ ແລະ ແກ້ໄຂບັນຫາກ່ຽວພັນກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ໃນເມືອງ ແລະ ເທດສະບານຂອງຕົນ;

3. ຕິດຕາມກວດກາ ການຈັດຕັ້ງປະຕິບັດ ລະບຽບກົດໝາຍ, ດຳລັດ, ຂໍ້ກຳນົດ ແລະ ກົດລະບຽບຕ່າງໆ ທີ່ກ່ຽວພັນກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ;
4. ຮັບ ແລະ ຄົ້ນຄວ້າ ຄຳສະເໜີຂອງປະຊາຊົນ ແລະ ພາກສ່ວນຕ່າງໆ ກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ແລະ ນຳສະເໜີໃຫ້ຂັ້ນສູນກາງພິຈາລະນາແກ້ໄຂ;
5. ລາຍງານການເຂົ້າຮ່ວມປຶກສາຫາລື ແລະ ແລກປ່ຽນປະສົບການດ້ານເຕັກໂນໂລຊີ ຊີວະພາບກັບໜ່ວຍງານຄຸ້ມຄອງ ແລະ ກວດກາແຂວງ, ນະຄອນຫຼວງ, ນະຄອນ ແລະ ເຂດພິເສດ, ອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການທີ່ກ່ຽວຂ້ອງໃນເມືອງ ແລະ ເທດສະບານຂອງຕົນ ເພື່ອແກ້ໄຂບັນຫາການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ;
6. ສຶກສາອົບຮົມ ແລະ ສ້າງຈິດສຳນຶກຄວາມຮັບຮູ້ ກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ໃຫ້ແກ່ປະຊາຊົນ ແລະ ພາກສ່ວນຕ່າງໆ ພາຍໃນເມືອງ ແລະ ເທດສະບານຂອງຕົນ;
7. ເກັບກຳ ສັງລວມ ຄົ້ນຄວ້າ ແລະ ເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບການ “ເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ;
8. ປະຕິບັດສິດ ແລະ ໜ້າທີ່ອື່ນໆກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບ ພະຍາກອນພັນທຸກຳ ຕາມການມອບໝາຍຂອງເຈົ້າເມືອງ, ຫົວໜ້າເທດສະບານ, ໜ່ວຍ

ງານຄຸ້ມຄອງ ແລະ ກວດກາ ແຂວງ ນະຄອນ ຫຼື ຕາມລະບຽບກົດໝາຍທີ່ໄດ້ກຳນົດໄວ້.

## 3.4 ຂະບວນການແຈ້ງຂ່າວການອະນຸມັດສິດ

ຕາມທີ່ໄດ້ກຳນົດໄວ້ໃນມາດຕາທີ 15 ຂອງສົນທິສັນຍາວ່າດ້ວຍຄວາມຫຼາກຫຼາຍທາງດ້ານຊີວະພາບ, ທີ່ຮັບຮອງສິດອຳນາດອະທິປະໄຕຂອງບັນດາປະເທດ ເໜືອບັນດາຊັບພະຍາກອນທາງດ້ານທຳມະຊາດຂອງເຂົາເຈົ້າ, ແຕ່ລະປະເທດພາຄີພາຍໃຕ້ສົນທິສັນຍາ ມີພັນທະໃນການສ້າງບັນດາສິ່ງອຳນວຍຄວາມສະດວກໃນການເຂົ້າເຖິງຊັບພະຍາກອນພັນທຸກຳທີ່ບັນດາການນຳໃຊ້ຕ້ອງໄດ້ຄຳນຶງເຖິງບັນຫາທາງດ້ານສິ່ງແວດລ້ອມໂດຍບັນດາປະເທດພາຄີອື່ນທີ່ກ່ຽວຂ້ອງ ແລະ ການແບ່ງປັນບັນດາຜົນປະໂຫຍດແບບສະເໝີພາບ ແລະ ເປັນທຳຈາກການນຳໃຊ້ສິ່ງເຫຼົ່ານັ້ນ. ໂດຍສອດຄ່ອງກັບມາດຕາທີ 15, ວັກທີ 5 ຂອງສົນທິສັນຍາວ່າດ້ວຍຄວາມຫຼາກຫຼາຍດ້ານຊີວະພາບ, ການເຂົ້າເຖິງບັນດາຊັບພະຍາກອນພັນທຸກຳຕ້ອງເປັນຫົວເລື່ອງທີ່ກ່ຽວກັບຂະບວນການແຈ້ງຂ່າວການອະນຸມັດສິດຂອງບັນດາປະເທດພາຄີທີ່ກ່ຽວຂ້ອງໃນການຕອບສະໜອງຊັບພະຍາກອນດັ່ງກ່າວ ໂດຍເປັນຢ່າງໜ້ອຍຖືກກຳນົດດ້ວຍປະເທດພາຄີນັ້ນ. ໃນການຈັດຕັ້ງປະຕິບັດອະນຸສັນຍານາໂກຍາຂອງ ສປປ ລາວ ແມ່ນຕ້ອງໄດ້ບັນລຸສິ່ງເຫຼົ່ານີ້ ແລະ ໃນການດຳເນີນການຕ້ອງໄດ້ຄຳນຶງເຖິງບັນດາຫຼັກການ ແລະ ຂະບວນການດັ່ງນີ້:

### 3.4.1 ຫຼັກການພື້ນຖານຂອງຂະບວນການແຈ້ງຂ່າວການອະນຸມັດສິດ

ຫຼັກການພື້ນຖານຂອງຂະບວນການແຈ້ງຂ່າວການອະນຸມັດສິດຕ້ອງໄດ້ປະກອບດ້ວຍ:

1. ລະບຽບການທີ່ຊັດເຈນ ແລະ ແຈ່ມແຈ້ງ;

2. ການເຂົ້າເຖິງຊັບພະຍາກອນພັນທຸກຳ ຕ້ອງຖືກອຳນວຍຄວາມສະດວກດ້ວຍການໃຊ້ຈ່າຍທີ່ໜ້ອຍສຸດ;
3. ບັນດາຂໍ້ກຳນົດທີ່ຮັດກຸມທາງດ້ານຊັບພະຍາກອນພັນທຸກຳຕ້ອງມີຄວາມໂປ່ງໃສ ໂດຍອີງໃສ່ບັນດາກົດໝາຍພື້ນຖານ ແລະ ບໍ່ໄດ້ຂັດກັບບັນດາຈຸດປະສົງຂອງສົນທິສັນຍາ;
4. ການຍິນຍອມຂອງອົງກອນຮັບຜິດຊອບແຫ່ງຊາດທີ່ກ່ຽວຂ້ອງການເຂົ້າເຖິງ ແລະ ແບ່ງປັນຜົນປະໂຫຍດ ໃນປະເທດທີ່ສະໜອງຊັບພະຍາກອນພັນທຸກຳ ທີ່ຖືກໄດ້ຮັບ;
5. ການຍິນຍອມຂອງບັນດາຜູ້ທີ່ມີສ່ວນກ່ຽວຂ້ອງ ເຊັ່ນບັນດາຊຸມຊົນ ແລະ ທ້ອງຖິ່ນ, ຕາມຄວາມເໝາະສົມຂອງສະຖານະການ ແລະ ສອດຄ່ອງກັບກົດໝາຍພາຍໃນປະເທດ ຕ້ອງຖືກໄດ້ຮັບເຊັ່ນດຽວກັນ.

### 3.4.2 ບັນດາອົງປະກອບຂອງລະບົບ ຂະບວນການແຈ້ງຂ່າວການອະນຸມັດສິດ

ບັນດາອົງປະກອບຂອງລະບົບ ຂະບວນການແຈ້ງຂ່າວການອະນຸມັດສິດ ໄດ້ປະກອບດ້ວຍ: (1) ອົງກອນຮັບຜິດຊອບການອະນຸມັດ ຫຼື ສະໜອງການຂຶ້ນທະບຽນຂອງຂະບວນການແຈ້ງຂ່າວການອະນຸມັດສິດ; (2) ຂອບເວລາ ແລະ ການສິ້ນສຸດ; (3) ເງື່ອນໄຂພິເສດຂອງການນຳໃຊ້; (4) ບັນດາຂັ້ນຕອນສຳລັບຂະບວນການແຈ້ງຂ່າວການອະນຸມັດສິດ; (5) ກົນໄກໃນການປຶກສາຫາລືບັນດາຜູ້ທີ່ມີສ່ວນຮ່ວມກ່ຽວຂ້ອງ ແລະ (6) ຂະບວນການ.

**(1) ອົງກອນຮັບຜິດຊອບແຫ່ງຊາດໃນການອະນຸມັດ ຂະບວນການແຈ້ງຂ່າວການອະນຸມັດສິດ ກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ**

ຂະບວນການແຈ້ງຂ່າວການອະນຸມັດສິດ ກ່ຽວກັບການເຂົ້າເຖິງຊັບພະຍາກອນພັນທຸກໍາແບບໃນຖິ່ນເດີມ ຈະຖືກໄດ້ຮັບຈາກພາຄີທີ່ກ່ຽວຂ້ອງໃນການຕອບສະໜອງກ່ຽວກັບບັນດາຊັບພະຍາກອນ, ໂດຍຜ່ານອົງກອນຮັບຜິດຊອບແຫ່ງຊາດ ເປັນຢ່າງໜ້ອຍຖືກກໍານົດດ້ວຍພາຄີດັ່ງກ່າວ. ໂດຍອີງໃສ່ລະບຽບການພາຍໃນປະເທດ, ຂະບວນການແຈ້ງຂ່າວການອະນຸມັດສິດອາດຈໍາເປັນຕ້ອງຜ່ານຂັ້ນຕອນບັນດາລະດັບຂັ້ນທີ່ແຕກຕ່າງກັນຂອງລັດຖະບານ. ບັນດາຄວາມຕ້ອງການທາງດ້ານຂັ້ນຕອນ ຂອງການໄດ້ຮັບຂະບວນການແຈ້ງຂ່າວການອະນຸມັດສິດ (ລະດັບແຫ່ງຊາດ, ລະດັບແຂວງ, ລະດັບເມືອງ, ລະດັບທ້ອງຖິ່ນ) ໃນປະເທດທີ່ຕອບສະໜອງ ທີ່ຕ້ອງໄດ້ກໍານົດເປັນອັນສະເພາະ ບັນດາຂະບວນການລະດັບຊາດ ຕ້ອງໄດ້ອໍານວຍຄວາມສະດວກໃນການທີ່ເຮັດໃຫ້ທັງໝົດພາຍໃນຜູ້ທີ່ມີສ່ວນກ່ຽວຂ້ອງ ຈາກຊຸມຊົນທີ່ຢູ່ໃນລະດັບລັດຖະບານ ເພື່ອເຮັດໃຫ້ກະທັດຮັດ ແລະ ແຈ່ມແຈ້ງ. ການຍອມຮັບໃນບັນດາສິດຕາມກົດໝາຍຂອງບັນດາຊຸມຊົນທ້ອງຖິ່ນ ແລະ ສ່ວນນ້ອຍ ທີ່ກ່ຽວຂ້ອງກັບຊັບພະຍາກອນພັນທຸກໍາ ທີ່ຖືກເຂົ້າເຖິງ ຫຼື ໃນກໍລະນີພູມປັນຍາພື້ນບ້ານອັນເປັນມູນເຊື້ອ ທີ່ກ່ຽວຂ້ອງກັບຊັບພະຍາກອນພັນທຸກໍາ ທີ່ຖືກເຂົ້າເຖິງ, ຂະບວນການແຈ້ງຂ່າວການອະນຸມັດສິດ ຂອງບັນດາຊຸມຊົນ ແລະ ທ້ອງຖິ່ນ ແລະ ການຮັບຮອງ ແລະ ການມີສ່ວນຮ່ວມຂອງບັນດາຜູ້ຄອບຄອງສິດທາງດ້ານພູມປັນຍາພື້ນບ້ານອັນເປັນມູນເຊື້ອ, ບັນດານະວັດຕະກໍາ ແລະ ຄວາມສໍານານງານ ຕ້ອງຖືກໄດ້ຮັບ, ໂດຍທີ່ສອດຄ່ອງກັບຄວາມສໍານານງານອັນເປັນມູນເຊື້ອຂອງພວກເຂົາເຈົ້າ, ບັນດານະໂຍບາຍແຫ່ງຊາດກ່ຽວກັບການເຂົ້າເຖິງ ແລະ ກ່ຽວພັນກັບບັນດາກົດ

ໝາຍພາຍໃນປະເທດ. ສຳລັບບັນດາການສະສົມແບບນອກຖິ່ນເດີມ, ຂະບວນການແຈ້ງຂ່າວການອະນຸມັດສິດ ຕ້ອງຖືກໄດ້ຮັບຈາກອົງກອນຮັບຜິດຊອບແຫ່ງຊາດ ຫຼື ໜ່ວຍງານທີ່ກຳລັງບໍລິຫານຄຸ້ມຄອງ ບັນດາການສະສົມແບບນອກຖິ່ນເດີມ ທີ່ກ່ຽວຂ້ອງຕາມຄວາມເໝາະສົມ.

**(2) ຂອບເວລາ ແລະ ການສິ້ນສຸດ**

ຂະບວນການແຈ້ງຂ່າວການອະນຸມັດ ແມ່ນຕ້ອງຖືເປັນເງື່ອນໄຂທີ່ພໍພຽງລ່ວງໜ້າເພື່ອມີຄວາມໝາຍທັງສອງສຳລັບຜູ້ທີ່ຊອກຫາ ແລະ ຜູ້ທີ່ໄດ້ຮັບການອະນຸມັດການເຂົ້າເຖິງ. ບັນດາການຕັດສິນໃຈຕົກລົງໃນການຮ້ອງຂໍສຳລັບການເຂົ້າເຖິງຊັບພະຍາກອນພັນທຸກຳ ຕ້ອງຖືກກຳນົດພາຍໃນຮອບວຽນເວລາທີ່ສົມເຫດສົມຜົນ.

**(3) ເງື່ອນໄຂພິເສດຂອງການນຳໃຊ້**

ຂະບວນການແຈ້ງຂ່າວການອະນຸມັດ ຕ້ອງອີງໃສ່ພື້ນຖານເງື່ອນໄຂພິເສດຂອງການນຳໃຊ້ສຳລັບສິ່ງທີ່ຍິນຍອມໄດ້ຖືກອະນຸມັດ. ໃນຂະນະທີ່ຂະບວນການແຈ້ງຂ່າວການອະນຸມັດ ອາດຖືກອະນຸມັດເລີ່ມຕົ້ນເງື່ອນໄຂພິເສດຂອງການນຳໃຊ້, ທຸກໆການປ່ຽນແປງໃນການນຳໃຊ້ ທີ່ຮວມເອົາການຖ່າຍໂອນສິດທາມີທີສາມ ຈຳຕ້ອງຂໍຮ້ອງການຖືສິດສະບັບໃໝ່ສຳລັບຂະບວນການແຈ້ງຂ່າວການອະນຸມັດ. ການອະນຸມັດການນຳໃຊ້ຕ້ອງແຈ່ມແຈ້ງ ແລະ ທຸກໆການປ່ຽນແປງພາຍໃນຂະບວນການແຈ້ງຂ່າວການອະນຸມັດ ຫຼື ການນຳໃຊ້ທີ່ບໍ່ອາດຄາດຄະເນລ່ວງໜ້າໄດ້ ອາດຖືກຕ້ອງການ. ຄວາມຈຳເປັນພິເສດຂອງການຈັດລຽງທາງດ້ານອະນຸກົມວິຖານ ແລະ ລະບົບການຄົ້ນຄວ້າ, ຕາມທີ່ໄດ້ລິເລີ່ມໂດຍ ການເລີ່ມຕົ້ນຂອງໂລກທາງດ້ານອະນຸກົມວິຖານ, ແມ່ນຕ້ອງໄດ້ຖືກບັນຈຸໃນພິຈາລະນາ. ຂະບວນການແຈ້ງຂ່າວການອະນຸມັດແມ່ນຖືກເຊື່ອມຕໍ່ກັບເງື່ອນໄຂຮ້ອງຂໍຂອງບັນດາຂໍ້ຕົກລົງຮ່ວມກັນ.

## (4) ບັນດາຂັ້ນຕອນສຳລັບການໄດ້ຮັບ ຂະບວນການແຈ້ງຂ່າວການອະນຸມັດສິດ

ຄຳຮ້ອງໃນການເຂົ້າເຖິງ ແມ່ນຕ້ອງການຂໍ້ມູນຕ່າງໆໃນການສະໜອງໃຫ້, ເພື່ອອົງກອນຮັບຜິດຊອບ ຈະໄດ້ມີການຕັດສິນວ່າຈະອະນຸມັດສິດໃນການເຂົ້າເຖິງຊັບພະຍາກອນພັນທຸກຳໄດ້ ຫຼື ບໍ, ລາຍການຂໍ້ມູນດັ່ງຕໍ່ໄປນີ້ ເປັນການບົ່ງບອກ ແລະ ຄວນຖືກປັບປຸງເພື່ອສະຖານະການພາຍໃນປະເທດ:

1. ສະພາບທາງດ້ານກົດໝາຍ ແລະ ຄວາມຜູກພັນຂອງຜູ້ສະໝັກ ແລະ ຜູ້ຮວບຮວມເກັບກຳ ແລະ ຈຸດປະສານງານຕິດຕໍ່ ໃນເມື່ອສະຖາບັນເປັນຜູ້ຮ້ອງຂໍ;
2. ຊະນິດ ແລະ ປະລິມານຂອງຊັບພະຍາກອນພັນທຸກຳທີ່ຖືກເຂົ້າເຖິງ;
3. ເວລາການເລີ່ມຕົ້ນ ແລະ ໄລຍະການກຳເນີນກິດຈະກຳ;
4. ການປະເມີນຜົນກ່ຽວກັບກິດຈະກຳຂອງການເຂົ້າເຖິງ ທີ່ອາດມີຜົນກະທົບຕໍ່ການອະນຸລັກ ແລະ ການພັດທະນາແບບຍືນຍົງຂອງຄວາມຫຼາກຫຼາຍດ້ານຊີວະພາບ, ເພື່ອເປັນການກຳນົດບັນດາມູນຄ່າທຽບຖານ ແລະ ຜົນປະໂຫຍດຈາກການອະນຸມັດການເຂົ້າເຖິງ;
5. ຂໍ້ມູນທີ່ແນ່ນອນ ທີ່ກ່ຽວຂ້ອງກັບການນຳໃຊ້ແບບຕັ້ງໃຈ (ຕົວຢ່າງ: ການຈັດລຽງທາງດ້ານອະນຸກົມວິທານ, ການສະສົມ, ການຄົ້ນຄວ້າ, ການຄ້າຂາຍ);
6. ການກຳນົດສະຖານທີ່ດຳເນີນການຄົ້ນຄວ້າ ແລະ ການພັດທະນາ;
7. ຂໍ້ມູນກ່ຽວກັບວິທີການຄົ້ນຄວ້າ ແລະ ການພັດທະນາ;
8. ການກຳນົດກ່ຽວກັບບັນດາຈຸດປະສານ ໃນການປະສານງານກ່ຽວກັບການຄົ້ນຄວ້າ ແລະ ການພັດທະນາ;

9. ຄວາມເປັນໄປໄດ້ໃນການມີສ່ວນຂອງພາກສ່ວນທີສາມ;
10. ເປົ້າໝາຍໃນການສະສົມ, ການຄົ້ນຄວ້າ ແລະ ການຄາດຄະເນຜົນທີ່ໄດ້ຮັບ;
11. ບັນດາຊະນິດຂອງຜົນປະໂຫຍດ ທີ່ສາມາດໄດ້ຮັບຈາກການເຂົ້າເຖິງຊັບພະຍາກອນ, ຮວມເຖິງບັນດາຜົນປະໂຫຍດ ຈາກບັນດາອົງປະກອບ ແລະ ຜະລິດຕະພັນ ທີ່ເກີດຂຶ້ນຈາກການຄ້າ ແລະ ການນຳໃຊ້ອື່ນໆຈາກຊັບພະຍາກອນພັນທຸກຳ;
12. ດັດສະນີຂອງການດຳເນີນການແບ່ງປັນຜົນປະໂຫຍດ;
13. ງົບປະມານ;
14. ການບໍລິຫານກ່ຽວກັບຂໍ້ມູນທີ່ຖືເປັນຄວາມລັບ; ແລະ
15. ການອະນຸຍາດໃນການເຂົ້າເຖິງຊັບພະຍາກອນພັນທຸກຳ ແມ່ນບໍ່ສາມາດຕັດແຍກອອກຈາກການອະນຸຍາດການນຳໃຊ້ພູມປັນຍາພື້ນບ້ານອັນເປັນມູນເຊື້ອ ທີ່ກ່ຽວພັນກັບຊັບພະຍາກອນພັນທຸກຳ ແລະ ເຊັ່ນດຽວໃນທາງກັບກັນ.

**(5) ຂະບວນການ**

ບັນດາຄຳຮ້ອງສຳລັບການເຂົ້າເຖິງຊັບພະຍາກອນພັນທຸກຳ ໂດຍຜ່ານຂະບວນການແຈ້ງຂ່າວການອະນຸມັດສິດ ແລະ ການຕັດສິນຂອງອົງກອນຮັບຜິດຊອບແຫ່ງຊາດທາງດ້ານເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດໃນການອະນຸມັດຊັບພະຍາກອນພັນທຸກຳ ວ່າຈະໃຫ້ການຮັບຮອງ ຫຼື ບໍ ດ້ວຍການລົງບົດບັນທຶກເປັນລາຍລັກອັກສອນ. ອົງກອນຮັບຜິດຊອບແຫ່ງຊາດວ່າດ້ວຍການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດສາມາດໃຫ້ການຮັບຮອງໂດຍສະເໜີການອອກໃບອະນຸມັດ ຫຼື ການມອບສິດທິ ຫຼື ດຳເນີນການໃນບັນດາຮູບການອື່ນໆຕາມຄວາມເໝາະສົມ. ລະບົບການຂຶ້ນທະບຽນແຫ່ງຊາດ ຕ້ອງຖືກນຳໃຊ້ເພື່ອເກັບກຳທັງໝົດຂອງການອອກບັນ

ດາໃບອະນຸມັດ ຫຼື ການມອບສິດທິ, ໂດຍອີງໃສ່ພື້ນຖານທີ່ໄດ້ກຳນົດໄວ້ໃນການປະກອບຂໍ້ມູນຕາມແບບຟອມ. ບັນດາຂະບວນການໃນການໄດ້ຮັບໃບອະນຸມັດ ຫຼື ການມອບສິດທິ ຕ້ອງມີຄວາມໂປ່ງໃສ ແລະ ສາມາດເຂົ້າເຖິງໄດ້ໂດຍທຸກໆພາກສ່ວນ ທີ່ມີຄວາມສົນໃຈ.

## 3.5 ບັນດາຂໍ້ຕົກລົງຮ່ວມກັນ

ຕາມທີ່ໄດ້ກຳນົດໄວ້ໃນມາດຕາທີ 15, ວັກທີ 7 ຂອງສົນທິສັນຍາວ່າດ້ວຍຄວາມຫຼາກຫຼາຍດ້ານຊີວະພາບ, ແຕ່ລະປະເທດພາຄີພາຍໃຕ້ສົນທິສັນຍາ ຕ້ອງໄດ້ກຳນົດບັນດາມາດຕະການທາງດ້ານລະບຽບການ, ການບໍລິຫານຈັດການ ຫຼື ແນວທາງນະໂຍບາຍໃນການປະຕິບັດຕາມຄວາມເໝາະສົມທີ່ກ່ຽວຂ້ອງກັບການບັນລຸເປົ້າໝາຍ ໃນການແບ່ງປັນແບບສະເໝີພາບ ແລະ ເປັນທຳ ທີ່ເກີດຈາກຜົນຂອງບັນດາການຄົ້ນຄວ້າ ແລະ ການພັດທະນາ ແລະ ບັນດາຜົນປະໂຫຍດ ທີ່ເກີດຈາກການຄ້າຂາຍ ແລະ ການນຳໃຊ້ໃນຮູບແບບອື່ນໆຂອງບັນດາຊັບພະຍາກອນພັນທຸກຳ ພາຍໃນປະເທດພາຄີທີ່ໄດ້ມີການສະໜອງບັນດາຊັບພະຍາກອນເຫຼົ່ານັ້ນ. ການແບ່ງປັນບັນດາຜົນປະໂຫຍດດັ່ງກ່າວ ຕ້ອງໄດ້ອີງໃສ່ບັນດາຂໍ້ຕົກລົງຮ່ວມກັນ. ສະນັ້ນ, ບັນດາຄູ່ມືຕ່າງໆ ຕ້ອງເປັນຜູ່ຊ່ວຍບັນດາປະເທດພາຄີ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງໃນການພັດທະນາກ່ຽວກັບບັນດາຂໍ້ຕົກລົງຮ່ວມກັນ ເພື່ອເປັນການຄໍ້າປະກັນການແບ່ງປັນບັນດາຜົນປະໂຫຍດແບບສະເໝີພາບ ແລະເປັນທຳ.

### 3.5.1 ເນື້ອໃນພື້ນຖານຂອງບັນດາຂໍ້ຕົກລົງຮ່ວມກັນ

ບັນດາຫຼັກການຕໍ່ໄປນີ້ ຫຼື ເນື້ອໃນພື້ນຖານສາມາດຖືກນຳມາພິຈາລະນາໃນການພັດທະນາກ່ຽວກັບບັນດາຂໍ້ຕົກລົງຮ່ວມກັນ:

1. ລະບຽບການທີ່ຊັດເຈນ ແລະ ແຈ່ມແຈ້ງ;

2. ມູນຄ່າການໃຊ້ຈ່າຍໃນການດຳເນີນເອກະສານໜ້ອຍທີ່ສຸດ, ໂດຍການຍົກເປັນຕົວຢ່າງຄື:

(ກ) ການສ້າງ ແລະ ສົ່ງເສີມການສ້າງຈິດສຳນຶກກ່ຽວກັບບັນດາອົງປະກອບທີ່ເປັນເງື່ອນໄຂຂອງແບບຟອມຂອງໜ່ວຍງານລັດຖະບານ ແລະ ບັນດາຜູ້ທີ່ມີສ່ວນກ່ຽວຂ້ອງກັບການຮ້ອງຂໍໃນຂະບວນການແຈ້ງຂ່າວການອະນຸມັດສິດ ແລະ ບັນດາຂໍ້ຕົກລົງຮ່ວມກັນ;

(ຂ) ຮັບປະກັນການສ້າງຈິດສຳນຶກ ພາຍໃຕ້ບັນດາກົນໄກທີ່ມີໃນການຍື່ນຂໍການເຂົ້າເຖິງ, ການຈັດຕັ້ງປະຕິບັດບັນດາການດຳເນີນການ ແລະ ການຄ້ຳປະກັນການແບ່ງປັນຜົນປະໂຫຍດ; (ຄ) ການພັດທະນາບັນດາແຜນງານຂອງຂໍ້ຕົກລົງ, ໃນກໍລະນີທີ່ມີການຂໍນຳໃຊ້ສິດການເຂົ້າເຖິງຄືນໃໝ່ ເພື່ອໃຫ້ສາມາດຄາດຄະເນໃນສິ່ງທີ່ອາດເກີດຂຶ້ນໄດ້;

(ງ) ການພັດທະນາມາດຕະຖານ ບັນດາສັນຍາການເຄື່ອນຍ້າຍວັດຖຸພັນທຸກຳ ແລະ ການບໍລິຫານການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ແລະ ສິ່ງທີ່ມີການກ່ຽວຂ້ອງ (ເບິ່ງລາຍລະອຽດໃນ ***ເອກະສານຊ້ອນທ້າຍ I. ບັນດາຂໍ້ສະເໜີແນະ ສຳລັບສັນຍາໃນການເຄື່ອນຍ້າຍວັດສະດຸພັນທຸກຳ***);

3. ເນື້ອຫາຂອງບັນດາບົດບັນຍັດກ່ຽວກັບພັນທະຂອງຜູ້ນຳໃຊ້ ແລະ ຜູ້ເປັນເຈົ້າຂອງ ຊັບພະຍາກອນພັນທຸກຳ;

4. ການພັດທະນາຮູບແບບການຈັດການທີ່ແຕກຕ່າງສຳລັບຊັບພະຍາກອນ ແລະ ການນຳໃຊ້ ແລະ ການພັດທະນາຕົວແບບຂອງບັນດາສັນຍາ;

5. ບັນດາການນຳໃຊ້ທີ່ແຕກຕ່າງ ອາດປະກອບດ້ວຍການຈັດລຽງທາງດ້ານອະນຸກົມວິຖານ, ການສະສົມ, ການຄົ້ນຄວ້າ, ການພັດທະນາ, ການຄ້າຂາຍ;
6. ບັນດາຂໍ້ຕົກລົງທີ່ເຫັນພ້ອມຕ້ອງກັນ ຕ້ອງເປັນການປຶກສາຫາລືທີ່ມີປະສິດທິຜົນ ແລະ ພາຍໃນຂອບຮອບວຽນເວລາທີ່ສົມເຫດສົມຜົນ;
7. ບັນດາຂໍ້ຕົກລົງທີ່ເຫັນພ້ອມຕ້ອງກັນ ຕ້ອງເປັນການບັນທຶກເປັນລາຍລັກອັກສອນ.

ບັນດາອົງປະກອບຕໍ່ໄປນີ້ ສາມາດຖືກພິຈາລະນາປຽບສະເໝືອນເນື້ອຫາທີ່ເປັນເຄື່ອງມືພາຍໃນບັນດາຂໍ້ສັນຍາການຮ່ວມມື. ບັນດາອົງປະກອບອັນນີ້ ສາມາດຖືກພິຈາລະນາເໝືອນບັນດາເນື້ອໃນອັນພື້ນຖານສຳລັບບັນດາຂໍ້ຕົກລົງຮ່ວມກັນ:

1. ການຄຸ້ມຄອງການນຳໃຊ້ບັນດາຊັບພະຍາກອນ ທີ່ຕ້ອງໄດ້ຮອບຮອມເຖິງການບັນຈຸບັນຫາທາງດ້ານຈາຣິຍະທຳຂອງບັນດາປະເທດທີ່ເປັນພາຄີ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ, ຮວມເອົາຂອງບັນດາຊຸມຊົນ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ;
2. ສ້າງບົດບັນຍັດ ເພື່ອເປັນການຄ້ຳປະກັນການສືບຕໍ່ຂອງຜູ້ນຳໃຊ້ທີ່ເປັນລູກຄ້າ ທີ່ໄດ້ມີການນຳໃຊ້ຊັບພະຍາກອນພັນທຸກຳ ແລະ ພູມປັນຍາທີ່ກ່ຽວຂ້ອງ;
3. ບົດບັນຍັດສຳລັບການນຳໃຊ້ບັນດາສິດທິຊັບສິນທາງປັນຍາ ທີ່ບັນຈຸການຮ່ວມກັນຄົ້ນຄວ້າ, ພັນທະໃນການຈັດຕັ້ງປະຕິບັດບັນດາສິດທາງສິດທິບັດທີ່ໄດ້ຮັບ ແລະ ການໄດ້ຮັບໃບອະນຸມັດສິດດ້ວຍການຍິນຍອມທີ່ກ່ຽວຂ້ອງ;
4. ຄວາມເປັນໄປໄດ້ໃນການຮ່ວມສິດ ທາງດ້ານຊັບສິນທາງປັນຍາ ທີ່ອີງຕາມລະດັບຂອງການປະກອບສ່ວນ.

### 3.5.2 ລາຍການທີ່ເປັນການບົ່ງບອກສະເພາະຂອງບັນດາຂໍ້ຕົກລົງຮ່ວມກັນ

ດັ່ງຕໍ່ໄປນີ້ເປັນການນຳສະເໜີກ່ຽວກັບລາຍການທີ່ເປັນການບົ່ງບອກສະເພາະຂອງບັນດາຂໍ້ຕົກລົງຮ່ວມກັນ:

1. ຊະນິດ ແລະ ປະລິມານຂອງຊັບພະຍາກອນພັນທຸກຳ, ກິດຈະກຳພາຍໃນເນື້ອທີ່ທາງດ້ານພູມສາດ ແລະ ນິເວດວິທະຍາ;
2. ບັນດາຂອບເຂດການນຳໃຊ້ທີ່ສາມາດເປັນໄປໄດ້ຂອງວັດສະດຸພັນທຸກຳ;
3. ການຮັບຮອງສິດອຳນາດອະທິປະໄຕຂອງປະເທດທີ່ເປັນແຫຼ່ງກຳເນີດຊັບພະຍາກອນພັນທຸກຳ;
4. ການເສີມສ້າງຄວາມອາດສາມາດ ໃນຂະແໜງການຕ່າງໆ ທີ່ໄດ້ຖືກກຳນົດໃນສັນຍາ;
5. ອະນຸປະໂຫຍກກ່ຽວກັບບັນດາເນື້ອຫາຂອງສັນຍາ ໃນສະຖານະການທີ່ຊັດເຈນ (ເຊັ່ນ ການປ່ຽນແປງການນຳໃຊ້) ສາມາດຖືກປຶກສາຫາລືຄືນໃໝ່;
6. ໃນກໍລະນີທີ່ຊັບພະຍາກອນພັນທຸກຳ ຕ້ອງການປ່ຽນຖ່າຍສູ່ພາກສວນທີສາມ ແລະ ບັນດາເງື່ອນໄຂທີ່ຖືກບັງຄັບໃນກໍລະນີດັ່ງກ່າວສາມາດດຳເນີນການໄດ້ ຫຼືບໍ່ນັ້ນ ເພື່ອປ່ຽນຖ່າຍຊັບພະຍາກອນພັນທຸກຳສູ່ພາກສ່ວນທີສາມ ແມ່ນປາສະຈາກບໍ່ໄດ້ໃນການຄ້ຳປະກັນວ່າບັນດາພາກສ່ວນທີສາມຈະປະຕິບັດຕາມບັນດາຂໍ້ຕົກລົງທີ່ຄ້າຍຄືກັນໂດຍໄດ້ມີການຍົກເວັ້ນກ່ຽວກັບການຄົ້ນຄວ້າດ້ານລະບົບ ແລະ ອະນຸກົມວິທານໃນສິ່ງທີ່ບໍ່ມີສ່ວນກ່ຽວຂ້ອງທາງດ້ານການຄ້າ;
7. ໃນກໍລະນີທີ່ພູມປັນຍາ, ບັນດານະວັດຕະກຳ ແລະ ຄວາມສຳນານງານຂອງບັນດາຊຸມຊົນ ແລະ ທ້ອງຖິ່ນ ຕ້ອງໄດ້ຖືກຮັບຮອງ, ອະນຸລັກ ແລະ ຮັກສາ, ແລະ ກໍລະນີທີ່ມີການນຳໃຊ້ຊັບພະຍາ

ກອນດ້ານຊີວະພາບຂອງລູກຄ້າ ທີ່ກ່ຽວຂ້ອງກັບຄວາມສຳນານງານ ຈາກຄວາມຮູ້ພື້ນບ້ານ ຕ້ອງຖືກປົກປ້ອງ ແລະ ກະຕຸ້ນ;

8. ການປົກປ້ອງຂໍ້ມູນທີ່ເປັນຄວາມລັບ; ແລະ
9. ບັນດາບົດບັນຍັດທີ່ກ່ຽວຂ້ອງກັບການແບ່ງປັນຜົນປະໂຫຍດ ທີ່ເກີດຈາກການນຳໃຊ້ທີ່ເປັນການຄ້າ ແລະ ດ້ານອື່ນໆຂອງບັນດາຊັບພະຍາກອນພັນທຸກຳ ແລະ ສ່ວນປະກອບ ແລະ ຜະລິດຕະພັນຂອງສິ່ງດັ່ງກ່າວ.

### 3.5.3 ການແບ່ງປັນຜົນປະໂຫຍດ

ຂໍ້ຕົກລົງທີ່ເຫັນພ້ອມຕ້ອງກັນ ຕ້ອງໄດ້ຄວບຄຸມບັນດາເງື່ອນໄຂ, ຂໍ້ຜູກມັດ, ບາດກ້າວ, ຊະນິດ, ເວລາ, ການແຈກຢາຍ ແລະ ກົນໄກຂອງການແບ່ງປັນຜົນປະໂຫຍດ. ບັນຫາດັ່ງກ່າວນີ້ຈະຂຶ້ນກັບຫຼາຍປັດໄຈ ທີ່ກ່ຽວຂ້ອງກັບສະຖານະພາບຂອງການສະເໜີພາບ ແລະ ເປັນທຳ.

1. ຊະນິດຂອງຜົນປະໂຫຍດ: ຕົວຢ່າງໃນຮູບແບບທີ່ເປັນເງິນຕາ ແລະ ບໍ່ເປັນເງິນຕາດັ່ງທີ່ໄດ້ມີການກຳນົດໄວ້ໃນ ***ເອກະສານຊ້ອນທ້າຍ II. ຜົນປະໂຫຍດໃນຮູບແບບທີ່ເປັນເງິນຕາ ແລະ ບໍ່ເປັນເງິນຕາ***;
2. ຂອບເວລາຂອງຜົນປະໂຫຍດ: ຜົນປະໂຫຍດໃນໄລຍະໃກ້, ໄລຍະກາງ ແລະ ໄລຍະຍາວ ຕ້ອງໄດ້ຖືກພິຈາລະນາ, ຮວມເຖິງການຈ່າຍລ່ວງໜ້າ, ການໃຊ້ຈ່າຍອື່ນໆ ແລະ ຄ່າທຳນຽມຫຼວງ. ຂອບເວລາຂອງການແບ່ງປັນຜົນປະໂຫຍດ ຕ້ອງເປັນແບບທີ່ເຫັນໄດ້ຊັດເຈນ. ສະນັ້ນ, ຄວາມສົມດູນລະຫວ່າງຜົນປະໂຫຍດໃນໄລຍະໃກ້, ໄລຍະກາງ ແລະ ໄລຍະຍາວ ແມ່ນຕ້ອງໄດ້ຖືກພິຈາລະນາ ຕາມພື້ນຖານຄວາມ ເປັນໄປໃນແຕ່ລະກໍລະນີ;
3. ການແຈກຢາຍຂອງຜົນປະໂຫຍດ: ອີງຕາມບັນດາຂໍ້ຕົກລົງຮ່ວມກັນທີ່ໄດ້ສ້າງຕັ້ງ ຂະບວນການແຈ້ງຂ່າວການອະນຸມັດສິດ, ບັນດາຜົນ

ປະໂຫຍດຕ້ອງໄດ້ຖືກແບ່ງປັນແບບສະເໝີພາບ ແລະ ເປັນທຳກັບທຸກໆພາກສ່ວນທີ່ໄດ້ມີການກຳນົດໄວ້ໃນການປະກອບສ່ວນໃນການບໍລິຫານຊັບພະຍາກອນ, ຂະບວນການທາງດ້ານວິທະຍາສາດ ແລະ ການຄ້າ. ກ່ອນອື່ນໝົດ ອາດຮວມເອົາບັນດາສະຖາບັນຂອງກົງຈັກລັດຖະບານ, ບໍ່ສັງກັດໃນກົງຈັກລັດຖະບານ ຫຼື ບັນດິດວິທະຍາສາດ ແລະ ບັນດາຊຸມຊົນ ແລະ ທ້ອງຖິ່ນ. ບັນດາຜົນປະໂຫຍດ ຕ້ອງຖືກຜັນຂະຫຍາຍໄປຕາມທິດເພື່ອສົ່ງເສີມການອະນຸລັກ ແລະ ການນຳໃຊ້ແບບຍືນຍົງຂອງຄວາມຫຼາກຫຼາບດ້ານຊີວະພາບ;

4. ກົນໄກຂອງການແບ່ງປັນຜົນປະໂຫຍດ: ອາດມີຄວາມແຕກຕ່າງໂດຍຂຶ້ນກັບບັນດາຊະນິດຂອງຜົນປະໂຫຍດ, ເງື່ອນໄຂສະເພາະພາຍໃນປະເທດ ແລະ ຜູ້ທີ່ມີສ່ວນຮ່ວມກ່ຽວຂ້ອງ. ກົນໄກຂອງການແບ່ງປັນຜົນປະໂຫຍດ ຕ້ອງໄດ້ກຳນົດແບບຕາຍຕົວຕາມທີ່ໄດ້ມີການກຳນົດໄວ້ໂດຍບັນດາພາກສ່ວນທີ່ມີສ່ວນຮ່ວມໃນການແບ່ງປັນຜົນປະໂຫຍດ ແລະ ຈະແຕກຕ່າງໄປຕາມພື້ນຖານຂອງແຕ່ລະກໍລະນີ. ບັນດາກົນໄກຂອງການແບ່ງປັນຜົນປະໂຫຍດ ຕ້ອງບັນຈຸທັງໝົດຂອງການຮ່ວມມືທີ່ກ່ຽວກັບການຄົ້ນຄວ້າວິທະຍາສາດ ແລະ ການພັດທະນາເຕັກໂນໂລຊີ, ດັ່ງດຽວກັນກັບບັນດາສິ່ງທີ່ໄດ້ເກີດຈາກຜົນທາງດ້ານການຄ້າ ທີ່ຮວມເອົາບັນດາກອງທຶນສະໜັບສະໜູນ, ການຮ່ວມມືໃນການລົງທຶນ ແລະ ສິດທິບັດກ່ຽວກັບຫົວເລື່ອງທີ່ໄດ້ມີການອ້າງອີງ.

## 3.6 ບັນດາບົດບັນຍັດອັນອື່ນໆ

### 3.6.1 ການກະຕຸກຊຸກຍູ້

ບັນດາມາດຕະການໃນການກະຕຸກຊຸຍູ້ໃນຕໍ່ໄປນີ້ໄດ້ມີການຍົກເວັ້ນບັນດາມາດຕະການທີ່ສາມາດນຳໃຊ້ກັບການຈັດຕັ້ງປະຕິບັດບັນຄູ່ມື:

1. ການກຳນົດ ແລະ ການກະຈາຍ ຫຼື ການເຄື່ອນຍ້າຍທີ່ເປັນການກະຕຸກຊຸກຍູ້, ຊຶ່ງອາດຈະກາຍເປັນອຸປະສັກຕໍ່ການອະນຸລັກ ແລະ ການນຳໃຊ້ແບບຍືນຍົງຂອງຄວາມຫຼາກຫຼາຍດ້ານຊີວະພາບ ໂດຍຜ່ານການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ, ຕ້ອງໄດ້ຖືກພິຈາລະນາ;
2. ການນຳໃຊ້ກ່ຽວກັບການອອກແບບເປັນຢ່າງດີທາງດ້ານເສດຖະກິດ ແລະ ບັນດາເຄື່ອງມືທາງດ້ານລະບຽບການ, ແບບໂດຍກົງ ຫຼື ທາງອ້ອມທີ່ກ່ຽວພັນກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ, ຕ້ອງໄດ້ຖືກພິຈາລະນາເພື່ອການອຸປະຖຳຢ່າງສະເໝີພາບ ແລະ ການກະຈາຍຜົນປະໂຫຍດແບບມີປະສິດທິຜົນ;
3. ການນຳໃຊ້ບັນດາວິທີການຕີລາຄາຕ້ອງຖືກພິຈາລະນາເປັນດັ່ງເຄື່ອງມື ເພື່ອແຈ້ງຂ່າວແກ່ບັນດາຜູ້ນຳໃຊ້ ແລະ ຜູ້ຕອບສະໜອງທີ່ກ່ຽວຂ້ອງກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ; ແລະ
4. ການສ້າງ ແລະ ການນຳໃຊ້ຂອງການຕະຫຼາດ ຕ້ອງໄດ້ຖືກພິຈາລະນາເປັນດັ່ງເສັ້ນທາງ ເພື່ອການບຸກທະລຸຢ່າງມີປະສິດທິຜົນໃນການອະນຸລັກ ແລະ ການນຳໃຊ້ແບບຍືນຍົງຂອງຊັບພະຍາກອນຊີວະພາບ.

### 3.6.2 ຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດກ່ຽວກັບການຈັດການການເຂົ້າເຖິງ ແລະ ການແບ່ງຜົນປະໂຫຍດ

ບັນດາປະເທດທີ່ເປັນພາຄີຄວນສ້າງຕັ້ງບັນດາກົນໄກເພື່ອສົ່ງເສີມຄວາມຮັບຜິດຊອງຂອງທັງໝົດທີ່ມີສ່ວນກ່ຽວຂ້ອງ ໃນການດຳເນີນການກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ. ເພື່ອເປັນການສົ່ງເສີມ

ຄວາມຮັບຜິດຊອບ, ບັນດາປະເທດທີ່ເປັນພາຄີອາດພິຈາລະນາໃນການສ້າງຕັ້ງບັນດາກົນໄກກ່ຽວກັບ: (1) ບົດສະຫຼຸບ ແລະ (2) ສັງລວມຂໍ້ມູນ.

ໜ່ວຍງານການສັງລວມເກັບກໍາອິດສະຫຼະ ຫຼື ສະຖາບັນທີ່ຮັບດໍາເນີນການສັງລວມເກັບກໍາ ແມ່ນມີໜ້າທີ່ ແລະ ຄວາມຮັບຜິດຊອບໃນການປະຕິບັດພັນທະໃນການເປັນຜູ້ສັງລວມເກັບກໍາ.

### 3.6.3 ການຕິດຕາມກວດກາ ແລະ ການສ້າງບົດລາຍງານລະດັບຊາດ

ໂດຍຂຶ້ນກັບບັນດາຫົວເລື່ອງກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ, ການຕິດຕາມກວດກາໃນລະດັບຊາດອາດປະກອບດ້ວຍ:

1. ໃນກໍລະນີທີ່ການນໍາໃຊ້ຊັບພະຍາກອນພັນທຸກໍາໄດ້ມີການປະຕິບັດຕາມພັນທະກັບບັນດາຫົວເລື່ອງກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ;
2. ຂະບວນການຄົ້ນຄວ້າ ແລະ ການພັດທະນາ;
3. ບັນດາການຍື່ນຂໍສິດທິຊັບສິນທາງປັນຍາ ທີ່ກ່ຽວຂ້ອງກັບການຕອບສະໜອງວັດຖຸພັນທຸກໍາ.

ການປະກອບສ່ວນຂອງບັນດາຜູ້ທີ່ມີສ່ວນກ່ຽວຂ້ອງ ທີ່ຮວມເອົາບັນດາຊຸມຊົນ ແລະ ທ້ອງຖິ່ນ, ເຂົ້າໃນບັນດາໄລຍະຕ່າງໆຂອງການພັດທະນາ ແລະ ການຈັດຕັ້ງປະຕິບັດການດໍາເນີນການກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ແມ່ນສາມາດກ້າວສູ່ບົດບາດອັນສໍາຄັນ ໃນການອໍານວຍຄວາມສະດວກໃນການຕິດຕາມກວດກາ ການປະຕິບັດຕາມພັນທະສັນຍາ.

### 3.6.4 ການກວດສອບຄວາມເປັນຈິງ

ບັນດາກົນໄກກ່ຽວກັບການກວດສອບຕາມຄວາມສະໝັກໃຈ ແມ່ນສາມາດພັດທະນາໃນລະດັບແຫ່ງຊາດ ເພື່ອຄໍ້າປະກັນການປະຕິບັດຕາມພັນ

ທະກ່ຽວກັບບັນດາບົດບັນຍັດການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດຂອງສົນທິສັນຍາວ່າດ້ວຍຄວາມຫຼາກຫຼາຍດ້ານຊີວະພາບ ແລະ ບັນດາເຄື່ອງມືທາງດ້ານກົດໝາຍແຫ່ງຊາດ ຂອງປະເທດແຫຼ່ງກຳເນີດທີ່ສະໜອງຊັບພະຍາກອນພັນທຸກຳ.

ບັນດາກົນໄກກ່ຽວກັບໃຫ້ການຢັ້ງຢືນຕາມຄວາມສະໝັກໃຈສາມາດນຳໃຊ້ເປັນເຄື່ອງມືເພື່ອໃນການກວດສອບເຖິງຄວາມໂປ່ງໃສໃນຂະບວນການດຳເນີນການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ. ລະບົບດັ່ງກ່າວ ສາມາດຢັ້ງຢືນວ່າໄດ້ວ່າບັນດາບົດບັນຍັດການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດຂອງສົນທິສັນຍາວ່າດ້ວຍຄວາມຫຼາກຫຼາຍດ້ານຊີວະພາບ ແມ່ນໄດ້ປະຕິບັດຕາມພັນທະທີ່ໄດ້ກຳນົດໄວ້.

### 3.6.5 ການປະຕິເສດ

ບັນດາຂໍ້ຜູກມັດເກືອບທັງໝົດທີ່ເກີດຂຶ້ນພາຍໃຕ້ບັນດາຂໍ້ຕົກລົງທີ່ເຫັນພ້ອມຕ້ອງກັນ ລະຫວ່າງຜູ້ເປັນເຈົ້າຂອງ ແລະ ຜູ້ນຳໃຊ້ຊັບພະຍາກອນພັນທຸກຳ, ການປະຕິເສດ ໂດຍບໍ່ປະຕິບັດຕາມບັນດາຂໍ້ຕົກລົງເຫຼົ່ານີ້ ແມ່ນສາມາດດຳເນີນການແກ້ໄຂໂດຍໃຫ້ສອດຄ່ອງກັບບັນດາການຕາມຂໍ້ຕົກລົງທີ່ກ່ຽວຂ້ອງທີ່ໄດ້ມີການຮັບຮອງນຳກັນທາງດ້ານການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ແລະ ການຈັດຕັ້ງປະຕິບັດຕາມບັນດາກົດໝາຍ ແລະ ປະສົບການ.

ໃນກໍລະນີທີ່ບັນດາຂໍ້ຕົກລົງກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ບໍ່ມີຄວາມສາມາດປະຕິບັດຕາມພັນທະຂໍ້ຜູກພັນໄດ້, ໂດຍອີງໃສ່ສົນທິສັນຍາວ່າດ້ວຍຄວາມຫຼາກຫຼາຍດ້ານຊີວະພາບ ແລະ ບັນດາເຄື່ອງມືທາງດ້ານກົດໝາຍແຫ່ງຊາດ ຂອງປະເທດທີ່ເປັນແຫຼ່ງກຳເນີດ, ການນຳໃຊ້ບັນດາມາດຕະການໃນການຂວ້ຳບາດ ແມ່ນອາດພິຈາ

ລະບາເພື່ອນຳໃຊ້ໄປຄຽງຄູ່ກັນກັບນຳໃຊ້ມາດຕະການໃນການຈ່າຍຄ່າທຳນຽມການປັບໄໝທີ່ໄດ້ບັນຈຸໄວ້ໃນຂໍ້ຕົກລົງ.

### 3.6.6 ການດັດແກ້

ອົງກອນຮັບຜິດຊອບແຫ່ງຊາດ ອາດກຳນົດບັນດາມາດຕະການທີ່ມີປະສິດທິຜົນອັນເໝາະສົມ ແລະ ເປັນບາດກ້າວໃນການກະເມີດລະບຽບການແຫ່ງຊາດ, ບັນດາມາດຕະການທາງດ້ານນະໂຍບາຍການບໍລິຫານ ໃນການຈັດຕັ້ງປະຕິບັດ ບັນດາບົດບັນຍັດການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດຂອງສົນທິສັນຍາວ່າດ້ວຍຄວາມຫຼາກຫຼາຍດ້ານຊີວະພາບ, ໂດຍຮວມເອົາບັນດາຄວາມຕ້ອງການທີ່ກ່ຽວພັນກັບຂະບວນການແຈ້ງຂ່າວການອະນຸມັດສິດ ແລະ ບັນດາຂໍ້ຕົກລົງທີ່ເຫັນພ້ອມຕ້ອງກັນ.

## *ເອກະສານຊ້ອນທ້າຍ I*
## *ບັນດາຂໍ້ສະເໜີແນະ ສຳລັບສັນຍາໃນການເຄື່ອນຍ້າຍວັດສະດຸພັນທຸກຳ*

ບັນດາສັນຍາໃນການເຄື່ອນຍ້າຍວັດສະດຸພັນທຸກຳ ອາດປະກອບດ້ວຍບັນດາເນື້ອໃນດັ່ງລຸ່ມນີ້:

**(ກ) ບັນດາບົດບັນຍັດໃນການນຳສະເໜີ:**

1. ບົດອະລຳພະບົດທີ່ອ້າງອີງເຖິງສົນທິສັນຍາວ່າດ້ວຍຄວາມຫຼາກຫຼາຍດ້ານຊີວະພາບ;
2. ສະຖານະພາບທາງດ້ານກົດໝາຍຂອງຜູ້ເປັນເຈົ້າຂອງ ແລະ ຜູ້ນຳໃຊ້;
3. ໜ້າວຽກ ແລະ ບັນດາຈຸດປະສົງຂອງຜູ້ເປັນເຈົ້າຂອງ ແລະ ຜູ້ນຳໃຊ້ຊັບພະຍາກອນທາງດ້ານພັນທຸກຳ;

**(ຂ) ບັນດາບົດບັນຍັດໃນການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ:**

1. ບັນລະຍາຍກ່ຽວກັບຊັບພະຍາກອນທາງດ້ານພັນທຸກຳທີ່ກ່ຽວພັນກັບບັນດາສັນຍາໃນການເຄື່ອນຍ້າຍວັດສະດຸພັນທຸກຳທີ່ປະກອບດ້ວຍຂໍ້ມູນທີ່ຕ້ອງນຳສະເໜີ;
2. ບັນດາຂໍ້ອະນຸມັດໃນການນຳໃຊ້, ການນຳໃຊ້ທົ່ວໄປກ່ຽວກັບຊັບພະຍາກອນພັນທຸກຳ, ບັນດາຜົນຜະລິດຂອງມັນ ຫຼື ສິ່ງທີ່ໄດ້ຮັບ ພາຍໃຕ້ບັນດາສັນຍາໃນການເຄື່ອນຍ້າຍວັດສະດຸພັນທຸກຳ (ເຊັ່ນ: ການຄົ້ນຄວ້າ, ການໄຂວ່ພັນ, ການບໍລິການຄ້າຂາຍ);
3. ການຢັ້ງຢືນທີ່ເປັນການຄ້ຳປະກັນວ່າທຸກໆການປ່ຽນປຸງກ່ຽວກັບການນຳໃຊ້ ແມ່ນຕ້ອງໄດ້ມີການສະເໜີຂໍບັນດາຂະບວນການແຈ້ງຂ່າວການອະນຸມັດການເຂົ້າເຖິງ ແລະ ສັນຍາໃນການເຄື່ອນຍ້າຍວັດສະດຸພັນທຸກຳສະບັບໃໝ່;

4. ສະຖານະພາບທາງດ້ານສິດທິບັດຊັບສິນທາງປັນຍາ ອາດກ່ຽວພັນ ແລະ ພາຍໃຕ້ບັນດາເງື່ອນໄຂແນວໃດ;
5. ບັນດາຫົວຂໍ້ກ່ຽວກັບສັນຍາໃນການແບ່ງປັນຜົນປະໂຫຍດ, ຊຶ່ງຮວມເອົາຄວາມຄິດເຫັນກ່ຽວກັບການແບ່ງປັນຜົນປະໂຫຍດໃນຮູບແບບທີ່ເປັນເງິນຕາ ແລະ ບໍ່ເປັນເງິນຕາ;
6. ສິ່ງທີ່ບໍ່ໄດ້ມີການຄໍ້າປະກັນ ໂດຍຜູ້ເປັນເຈົ້າຂອງກ່ຽວກັບສະພາບ ແລະ ຄຸນະພາບຂອງວັດສະດຸພັນທຸກໍາທີ່ໄດ້ສະໜອງໃຫ້;
7. ໃນກໍລະນີທີ່ຊັບພະຍາກອນພັນທຸກໍາ ແລະ ບັນດາຂໍ້ມູນທີ່ໄດ້ສະໜອງອາດເຄື່ອນຍ້າຍສູ່ພາກສ່ວນທີສາມ ແມ່ນຢູ່ພາຍໃຕ້ເງື່ອນໄຂອັນໃດທີ່ຕ້ອງປະຕິບັດຕາມ;
8. ບັນດານິຍາມຕ່າງໆ;
9. ພັນທະໜ້າທີ່ຕ້ອງໄດ້ເຮັດໃນການຫຼຸດຜ່ອນຜົນກະທົບທາງດ້ານສິ່ງແວດລ້ອມ ທີ່ອາດເກີດຂຶ້ນຈາກບັນດາກິດຈະກໍາ.

## (ຄ) ບັນດາບົດບັນຍັດທາງດ້ານລະບຽບການ:

1. ຂໍ້ຜູກພັນໃນການຈັດຕັ້ງປະຕິບັດພັນທະທາງດ້ານລະບຽບການທີ່ຕ້ອງເຮັດ ພາຍໃຕ້ບັນດາສັນຍາໃນການເຄື່ອນຍ້າຍວັດສະດຸພັນທຸກໍາ;
2. ໄລຍະເວລາທີ່ກໍານົດໄວ້ພາຍໃນສັນຍາ;
3. ຂໍ້ສິ້ນສຸດກ່ຽວກັບສັນຍາ;
4. ເຫດການຕົວຈິງ ທີ່ເປັນສາຍເຫດເຮັດໃຫ້ບັນດາຂໍ້ຜູກພັນຕາມສັນຍາຂໍ້ຕົກລົງຕ້ອງໄດ້ມີການສິ້ນສຸດລົງ;
5. ເຫດການທີ່ບໍ່ສາມາດຄາດຄະເນໄດ້ຂອງສາເຫດສະເພາະຕົວພາຍໃນສັນຍາ;

6. ບັນດາເຫດການທີ່ກຳນົດຂອບໃນການຊົດເຊີຍຄ່າເສຍຫາຍຂອງແຕ່ລະພາກສ່ວນ (ເຊັ່ນ ການເກີດແຜ່ນດິນໄຫວ, ອັກຄີໄພ, ອຸທົກກະໄພ ແລະ ອື່ນໆ);
7. ການແກ້ໄຂຂໍ້ຂັດແຍ່ງ;
8. ວຽກທີ່ໄດ້ຮັບການມອບໝາຍ ຫຼື ບັນດາສິດໃນການໂອນຖ່າຍ;
9. ວຽກທີ່ໄດ້ຮັບການມອບໝາຍ, ສິດໃນການໂອນຖ່າຍ ຫຼື ການຍົກເວັ້ນ ທີ່ຮຽກຮ້ອງກ່ຽວກັບບັນດາກຳມະສິດການຄອບຄອງ ຮວມເຖິງບັນດາຊັບສິນທາງປັນຍາທີ່ເກີດຈາກຊັບພະຍາກອນທາງດ້ານພັນທຸກຳທີ່ໄດ້ຮັບພາຍໃຕ້ສັນຍາໃນການເຄື່ອນຍ້າຍວັດສະດຸພັນທຸກຳ;
10. ທາງເລືອກຂອງກົດໝາຍ;
11. ສາເຫດທີ່ເປັນການປົກປັກຮັກສາໃຫ້ເປັນຄວາມລັບ;
12. ຜູ້ຄ້ຳປະກັນ.

## *ເອກະສານຊ້ອນທ້າຍ II*
## *ຜົນປະໂຫຍດໃນຮູບແບບທີ່ເປັນເງິນຕາ ແລະ ບໍ່ເປັນເງິນຕາ*

**(ກ) ຜົນປະໂຫຍດໃນຮູບແບບທີ່ເປັນເງິນຕາສາມາດປະກອບດ້ວຍ, ແຕ່ບໍ່ໄດ້ຈຳກັດໄວ້ພຽງແຕ່:**

1. ຄ່າທຳນຽມໃນການເຂົ້າເຖິງ ໃນການເກັບແຕ່ລະຕົວຢ່າງ ຫຼື ໃນກໍລະນີອື່ນໆທີ່ຈຳເປັນ;
2. ການໃຊ້ຈ່າຍມອບເໝົາລວມຍອດ;
3. ການໃຊ້ຈ່າຍອັນອື່ນໆ;
4. ການໃຊ້ຈ່າຍຄ່າທຳນຽມຫຼວງ;
5. ການໃຊ້ຈ່າຍຄ່າການຖືສິດຄອບຄອງຜູກຂາດໃນກໍລະນີທີ່ຕ້ອງການດຳເນີນຜະລິດເປັນການຄ້າ;
6. ຄ່າທຳນຽມພິເສດທີ່ຕ້ອງຈ່າຍເປັນທຶນສົມທົບເຂົ້າກອງທຶນໃນການອະນຸລັກ ແລະ ການພັດທະນາແບບຍືນຍົງຂອງຊີວະນາໆພັນ;
7. ໃຊ້ຈ່າຍເປັນຄ່າເງິນເດືອນ ແລະ ຕາມພັນທະຂໍ້ຕົກລົງທີ່ໄດ້ເຫັນພ້ອມຕ້ອງກັນ;
8. ທຶນສຳລັບການຄົ້ນຄວ້າວິທະຍາສາດ;
9. ທຶນສົມທົບຮ່ວມກັນ;
10. ການໃຊ້ຈ່າຍຮ່ວມກັນໃນການມີສິດຄອບຄອງທາງດ້ານຊັບສິນທາງປັນຍາ.

**(ຂ) ຜົນປະໂຫຍດໃນຮູບແບບທີ່ບໍ່ເປັນເງິນຕາສາມາດປະກອບດ້ວຍ, ແຕ່ບໍ່ໄດ້ຈຳກັດໄວ້ພຽງແຕ່:**

1. ການແບ່ງປັນຜົນຂອງການຄົ້ນຄວ້າ ແລະ ການພັດທະນາ;

2. ການຮ່ວມມື, ການປະສານງານ ແລະ ການປະກອບສ່ວນໃນແຜນງານການຄົ້ນຄວ້າ ແລະ ພັດທະນາທາງດ້ານວິທະຍາສາດ, ຮວມທັງບັນດາກິດຈະກຳທີ່ກ່ຽວຂ້ອງກັບການຄົ້ນຄວ້າທາງດ້ານເຕັກໂນໂລຊີ ຊີວະພາບ, ຊຶ່ງດຳເນີນການພາຍໃນປະເທດທີ່ມີຄວາມອາດສາມາດສະໜອງທາງດ້ານຊັບພະຍາກອນພັນທຸກຳ;
3. ການເຂົ້າຮ່ວມໃນຂະບວນການພັດທະນາຜົນຜະລິດ;
4. ການຮ່ວມມື, ການປະສານງານ ແລະ ການປະກອບສ່ວນໃນຂົງເຂດການສຶກສາ ແລະ ການຝຶກອົບຮົມ;
5. ການບໍລິຫານຈັດການເພື່ອອຳນວຍຄວາມສະດວກໃນການອະນຸລັກຊັບພະຍາກອນພັນທຸກຳ ແບບຢູ່ນອກພື້ນທີ່ ແລະ ໃນການສ້າງຖານຂໍ້ມູນທາງດ້ານພັນທຸກຳ;
6. ການຖ່າຍທອດຄວາມຮູ້ ແລະ ເຕັກໂນໂລຊີແກ່ຜູ້ທີ່ສະໜອງຊັບພະຍາກອນພັນທຸກຳພາຍໃຕ້ເງື່ອນໄຂທີ່ເປັນທຳ ແລະ ເປັນທີ່ພໍໃຈ, ຊຶ່ງໄດ້ຮວມເອົາເງື່ອນໄຂທີ່ໄດ້ຕົກລົງເປັນເອກະສັນ ແລະ ຍອມຮັບທີ່ເຫັນພ້ອມຕ້ອງກັນທີ່ກ່ຽວກັບການນຳໃຊ້ຊັບພະຍາກອນພັນທຸກຳ, ຮວມເຖິງເຕັກໂນໂລຊີ ຊີວະພາບ ຫຼື ສິ່ງທີ່ກ່ຽວຂອງກັບການອະນຸລັກ ແລະ ພັດທະນາແບບຍືນຍົງຊີວະນາໆພັນ;
7. ການເສີມສ້າງຄວາມເຂັ້ມແຂງໃນການຖ່າຍທອດເຕັກໂນໂລຊີ;
8. ການເສີມສ້າງຄວາມອາດສາມາດຂອງສະຖາບັນການຄົ້ນຄວ້າ;
9. ການພັດທະນາຊັບພະຍາກອນມະນຸດ ແລະ ອຸປະກອນໃນການເສີມສ້າງຄວາມເຂັ້ມແຂງໃນການບໍລິຫານການຄຸ້ມຄອງ ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດບັນດາລະບຽບການ;
10. ການຈັດຕັ້ງການຝຶກອົບຮົມທີ່ກ່ຽວຂ້ອງກັບຊັບພະຍາກອນພັນທຸກຳ, ໂດຍການເຂົ້າຮ່ວມຢ່າງເຕັມສ່ວນຂອງບັນດາປະເທດທີ່ສະໜອງຊັບ

ພະຍາກອນພັນທຸກຳ ແລະ ໃນກໍລະນີທີ່ເປັນໄປໄດ້ພາຍໃນປະເທດໃດໜຶ່ງເປັນອັນສະເພາະ;

11. ການເຂົ້າເຖິງຂໍ້ມູນທາງດ້ານວິທະຍາສາດທີ່ກ່ຽວຂ້ອງກັບການອະນຸລັກ ແລະ ການພັດທະນາແບບຍືນຍົງຊີວະນາໆພັນ, ຮວມເຖິງການສຶກສາທີ່ກ່ຽວກັບການຈັດແບ່ງຊະນິດພັນ ແລະ ການຂຶ້ນທະບຽນທາງດ້ານຊີວະພາບ;
12. ປະກອບສ່ວນໃນການພັດທະນາເສດຖະກິດທ້ອງຖິ່ນ;
13. ການຄົ້ນຄວ້າທີ່ກ້າວໄປເຖິງບຸລິມະສິດທີ່ເປັນເປົ້າໝາຍຄວາມຕ້ອງການອັນຈຳເປັນ, ເຊັ່ນທາງດ້ານສຸຂະພາບ ແລະ ຄວາມໝັ້ນຄົງດ້ານສະບຽງອາຫານ, ໂດຍຄຳນຶງເຖິງຄວາມຕ້ອງການພາຍໃນທີ່ຢາກນຳໃຊ້ຊັບພະຍາກອນພັນທຸກຳ ຂອງບັນດາປະເທດທີ່ໄດ້ຕອບສະໜອງຊັບພະຍາກອນພັນທຸກຳ;
14. ການຮ່ວມສຳພັນຂອງບັນດາສະຖາບັນຄົ້ນຄວ້າ ແລະ ທາງດ້ານວິຊາການທີ່ສາມາດເລີ່ມຕົ້ນຈາກຂໍ້ຕົກລົງໃນການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ແລະ ກິດຈະກຳຂອງການຮ່ວມມືໃນລວງເລິກ;
15. ຜົນປະໂຫຍດຈາກຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ການດຳລົງຊີວິດ;
16. ການຮັບຮູ້ຈາກສັງຄົມ;
17. ການມີສິດຮ່ວມໃນການຄອບຄອງສິດທິບັດ ແລະ ກ່ຽວພັນກັບສິດທິຊັບສິນທາງປັນຍາ.

## ພາກທີ IV
## ກົນໄກສຳລັບການສຶກສາ, ສ້າງຈິດສຳນຶກ ແລະ ມີສ່ວນຮ່ວມຂອງມວນຊົນ

### 4.1 ຈຸດປະສົງລວມ, ຫຼັກການ ແລະ ແນວຄວາມຄິດຂອງການສຶກສາ, ສ້າງຈິດສຳນຶກ ແລະ ມີສ່ວນຮ່ວມຂອງມວນຊົນກ່ຽວກັບຄວາມຫຼາກຫຼາຍດ້ານຊີວະພາບ ແລະ ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ຂອງ ສປປ ລາວ

#### 4.1.1 ຈຸດປະສົງລວມຂອງການສຶກສາ, ສ້າງຈິດສຳນຶກ ແລະ ມີສ່ວນຮ່ວມຂອງມວນຊົນ

ເຮັດໃຫ້ ສປປ ລາວ ມີຈິດສຳນຶກກ່ຽວກັບ "ຄວາມຫຼາກຫຼາຍດ້ານຊີວະພາບ" ແລະ ເຮັດໃຫ້ມວນຊົນມີ ອົງຄວາມຮູ້ ແລະ ທັກສະໃນການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ, ທີ່ຮວມເອົາຕາມຄວາມເໝາະສົມ ດ້ວຍການເຂົ້າເຖິງຊັບພະຍາກອນພັນທຸກຳ ແລະ ດ້ວຍການຖ່າຍທອດເຕັກໂນໂລຊີທີ່ເໝາະສົມຂອງບັນດາເຕັກໂນໂລຊີທີ່ກ່ຽວຂ້ອງ, ໂດຍເອົາໃຈໃສ່ເຖິງບັນດາສິດທິທັງໝົດເໜືອຊັບພະຍາກອນເຫຼົ່ານັ້ນ ພ້ອມດ້ວຍເຕັກໂນໂລຊີ ແລະ ດ້ວຍງົບປະມານທີ່ເໝາະສົມ ຈະເປັນການປະກອບສ່ວນເຂົ້າໃນການອະນຸລັກຊີວະນາໆພັນ ແລະ ການນຳໃຊ້ແບບຍືນຍົງ ຂອງອົງປະກອບຂອງສິ່ງເຫຼົ່ານັ້ນ.

#### 4.1.2 ຫຼັກການອັນສຳຄັນຂອງການສຶກສາ, ສ້າງຈິດສຳນຶກ ແລະ ມີສ່ວນຮ່ວມຂອງມວນຊົນກ່ຽວກັບຄວາມຫຼາກຫຼາຍດ້ານຊີວະພາບ ແລະ

**ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ**

ເພື່ອບັນລຸເປົ້າໝາຍ ແລະ ຈຸດປະສົງທີ່ກ່າວເຖິງມາຂ້າງເທິງນັ້ນ, ການສຶກສາ, ສ້າງຈິດສຳນຶກ ແລະ ມີສ່ວນຮ່ວມຂອງມວນຊົນກ່ຽວກັບຄວາມຫຼາກຫຼາຍດ້ານຊີວະພາບ ແລະ ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ມັນບໍ່ພຽງແຕ່ຕ້ອງໄດ້ລະບຸເຂົ້າໃນການເຄື່ອນໄຫວທີ່ມີການຈັດຕັ້ງເປັນລະບົບ ເຊັ່ນ: ໃນໂຮງຮຽນ, ຫຼັກສູດການຝຶກອົບຮົມ, ໂຄງການ, ແຜນງານອົງການຈັດຕັ້ງມະຫາຊົນ, ດັ່ງດຽວກັນນັ້ນ ຕ້ອງໄດ້ສົ່ງເສີມເຂົ້າໃນການເຄື່ອນໄຫວໃນບັນດາກິດຈະກຳປະຈຳວັນຂອງບຸກຄົນເຊັ່ນ: ຢູ່ເຮືອນຊານໃນຊີວິດປະຈຳວັນ ແລະ ໃນສະຖານທີ່ການເຮັດວຽກ. ດັ່ງນັ້ນໝາຍວ່າ ການສຶກສາ, ສ້າງຈິດສຳນຶກ ແລະ ມີສ່ວນຮ່ວມຂອງມວນຊົນກ່ຽວກັບຄວາມຫຼາກຫຼາຍດ້ານຊີວະພາບ ແລະ ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ບໍ່ແມ່ນແຕ່ເລື່ອງທີ່ຕ້ອງຮຽນ ແລະ ສິດສອນເທົ່ານັ້ນ ແຕ່ວ່າມັນສິ່ງທີ່ດຳເນີນປົກກະຕິໃນຊີວິດ, ເພື່ອໃຫ້ຂະບວນການທັງໝົດທີ່ໄດ້ກ່າວຜ່ານມາໃຫ້ສາມາດບັນລຸຜົນສຳເລັດໄດ້, ຈັດຕັ້ງປະຕິບັດໄດ້ດີກວ່າຈຳຕ້ອງໄດ້ວາງຫຼັກການກ່ຽວກັບການສຶກສາ, ສ້າງຈິດສຳນຶກ ແລະ ມີສ່ວນຮ່ວມຂອງມວນຊົນກ່ຽວກັບຄວາມຫຼາກຫຼາຍດ້ານຊີວະພາບ ແລະ ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດຈາກການນຳໃຊ້ຊັບພະຍາກອນພັນທຸກຳ ໄວ້ດັ່ງລຸ່ມນີ້:

1. ການສຶກສາ, ສ້າງຈິດສຳນຶກ ແລະ ມີສ່ວນຮ່ວມຂອງມວນຊົນກ່ຽວກັບຄວາມຫຼາກຫຼາຍດ້ານຊີວະພາບ ແລະ ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ຈະເປີດກວ້າງໃຫ້ໝົດທຸກໆຄົນ ຍ້ອນບັນຫາສະພາບແວດ

ລ້ອມແມ່ນມີຄວາມສຳຄັນ ແລະ ກ່ຽວພັນກັບທຸກໆຄົນ, ເພາະສະນັ້ນການສຶກສາ, ສ້າງຈິດສຳນຶກ ແລະ ມີສ່ວນຮ່ວມຂອງມວນຊົນຈຶ່ງໄດ້ບໍ່ເຈາະຈົງໃສ່ຄົນ ຫຼື ຄົນກຸ່ມໃດກຸ່ມໜຶ່ງຢູ່ໃນສັງຄົມເທົ່ານັ້ນ, ມັນເປັນໜ້າທີ່ຂອງທຸກໆຊັ້ນຄົນ ລວມທັງພາກລັດຖະບານ, ລັດຖະກອນ, ກຳມະກອນ, ນັກຮຽນຮູ້ປັນຍາຊົນ, ນັກທຸລະກິດ ແລະ ຕະຫຼອດເຖິງປະຊາຊົນບັນດາເຜົ່າໃນທົ່ວປະເທດ;

2. ການສຶກສາ, ສ້າງຈິດສຳນຶກ ແລະ ມີສ່ວນຮ່ວມຂອງມວນຊົນກ່ຽວກັບຄວາມຫຼາກຫຼາຍດ້ານຊີວະພາບ ແລະ ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ຕ້ອງສ້າງເປັນຂະບວນການທີ່ດຳເນີນງານໄປໃນໄລຍະຍາວ ແລະ ຕໍ່ເນື່ອງ. ຂໍ້ມູນຂ່າວສານທີ່ກ່ຽວຂ້ອງກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ຕ້ອງມີການປັບປຸງ ແລະ ປ່ຽນແປງໄປເລື້ອຍໆ, ໂດຍຜ່ານປະສົບການ ແລະ ບົດຮຽນທີ່ຜ່ານມາ. ຜ່ານຂະບວນການດັ່ງກ່າວມັນໂອກາດໃນການປັບປຸງເຕັກນັກວິທະຍາການ ຕະຫຼອດເຖິງຄວາມຮູ້ ແລະ ບັນດາທັກສະເພື່ອນຳໃຊ້ເຂົ້າໃນການແກ້ບັນຫາການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ທີ່ມີຄວາມທ້າທາຍຢູ່. ສະນັ້ນ, ເພື່ອບັນລຸໄດ້ເປົ້າໝາຍນີ້, ທຸກໆຄົນມີຄວາມຈຳເປັນຕ້ອງສືບຕໍ່ປັບປຸງຄວາມຮູ້ທັດສະນະຄະຕິ ແລະ ທັກສະຢ່າງເປັນປະຈຳ;

3. ການສຶກສາພາຍໃນລະບົບ ແລະ ນອກລະບົບໂຮງຮຽນ ຕ້ອງມີການວາງແຜນພັດທະນາຮ່ວມກັນ ເພື່ອປະກອບເພີ່ມເຕີມເຊິ່ງກັນ ແລະ ກັນ, ໝາຍຄວາມວ່າຂໍ້ມູນຂ່າວສານກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນ

ພັນທຸກຳ ແມ່ນຈາກສອງທາງໃຫຍ່ໆຄື: ການສຶກສາໃນລະບົບ ແລະ ນອກລະບົບໂຮງຮຽນ. ເຖິງວ່າບັນດາຄວາມຮູ້ທີ່ໄດ້ໃນວຽກງານການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ບາງອັນແມ່ນໄດ້ຮັບຈາກການສຶກສາໃນລະບົບເປັນສ່ວນໃຫຍ່ກໍຕາມ, ແຕ່ມີບາງອັນພັດໄດ້ມາຈາກການສຶກສານອກລະບົບໂຮງຮຽນ. ສະນັ້ນ, ການປະສົມປະສານລະຫວ່າງການສຶກສາໃນລະບົບ ແລະ ນອກລະບົບໂຮງຮຽນ ຈະເຮັດໃຫ້ມີຄວາມສົມບູນ, ສະໜັບສະໜູນເຊິ່ງກັນ ແລະ ກັນ ແລະ ປັບປຸງເນື້ອ ໃນໃຫ້ມີຄວາມອາດສາມາດຂະຫຍາຍຕົວອອກຢ່າງກວ້າງຂວາງ, ເຊິ່ງສາມາດຈັດຕັ້ງປະຕິບັດໄດ້ຢ່າງຕໍ່ເນື່ອງ ແລະ ສາມາດເຊື່ອມຕໍ່ກັບວຽກງານອື່ນໆໄດ້ ເປັນຢ່າງດີ;

4. ຕ້ອງນຳໃຊ້ວິທີການມີສ່ວນຮ່ວມເຂົ້າໃນຂະບວນການວາງແຜນ ແລະ ຈັດຕັ້ງປະຕິບັດກິດຈະກຳການສຶກສາ, ສ້າງຈິດສຳນຶກ ແລະ ມີສ່ວນຮ່ວມຂອງມວນຊົນກ່ຽວກັບຄວາມຫຼາກຫຼາຍດ້ານຊີວະພາບ ແລະ ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ. ໂດຍລິເລີ່ມຈາກການຍົກໃຫ້ເຫັນຜົນປະໂຫຍດທາງກົງ ແລະ ທາງອ້ອມໃຫ້ແກ່ຜູ້ຮຽນຮູ້ມີຄວາມສົນໃຈເປັນພິເສດ. ການສຶກສາ, ສ້າງຈິດສຳນຶກ ແລະ ມີສ່ວນຮ່ວມຂອງມວນຊົນ ມີການກ່ຽວພັນກັບທຸກໆຄົນໃນສັງຄົມ, ການນຳເອົາແນວຄວາມຄິດຄວາມເຫັນຂອງຫຼາຍຄົນມາພິຈາລະນາເຂົ້າໃນການວາງແຜນ ແລະ ຈັດຕັ້ງປະຕິບັດຈະມີຄວາມເໝາະສົມກັບສິດຜົນປະໂຫຍດທີ່ເຂົາເຈົ້າຈະໄດ້ຮັບ ເຊິ່ງຈະເຮັດໃຫ້ບັນດາແຜນການຈັດຕັ້ງປະຕິບັດ ບັນລຸເປົ້າໝາຍໄດ້ດີກວ່າ;

5. ການສຶກສາ, ສ້າງຈິດສຳນຶກ ແລະ ມີສ່ວນຮ່ວມຂອງມວນຊົນກ່ຽວກັບຄວາມຫຼາກຫຼາຍດ້ານຊີວະພາບ ແລະ ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດຈາກການນຳໃຊ້ຊັບພະຍາກອນພັນທຸກຳ ຕ້ອງລິເລີ່ມສ້າງຂຶ້ນແຕ່ນ້ອຍຫາໃຫຍ່ ບົນພື້ນຖານທ່າແຮງຂອງຊຸມຊົນທີ່ມີຢູ່. ການນຳໃຊ້ບັນດາສະຖາບັນໃນຊຸມຊົນ ແມ່ນເປັນສະຖານທີ່ຊຸກຍູ້ ແລະ ສະໜັບສະໜູນກິດຈະກຳຂອງການສຶກສາ, ສ້າງຈິດສຳນຶກ ແລະ ມີສ່ວນຮ່ວມຂອງມວນຊົນໃນການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ. ນອກຈາກນັ້ນ, ຕ້ອງເສີມຂະຫຍາຍ ແລະ ປັບປຸງຈາກສິ່ງທີ່ມີຢູ່ແລ້ວເປັນຕົ້ນແມ່ນ ຫ້ອງການປົກຄອງບ້ານ, ຊາວໜຸ່ມ, ແມ່ຍິງ, ແນວໂຮມ, ໂຮງຮຽນ, ວັດວາອາຮາມ ແລະ ສູນວັດທະນະທຳ, ເຊິ່ງເປັນສ່ວນທີ່ສຳຄັນອີກອັນໜຶ່ງໃນການຈັດຕັ້ງປະຕິບັດກິດຈະກຳຂອງການສຶກສາ, ສ້າງຈິດສຳນຶກ ແລະ ມີສ່ວນຮ່ວມຂອງມວນຊົນກ່ຽວກັບຄວາມຫຼາກຫຼາຍດ້ານຊີວະພາບ ແລະ ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະ ຍາກອນພັນທຸກຳໄດ້ເຊັ່ນກັນ;
6. ພວກເຮົາຕ້ອງໄດ້ເລືອກເຟັ້ນ ແລະ ວິໄຈບັນດາບັນຫາທີ່ກ່ຽວຂ້ອງ, ເພື່ອກຳນົດຄຸນລັກສະນະ ແລະ ຄວາມຕ້ອງການຂອງກຸ່ມເປົ້າໝາຍທີ່ແຕກຕ່າງກັນ ເພື່ອແນໃສ່ການເສີມຂະຫຍາຍ ແລະ ການຮັກສາຜົນປະໂຫຍດອັນເປັນພື້ນຖານ, ຄວາມຮູ້, ວັດທະນະທຳ ແລະ ຮີດຄອງປະເພນີທີ່ເຄີຍປະຕິບັດມາ ໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການ ຂອງກຸ່ມເປົ້າໝາຍທີ່ແຕກຕ່າງກັນ ເພື່ອໃຫ້ເຂົາເຈົ້າເປັນເຈົ້າການໃນບັນດາກິດຈະກຳທີ່ກ່ຽວກັບການສຶກສາ, ສ້າງຈິດສຳນຶກ ແລະ ມີສ່ວນຮ່ວມຂອງມວນຊົນກ່ຽວກັບຄວາມຫຼາກຫຼາຍດ້ານຊີວະ

ພາບ ແລະ ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ແລະ ຍັງເປັນການສົ່ງເສີມມູນເຊື້ອອັນດີງາມທີ່ຢູ່ພາຍໃນທ້ອງຖິ່ນຂອງເຂົາເຈົ້າ;

7. ຕ້ອງນຳໃຊ້ຫຼັກສູດ ແລະ ວິທີການຮຽນຮູ້ ພ້ອມທັງເນື້ອໃນທີ່ແຕກຕ່າງກັນ ເຂົ້າໃນການສ້າງການສຶກສາ, ສ້າງຈິດສຳນຶກ ແລະ ມີສ່ວນຮ່ວມຂອງມວນຊົນກ່ຽວກັບຄວາມຫຼາກຫຼາຍດ້ານຊີວະພາບ ແລະ ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ໃນສະພາບເງື່ອນໄຂທີ່ຕ່າງກັນເຊັ່ນ: ຄອບຄົວ, ຊຸມຊົນ, ໂຮງຮຽນ, ບ່ອນເຮັດວຽກ, ວັດວາອາຮາມ, ສື່ມວນຊົນ, ສະຖານທີ່ການພັກຜ່ອນ ແລະ ອື່ນໆ. ບັນດາກິດຈະກຳຕ່າງໆ ທີ່ໄດ້ຖືກອອກແບບ ແລະ ສ້າງຂຶ້ນມາແລ້ວນັ້ນຕ້ອງໃຫ້ສາມາດນຳໃຊ້ເປັນເປົ້າໝາຍໃນກໍລະນີການສຶກສາ. ເນື້ອໃນອົງຄວາມຮູ້ ແລະ ວິທີການຕ່າງໆທີ່ນຳໃຊ້ໃນຫຼັກສູດການສຶກສາ, ສ້າງຈິດສຳນຶກ ແລະ ມີສ່ວນຮ່ວມຂອງມວນຊົນກ່ຽວກັບຄວາມຫຼາກຫຼາຍດ້ານຊີວະພາບ ແລະ ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳນັ້ນຕ້ອງສອດຄ່ອງກັບລະດັບກຸ່ມຄົນ ແລະ ອົງການຈັດຕັ້ງຕ່າງໆໃນຫຼາຍໆຂະແໜງການ;

8. ການສຶກສາ, ສ້າງຈິດສຳນຶກ ແລະ ມີສ່ວນຮ່ວມຂອງມວນຊົນກ່ຽວກັບຄວາມຫຼາກຫຼາຍດ້ານຊີວະພາບ ແລະ ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ຕ້ອງພົວພັນກັບການພັດທະນາໃນຂະແໜງການວຽກງານຂອງຕົນ ໂດຍຈັດສັນທາງເລືອກທີ່ເໝາະສົມ ໃນການນຳໃຊ້ຊັບພະຍາກອນທຳມະຊາດ, ບັນດາສິ່ງເອື້ອອຳນວຍຄວາມສະດວກທີ່ສອດ

ຄ່ອງກັບໂຄງລ່າງ ພື້ນຖານ, ຕ້ອງນຳໃຊ້ບົດຮຽນ ແລະ ປະສົບປະການທີ່ຜ່ານມາ. ຍ້ອນແນວນັ້ນ, ການພັດທະນາໄດ້ມີໂອກາດເລືອກເຟັ້ນ ແລະ ມີການຈັດສັນອາຊີບໃຫ້ແກ່ປະຊາຊົນຊາວຊົນນະບົດ ທີ່ດ້ອຍໂອກາດໄດ້ຢ່າງເໝາະສົມ;

9. ການຕິດຕາມ ແລະ ປະເມີນຜົນ ແມ່ນຂໍກຸນແຈທີ່ສຳຄັນໃນການຕີລາຄາ, ປັບປຸງ ແລະ ສາມາດຂະຫຍາຍບັນດາແນວຄວາມຄິດລິເລີ່ມຂອງການສຶກສາ, ສ້າງຈິດສຳນຶກ ແລະ ມີສ່ວນຮ່ວມຂອງມວນຊົນກ່ຽວກັບຄວາມຫຼາກຫຼາຍດ້ານຊີວະພາບ ແລະ ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ. ການກວດກາຄືນໝາກຜົນ ທີ່ໄດ້ຮັບຈາກການສຶກສາ, ສ້າງຈິດສຳນຶກ ແລະ ມີສ່ວນຮ່ວມຂອງມວນຊົນ ແມ່ນເພື່ອແນໃສ່ຖອດຖອນບົດຮຽນ ແລະ ປັບປຸງແກ້ໄຂເຮັດໃຫ້ທິດສະດີ ແລະ ການຈັດຕັ້ງປະຕິບັດ ວຽກງານຕົວຈິງກ່ຽວກັບວຽກດັ່ງກ່າວນັ້ນໃຫ້ມີຄວາມສົມບູນຂຶ້ນ ແລະ ມີຄວາມສອດຄ່ອງກົມກຽວກັນ.

## 4.2 ລະບົບທີ່ມີກ່ຽວກັບຂອງການສຶກສາ, ສ້າງຈິດສຳນຶກ ແລະ ມີສ່ວນຮ່ວມຂອງມວນຊົນ ທາງດ້ານຊີວະນາໆພັນ

ບົນພື້ນຖານຮ່າງຍຸດທະສາດແຫ່ງຊາດທາງດ້ານຊີວະນາໆພັນ ແລະ ແຜນດຳເນີນງານແຕ່ນີ້ ຮອດປີ 2020, ການສຶກສາ, ສ້າງຈິດສຳນຶກ ແລະ ມີສ່ວນຮ່ວມຂອງມວນຊົນທາງດ້ານຊີວະນາໆພັນ ກໍຄືດ້ານສິ່ງແວດລ້ອມ, ແມ່ນມີຄວາມຈຳເປັນໃນການສົ່ງເສີມ ເພື່ອເຮັດໃຫ້ປະຊາຊົນບັນດາເຜົ່າ, ຂະແໜງການຈັດຕັ້ງພາກລັດ, ພາກເອກະຊົນ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ ແລະ ພາກສ່ວນຕ່າງໆໃນສັງຄົມໃຫ້ມີຄວາມຮູ້, ຄວາມເຂົ້າໃຈຫຼາຍຂຶ້ນກ່ຽວກັບຄວາມໝາຍຄວາມສຳຄັນຂອງສິ່ງແວດລ້ອມ ກໍຄື

ຊີວະນາໆພັນ ເພື່ອຍາດແຍ່ງການເຂົ້າຮ່ວມໃນການຄຸ້ມຄອງ, ການອະນຸລັກ ແລະ ການນຳໃຊ້ແບບຍືນຍົງ.

ຢູ່ ສປປ ລາວ ວຽກງານການສຶກສາດ້ານສິ່ງແວດລ້ອມກໍຄືດ້ານຊີວະນາໆພັນ ໄດ້ມີການເຄື່ອນໄຫວໃນຮູບການສິດສອນໃນໂຮງຮຽນສາມັນສຶກສາ (ໃນລະບົບໂຮງຮຽນ ແລະ ນອກລະບົບໂຮງຮຽນ) ແລະ ໂຮງຮຽນວິຊາສະເພາະຕ່າງໆ. ໂດຍມີຫຼາຍພາກສ່ວນຮ່ວມຈັດຕັ້ງປະຕິບັດ-ຮັບຜິດຊອບ ລວມທັງການສ້າງຫຼັກສູດສິດສອນ ແລະ ການຜະລິດອຸປະກອນຮັບໃຊ້ການສິດສອນ ທີ່ບໍ່ທັນເປັນເອກະພາບກັນ. ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ, ມະຫາວິທະຍາໄລແຫ່ງຊາດລາວ ແລະ ບັນດາສະຖາບັນຕ່າງໆກໍໄດ້ມີການຮ່ວມມືກັນໃນລະດັບດີສົມຄວນ ເພື່ອດຳເນີນການຄົ້ນຄວ້າສ້າງຫຼັກສູດການສຶກສາດ້ານຊີວະນາໆພັນ ຕິດພັນກັບການສຶກສາສິ່ງແວດລ້ອມ, ເປັນຕົ້ນຄະນະວິທະຍາສາດທຳມະຊາດ ຂອງມະຫາວິທະຍາໄລແຫ່ງຊາດ ກໍໄດ້ມີການປັບປຸງຫຼັກສູດໃນການສອນ ກ່ຽວກັບຊີວະນາໆພັນທີ່ມີຢູ່ແລ້ວ ໃຫ້ດີຂຶ້ນ ເພື່ອຕອບສະໜອງຄວາມຕ້ອງການໃນການສິດສອນ ແລະ ນຳໃຊ້ສຳລັບນັກວິຊາການທີ່ກ່ຽວຂ້ອງ.

ໃນວຽກງານການສ້າງຈິດສຳນຶກດ້ານສິ່ງແວດລ້ອມ ແລະ ຊີວະນາໆພັນ ກໍໄດ້ມີການເຄື່ອນໄຫວໃນຮູບແບບການຈັດຕັ້ງກອງປະຊຸມເຜີຍແຜ່, ບັນຍາຍ, ສ້າງຂະບວນການ ແລະ ການໂຄສະນາ ເຜີຍແຜ່ໃນສື່ສານມວນຊົນຕ່າງໆ ເຊັ່ນ: ໜັງສືພິມ, ວາລະສານ, ລາຍການວິທະຍຸ, ໂທລະພາບ ແລະ ອື່ນໆ. ໃນວຽກງານການຝຶກອົບຮົມເພື່ອຍົກລະດັບພະນັກງານດ້ານຊີວະນາໆພັນ ກໍໄດ້ດຳເນີນໂດຍບັນດາກະຊວງຂະແໜງການ ແລະ ສະຖາບັນຕ່າງໆ, ຊຶ່ງໄດ້ມີເປົ້າໝາຍໃນການຮັບໃຊ້ຈຸດປະສົງຂອງໃຜລາວ. ຍົກ

ຕົວຢ່າງແມ່ນ ກະຊວງກະສິກຳ ແລະ ປ່າໄມ້ ກໍດຳເນີນການຝຶກອົບຮົມກ່ຽວກັບດ້ານຊີວະນາໆພັນ ເຊັ່ນ: ການສຳຫຼວດສັດ ແລະ ພືດປ່າ ແລະ ການຄຸ້ມຄອງປ່າສະຫງວນ; ໃນຂະນະດຽວກັນກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ແລະ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ກໍໄດ້ດຳເນີນການຝຶກອົບຮົມກ່ຽວກັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ການມີສ່ວນຮ່ວມຂອງມວນຊົນ ແລະ ການສ້າງຈິດສຳນຶກມວນຊົນໃນວຽກງານຄຸ້ມຄອງຊີວະນາໆພັນ ແລະ ຂະແໜງການອື່ນໆແຕ່ສູນກາງຈົນຮອດທ້ອງຖິ່ນ ກໍໄດ້ຈັດຝຶກອົບຮົມດ້ານນີ້ເຊັ່ນກັນ ຕາມພາລະບົດບາດຂອງໃຜລາວ. ຜ່ານການເຄື່ອນໄຫວມາຮອດປະຈຸບັນສາມາດ ສະຫຼຸບດ້ານດີດ້ານອ່ອນ ໄດ້ດັ່ງນີ້:

- **ຂໍ້ຄົງຄ້າງ**

1. ນະໂຍບາຍພິເສດໃນການກະຕຸກຊຸກຍູ້ພະນັກງານທີ່ເຮັດວຽກຢູ່ເຂດຫ່າງໄກສອກຫຼີກຍັງເຮັດບໍ່ທັນໄດ້ດີ;
2. ເຄື່ອງມື ແລະ ອຸປະກອນຮັບໃຊ້ໃນການສຶກສາ ແລະ ການເຜີຍແຜ່ບໍ່ທັນພຽງພໍ;
3. ຂະບວນການທີ່ເໝາະສົມເພື່ອສ້າງຄວາມເຂົ້າໃຈກ່ຽວກັບຄວາມສຳຄັນດ້ານຊີວະນາໆພັນ ໃນຂະແໜງການຕ່າງໆ ແລະ ຊຸມຊົນທ້ອງຖິ່ນຍັງເຮັດບໍ່ທັນກວ້າງຂວາງ, ພຽງພໍ ແລະ ຕໍ່ເນື່ອງ;
4. ພະນັກງານທີ່ມີຄວາມຮູ້ຄວາມສາມາດ ແລະ ປະສົບການຮວມທັງອຸປະກອນເຄື່ອງມື ແລະ ເຕັກນິກໃນດ້ານນີ້ຍັງບໍ່ພຽງພໍ;
5. ລະດັບການສຶກສາຂອງປະຊາຊົນ ໃນເຂດຊົນນະບົດຍັງບໍ່ທັນສູງ ແລະ ຈຳນວນໜຶ່ງກໍຍັງກືກໜັງສື;

6. ງົບປະມານສະໜັບສະໜູນວຽກງານດ້ານການສຶກສາ, ສ້າງຈິດສຳນຶກ ແລະ ມີສ່ວນຮ່ວມຂອງສັງຄົມທາງດ້ານສິ່ງແວລ້ອມ ແມ່ນຍັງບໍ່ທັນພຽງພໍ;
7. ປະຊາຊົນສ່ວນໃຫຍ່ບໍ່ມັກອ່ານ;
8. ການປະສານງານລະຫວ່າງຂະແໜງການບໍ່ທັນໄດ້ດີ;

➢ **ທາງເລືອກໃນການແກ້ໄຂບັນຫາ:**

1. ຊຸກຍູ້, ສົ່ງເສີມ ແລະ ສະໜັບສະໜູນ ໃນວຽກງານດັ່ງກ່າວດ້ານຄວາມຮູ້, ຄວາມສຳຄັນໃນການອະນຸລັກ ແລະ ການນຳໃຊ້ຊີວະນາໆພັນແບບຍືນຍົງ;
2. ເພີ່ມທະວີວຽກງານດັ່ງກ່າວສຳລັບພາກລັດ, ພາກເອກະຊົນ ແລະມວນຊົນທົ່ວໄປ;
3. ປັບປຸງວິທີການສື່ສານໃນລະຫວ່າງກຸ່ມເປົ້າໝາຍ;
4. ເສີມສ້າງຄວາມອາດສາມາດໃນການຜັນຂະຫຍາຍກ່ຽວກັບຫຼັກການ ແລະ ເປົ້າໝາຍຂອງສົນທິສັນຍາວ່າດ້ວຍຊີວະນາໆພັນ;
5. ຕອບສະໜອງຄວາມຮູ້ກ່ຽວກັບສະພາບການຂອງຊີວະນາໆພັນແກ່ມວນຊົນຢ່າງກວ້າງຂວາງ;
6. ສົ່ງເສີມການສ້າງຈິດສຳນຶກໃຫ້ແກ່ອະນຸຊົນ ແລະ ເຍົາວະຊົນຢ່າງທົ່ວເຖິງທັງໃນ ແລະ ນອກລະບົບ;
7. ສົ່ງເສີມບົດບາດຍິງ-ຊາຍ;
8. ຍົກລະດັບການສຶກສາໃຫ້ປະຊາຊົນໃນເຂດຫ່າງໄກສອກຫຼີກ;
9. ຈັດສັນງົບປະມານໃສ່ວຽກງານການສຶກສາ ແລະ ສ້າງຈິດສຳນຶກຂອງມວນຊົນ;
10. ປັບປຸງຂອດປະສານງານລະຫວ່າງຂະແໜງການ.

## 4.3 ແຜນງານການສຶກສາ, ສ້າງຈິດສຳນຶກ ແລະ ມີສ່ວນຮ່ວມຂອງມວນຊົນກ່ຽວກັບຄວາມຫຼາກຫຼາຍດ້ານຊີວະພາບ ແລະ ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ

ອີງຕາມອະນຸສັນຍານາໂກຢາວ່າດ້ວຍ ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ, ອີງຕາມລະບົບການສຶກສາ, ສ້າງຈິດສຳນຶກ ແລະ ມີສ່ວນຮ່ວມຂອງມວນຊົນດ້ານສິ່ງແວດລ້ອມ ກໍຄືດ້ານຊີວະນາໆພັນ ດັ່ງທີ່ໄດ້ກ່າວຜ່ານມາຂ້າງເທິງນີ້, ອີງຕາມກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ, ຍຸດທະສາດການສຶກສາ, ການສ້າງຈິດສຳນຶກດ້ານສິ່ງແວດລ້ອມແຕ່ນີ້ຮອດປີ 2020, 2010 ແລະ ແຜນດຳເນີນງານດ້ານສິ່ງແວດລ້ອມ 5 ປີ (2001-2005), ຍຸດທະສາດຊີວະນາໆພັນແຫ່ງຊາດແຕ່ນີ້ຮອດປີ 2020, 2010 ແລະ ແຜນດຳເນີນງານດ້ານຊີວະນາໆພັນ 5 ປີ (2001-2005). ເຫັນວ່າການສຶກສາ, ສ້າງຈິດສຳນຶກ ແລະ ມີສ່ວນຮ່ວມຂອງມວນຊົນກ່ຽວກັບຄວາມຫຼາກຫຼາຍດ້ານຊີວະພາບ ແລະ ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດຈາກການນຳໃຊ້ຊັບພະຍາກອນພັນທຸກຳ, ຄວນປະກອບເຂົ້າເປັນພາກສ່ວນໜຶ່ງຂອງລະບົບທີ່ມີຢູ່ແລ້ວ ກ່ຽວກັບວຽກງານດ້ານສິ່ງແວດລ້ອມກໍຄືດ້ານຊີວະນາໆພັນ ທີ່ໄດ້ຮັບການພັດທະນາເປັນຢ່າງດີແລ້ວ, ຊຶ່ງເປັນຕົ້ນແມ່ນລະບົບການຝຶກອົບຮົມດ້ານສິ່ງແວດລ້ອມ, ລະບົບການສຶກສາສິ່ງແວດລ້ອມ, ລະບົບການສ້າງຈິດສຳນຶກດ້ານສິ່ງແວດ ລ້ອມ, ລະບົບການມີສ່ວນຮ່ວມຂອງມວນຊົນ ແລະ ການສ້າງຕັ້ງເຄືອຂ່າຍດ້ານສິ່ງແວດລ້ອມ.

ເພື່ອສົ່ງເສີມ ແລະ ອຳນວຍຄວາມສະດວກເຮັດໃຫ້ການສຶກສາ, ສ້າງຈິດສຳນຶກ ແລະ ມີສ່ວນຮ່ວມຂອງມວນຊົນກ່ຽວກັບຄວາມຫຼາກຫຼາຍດ້ານຊີວະພາບ ແລະ ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ

ຈາກການນຳໃຊ້ຊັບພະຍາກອນພັນທຸກຳ, ວິໄສທັດຂອງລະບົບການສຶກສາ, ສ້າງຈິດສຳນຶກ ແລະ ມີສ່ວນຮ່ວມຂອງມວນຊົນ ດັ່ງທີ່ໄດ້ກ່າວມາຂ້າງເທິງນີ້ ສາມາດສຳເລັດຜົນໄດ້ຕາມເປົ້າໝາຍ, ສປປ ລາວ ຕ້ອງໄດ້ສຸມໃສ່ວາງ 5 ແຜນງານ ເພື່ອພັດທະນາດັ່ງລຸ່ມນີ້:

### 4.3.1 ແຜນງານທີ 1: ນຳເອົາກິດຈະກຳການສຶກສາກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ເຂົ້າໃນລະບົບການສຶກສາສາມັນ (ໃນທຸກລະດັບທັງໃນລະບົບ ແລະ ນອກລະບົບໂຮງຮຽນ) ເປັນພາກສ່ວນໜຶ່ງຂອງຫຼັກສູດການສຶກສາດ້ານສິ່ງແວດລ້ອມ:

ການສຶກສາກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ແມ່ນພາກສ່ວນໜຶ່ງໃນລະບົບການສຶກສາດ້ານສິ່ງແວດລ້ອມທັງໃນລະບົບ ແລະ ນອກລະບົບໂຮງຮຽນດັ່ງນີ້:

**(ກ) ການສຶກສາໃນລະບົບໂຮງຮຽນ**

**ຈຸດປະສົງ 1:**

**ເພື່ອຕີລາຄາລະດັບ ແລະ ສະພາບການສຶກສາກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ຂອງການສຶກສາໃນລະບົບໂຮງຮຽນທົ່ວປະເທດ**

**ກິດຈະກຳ:**

1. ດຳເນີນການສຳຫຼວດຂໍ້ມູນຂ່າວສານການສຶກສາກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ຂອງການສຶກສາໃນລະບົບໂຮງຮຽນທົ່ວປະເທດ;

2. ດຳເນີນການວິເຄາະ ແລະ ຕີລາຄາບັນດາຂໍ້ມູນຂ່າວສານການສຶກສາກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດຈາກການນຳໃຊ້ຊັບພະຍາກອນພັນທຸກຳ ທີ່ເກັບມາໄດ້ຈາກການສຶກສາໃນລະບົບໂຮງຮຽນທົ່ວປະເທດ;
3. ສັງລວມເປັນບົດລາຍງານສະພາບການສຶກສາ ກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ຂອງການສຶກສາໃນລະບົບໂຮງຮຽນທົ່ວປະເທດ.

## ຈຸດປະສົງ 2:
## ເພື່ອກຳນົດບັນດາຂະແໜງການ, ທີມງານ ແລະ ແບ່ງຄວາມຮັບຜິດຊອບໃນການສຶກສາກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດຈາກການນຳໃຊ້ຊັບພະຍາກອນພັນທຸກຳ ໃນທຸກລະດັບຂອງການສຶກສາໃນລະບົບໂຮງຮຽນທົ່ວປະເທດ

**ກິດຈະກຳ:**

1. ດຳເນີນກອງປະຊຸມປຶກສາຫາລືລະດັບຜູ້ຕັດສິນ (ວິຊາການຫຼັກແຫຼ່ງ) ລະຫວ່າງ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ແລະ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ບັນດາຂະແໜງການທີ່ກ່ຽວຂ້ອງເປັນຕົ້ນ ກົມສາມັນສຶກສາ, ກະຊວງສຶກສາ, ລະດັບຜູ້ບໍລິຫານໂຮງຮຽນ ໃນທຸກລະດັບທີ່ກ່ຽວຂ້ອງກັບວຽກງານການພັດທະນາການສຶກສາທາງດ້ານການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ເຂົ້າໃນຫຼັກສູດການສຶກສາໃນລະບົບໂຮງຮຽນ;
2. ກຳນົດຂະແໜງການ, ບັນດາຄະນະຮັບຜິດຊອບ ແລະ ວິຊາການ ແລະ ກຳນົດພາລະບົດບາດ ລະຫວ່າງຂະແໜງການທີ່ຮັບຜິດຊອບ ແລະ ວິຊາການດັ່ງກ່າວທີ່ກ່ຽວຂ້ອງກັບການເຂົ້າເຖິງ ແລະ ການ

ແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ພາຍໃນຫຼັກສູດການສຶກສາໃນລະບົບໂຮງຮຽນ;

3. ດຳເນີນກອງປະຊຸມສຳມະນາ, ຈັດຝຶກອົບຮົມ ສຳລັບການສຶກສາໃນລະບົບໂຮງຮຽນໃຫ້ແກ່ຜູ້ບໍລິຫານໂຮງຮຽນ, ຜູ້ດຳເນີນການສິດສອນ, ເພື່ອຍົກລະດັບຄວາມເຂົ້າໃຈກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ແລະ ສົ່ງເສີມ ໃຫ້ເຂົາເຈົ້າເຫຼົ່ານີ້ມີພັນທະໃນການປະກອບສ່ວນໃນການອະນຸລັກ ແລະ ພັດທະນາແບບຍືນຍົງຂອງຊັບພະຍາກອນພັນທຸກຳ ແລະ ເຮັດໃຫ້ມີຄວາມປອດໄພປາສະຈາກຜົນກະທົບຕໍ່ສຸຂະພາບຂອງຄົນ.

**ຈຸດປະສົງ 3:**

**ເພື່ອພັດທະນາຫຼັກສູດ ການສຶກສາກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ໃນທຸກລະດັບຂອງການສຶກສາໃນລະບົບໂຮງຮຽນທົ່ວປະເທດ**

**ກິດຈະກຳ:**

1. ດຳເນີນກອງປະຊຸມ ປຶກສາຫາລື ກັບບັນດາຂະແໜງການທີ່ກ່ຽວຂ້ອງເພື່ອການວາງແຜນ, ການອອກແບບ ແລະ ການກຳນົດຫົວຂໍ້ຫຼັກສູດທີ່ເປັນແຜນດຳເນີນງານການສຶກສາ ໃນການເຊື່ອມໂຍງບັນດາຫົວເລື່ອງທີ່ກ່ຽວຂ້ອງກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ໃນຫຼັກສູດທຸກລະດັບຂອງການສຶກສາໃນລະບົບໂຮງຮຽນ, ລະຫວ່າງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ຂະແໜງການທີ່ກ່ຽວຂ້ອງອື່ນໆ

ເຊັ່ນ: ກົມສາມັນສຶກສາ, ກະຊວງສຶກສາ, ຜູ້ບໍລິຫານໂຮງຮຽນໃນທຸກລະດັບ ແລະ ຄະນະວິຊາການຕ່າງໆທີ່ກ່ຽວຂ້ອງ;

2. ສາທິດທົດສອບຫຼັກສູດການສຶກສາກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ, ໂດຍສະເພາະການຕີລາຄາດ້ານຈຸດປະສົງ, ເນື້ອໃນບົດສອນ, ຂະບວນການຮຽນການສອນ ແລະ ວິທີການ;
3. ດຳເນີນການທົບທວນຫຼັກສູດການສິດສອນ ສຳລັບການຝຶກອົບຮົມໃຫ້ແກ່ຄູສອນໃນວິທະຍາໄລຕ່າງໆ ເພື່ອຮັບປະກັນການສິດສອນທີ່ກ່ຽວຂ້ອງກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ.

## ຈຸດປະສົງ 4:
## ເພື່ອພັດທະນາ ແລະ ຜະລິດບັນດາອຸປະກອນທີ່ສະໜັບສະໜູນການສຶກສາກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ໃນທຸກລະດັບຂອງການສຶກສາໃນລະບົບໂຮງຮຽນທົ່ວປະເທດ

**ກິດຈະກຳ:**

1. ສ້າງບັນດາຄູ່ມືແນະນຳເພື່ອການພັດທະນາ ແລະ ຜະລິດບັນດາອຸປະກອນທີ່ສະໜັບສະໜູນການສຶກສາກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳໃນຫຼາຍຮູບຫຼາຍແບບທີ່ແຕກຕ່າງກັນ (ແຜ່ນພັບ, ໂປສະເຕີ້, ຮູບພາບປະກອບ ແລະ ອື່ນໆ) ຂອງການສຶກສາໃນລະບົບໂຮງຮຽນ;
2. ຈັດກອງປະຊຸມປຶກສາຫາລືກ່ຽວກັບການພັດທະນາ ບັນດາອຸປະກອນທີ່ສະໜັບສະໜູນການສຶກສາກ່ຽວກັບການເຂົ້າເຖິງ ແລະ ການ

ແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ, ໂດຍການເຂົ້າຮ່ວມຂອງບັນດາຊ່ຽວຊານກ່ຽວຂ້ອງ, ນັກວິທະຍາສາດ ແລະ ນັກເຕັກນິກດ້ານຄອມພິວເຕີ້ພາຍຂອງການສຶກສາໃນລະບົບໂຮງຮຽນ;

3. ດຳເນີນການຜະລິດບັນດາອຸປະກອນທີ່ສະໜັບສະໜູນການສຶກສາກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ສຳລັບລະດັບຂັ້ນອະນຸບານ, ປະຖົມສຶກສາ, ມັດທະຍົມສຶກສາຕອນຕົ້ນ ແລະ ຕອນປາຍ, ໂດຍການເຂົ້າຮ່ວມຂອງບັນດາຄູສອນແຕ່ລະຊັ້ນ, ຊ່ຽວຊານທີ່ກ່ຽວຂ້ອງ ແລະ ນັກເຕັກນິກດ້ານຄອມພິວເຕີ້ພາຍຂອງການສຶກສາໃນລະບົບໂຮງຮຽນ;
4. ລວບລວມເອົາທັງໝົດ ທີ່ກ່ຽວຂ້ອງກັບບັນຫາການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ, ປະສົບການ ແລະ ພາກປະຕິບັດຕົວຈິງ (ເຊັ່ນຄວາມສຳນານງານທາງດ້ານການປະມົງ ແລະ ການປູກຝັງແບບພື້ນບ້ານຂອງຊຸມຊົນ) ໃນການສ້າງບັນດາອຸປະກອນທີ່ສະໜັບສະໜູນການສຶກສາກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ຂອງການສຶກສາໃນລະບົບໂຮງຮຽນ.

## (ຂ) ການສຶກສານອກລະບົບໂຮງຮຽນ

### ຈຸດປະສົງ 5:

### ເພື່ອຕີລາຄາລະດັບ ແລະ ສະພາບການສຶກສາກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ຂອງການສຶກສານອກລະບົບໂຮງຮຽນທົ່ວປະເທດ

**ກິດຈະກຳ:**

1. ດ◌ຳເນີນການສຳຫຼວດຂໍ້ມູນຂ່າວສານການສຶກສາ ກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ຂອງການສຶກສານອກລະບົບໂຮງຮຽນທົ່ວປະເທດ;
2. ດຳເນີນການວິເຄາະ ແລະ ຕີລາຄາບັນດາຂໍ້ມູນຂ່າວສານການສຶກສາກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ທີ່ເກັບມາໄດ້ຈາກການສຶກສານອກລະບົບໂຮງຮຽນທົ່ວປະເທດ;
3. ສັງລວມເປັນບົດລາຍງານສະພາບການສຶກສາກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ຂອງການສຶກສານອກລະບົບໂຮງຮຽນທົ່ວປະເທດ.

**ຈຸດປະສົງ 6:**

**ເພື່ອກຳນົດບັນດາຂະແໜງການ, ທີມງານ ແລະ ແບ່ງຄວາມຮັບຜິດຊອບໃນການສຶກສາກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ໃນທຸກລະດັບຂອງການສຶກສານອກລະບົບໂຮງຮຽນທົ່ວປະເທດ**

**ກິດຈະກຳ:**

1. ດຳເນີນກອງປະຊຸມປຶກສາຫາລື ລະດັບຜູ້ຕັດສິນ (ວິຊາການຫຼັກແຫຼ່ງ) ລະຫວ່າງ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ແລະ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ບັນດາຂະແໜງການທີ່ກ່ຽວຂ້ອງເປັນຕົ້ນ ກົມສາມັນສຶກສາ, ກະຊວງສຶກສາ, ລະດັບຜູ້ບໍລິຫານໂຮງຮຽນ ໃນທຸກລະດັບທີ່ກ່ຽວຂ້ອງ ກັບວຽກງານການພັດທະນາການສຶກສາທາງດ້ານການເຂົ້າເຖິງ ແລະ

ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ເຂົ້າໃນຫຼັກສູດການສຶກສານອກລະບົບໂຮງຮຽນ;

2. ກຳນົດຂະແໜງການ, ບັນດາຄະນະຮັບຜິດຊອບ ແລະ ວິຊາການ ແລະ ກຳນົດພາລະບົດບາດ ລະຫວ່າງ ຂະແໜງການທີ່ຮັບຜິດຊອບ ແລະ ວິຊາການດັ່ງກ່າວທີ່ກ່ຽວຂ້ອງກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ພາຍໃນຫຼັກສູດການສຶກສານອກລະບົບໂຮງຮຽນ;
3. ດຳເນີນກອງປະຊຸມສຳມະນາ, ຈັດຝຶກອົບຮົມສຳລັບການສຶກສານອກລະບົບໂຮງຮຽນໃຫ້ແກ່ຜູ້ບໍລິຫານໂຮງຮຽນ ແລະ ຜູ້ດຳເນີນການສິດສອນ ເພື່ອຍົກລະດັບຄວາມເຂົ້າໃຈກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ແລະ ສົ່ງເສີມໃຫ້ເຂົາເຈົ້າເຫຼົ່ານີ້ມີພັນທະໃນການປະກອບສ່ວນໃນການອະນຸລັກ ແລະ ພັດທະນາແບບຍືນຍົງຂອງຊັບພະຍາກອນພັນທຸກຳ ແລະ ເຮັດໃຫ້ມີຄວາມປອດໄພປາສະຈາກຜົນກະທົບຕໍ່ສຸຂະພາບຂອງຄົນ.

## ຈຸດປະສົງ 7:

## ເພື່ອພັດທະນາຫຼັກສູດ ການສຶກສາກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ໃນທຸກລະດັບຂອງການສຶກສານອກລະບົບໂຮງຮຽນທົ່ວປະເທດ

**ກິດຈະກຳ:**

1. ດຳເນີນກອງປະຊຸມ ປຶກສາຫາລື ກັບບັນດາຂະແໜງການທີ່ກ່ຽວຂ້ອງ ເພື່ອການວາງແຜນ, ການອອກແບບ ແລະ ການກຳນົດຫົວຂໍ້ຫຼັກສູດທີ່ເປັນແຜນດຳເນີນງານການສຶກສາ ໃນການເຊື່ອມໂຍງບັນດາຫົວເລື່ອງທີ່ກ່ຽວຂ້ອງກັບການເຂົ້າເຖິງ ແລະ ການແບ່ງ

ປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸກໍາ ໃນຫຼັກສູດທຸກລະດັບຂອງການສຶກສານອກລະບົບໂຮງຮຽນ, ລະຫວ່າງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ, ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ແລະ ຂະແໜງການທີ່ກ່ຽວຂ້ອງອື່ນໆເຊັ່ນ: ກົມສາມັນສຶກສາ, ກະຊວງສຶກສາ, ຜູ້ບໍລິຫານໂຮງຮຽນໃນທຸກລະດັບ ແລະ ຄະນະວິຊາການຕ່າງໆທີ່ກ່ຽວຂ້ອງ;

2. ສາທິດທົດສອບຫຼັກສູດການສຶກສາກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸກໍາ, ໂດຍສະເພາະການຕີລາຄາດ້ານຈຸດປະສົງ, ເນື້ອໃນບົດສອນ, ຂະບວນການຮຽນການສອນ ແລະ ວິທີການ;
3. ດໍາເນີນການທົບທວນຫຼັກສູດການສິດສອນ ສໍາລັບການຝຶກອົບຮົມໃຫ້ແກ່ຄູສອນໃນວິທະຍາໄລຕ່າງໆ ເພື່ອຮັບປະກັນການສິດສອນທີ່ກ່ຽວຂ້ອງກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດຈາກການນໍາໃຊ້ຊັບພະຍາກອນພັນທຸກໍາ ຂອງການສຶກສາເພື່ອການພັດທະນາແບບຍືນຍົງຂອງຊັບພະຍາກອນພັນທຸກໍາ.

## ຈຸດປະສົງ 8:

## ເພື່ອພັດທະນາ ແລະ ຜະລິດບັນດາອຸປະກອນທີ່ສະໜັບສະໜູນການສຶກສາກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸກໍາ ໃນທຸກລະດັບຂອງການສຶກສານອກລະບົບໂຮງຮຽນທົ່ວປະເທດ

**ກິດຈະກໍາ:**

1. ສ້າງບັນດາຄູ່ມືແນະນໍາ ເພື່ອການພັດທະນາ ແລະ ຜະລິດບັນດາອຸປະກອນທີ່ສະໜັບສະໜູນການສຶກສາກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸ

ກຳ ໃນຫຼາຍຮູບ ຫຼາຍແບບທີ່ແຕກຕ່າງກັນ (ແຜ່ນພັບ, ໂປສະເຕີ້, ຮູບພາບປະກອບ ແລະ ອື່ນໆ) ຂອງການສຶກສານອກລະບົບໂຮງຮຽນ;

2. ຈັດກອງປະຊຸມປຶກສາຫາລືກ່ຽວກັບການພັດທະນາ ບັນດາອຸປະກອນທີ່ສະໜັບສະໜູນການສຶກສາກ່ຽວກັບ ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ, ໂດຍການເຂົ້າຮ່ວມຂອງບັນດາຊ່ຽວຊານກ່ຽວຂ້ອງ, ນັກວິທະຍາສາດ ແລະ ນັກເຕັກນິກດ້ານຄອມພິວເຕີ້ພາຍຂອງການສຶກສານອກລະບົບໂຮງຮຽນ;
3. ດຳເນີນການຜະລິດບັນດາອຸປະກອນທີ່ສະໜັບສະໜູນການສຶກສາກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດຈາກການນຳໃຊ້ຊັບພະຍາກອນພັນທຸກຳ ສຳລັບລະດັບຂັ້ນອະນຸບານ, ປະຖົມສຶກສາ, ມັດທະຍົມສຶກສາຕອນຕົ້ນ ແລະ ຕອນປາຍ, ໂດຍການເຂົ້າຮ່ວມຂອງບັນດາຄູສອນແຕ່ລະຊັ້ນ, ຊ່ຽວຊານ ທີ່ກ່ຽວຂ້ອງ ແລະ ນັກເຕັກນິກດ້ານຄອມພິວເຕີ້ພາຍຂອງການສຶກສານອກລະບົບໂຮງຮຽນ;
4. ລວບລວມເອົາທັງໝົດ ທີ່ກ່ຽວຂ້ອງກັບບັນຫາການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ, ປະສົບການ ແລະ ພາກປະຕິບັດຕົວຈິງ (ເຊັ່ນຄວາມສຳນານງານທາງດ້ານການປະມົງ ແລະ ການປູກຝັງແບບພື້ນບ້ານຂອງຊຸມຊົນ) ໃນການສ້າງບັນດາອຸປະກອນທີ່ສະໜັບສະໜູນການສຶກສາກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ຂອງການສຶກສານອກລະບົບໂຮງຮຽນ.

4.3.2 ແຜນງານທີ 2: ພັດທະນາກິດຈະກຳການສ້າງຈິດສຳນຶກກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳເປັນພາກສ່ວນໜຶ່ງເຂົ້າໃນລະບົບການສ້າງຈິດສຳນຶກດ້ານສິ່ງແວດລ້ອມ:

**ຈຸດປະສົງ 9:**

**ເພື່ອຕີລາຄາລະດັບ ແລະ ສະພາບການສ້າງຈິດສຳນຶກກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳໃນທົ່ວປະເທດ**

**ກິດຈະກຳ:**

1. ດຳເນີນການສຳຫຼວດຂໍ້ມູນຂ່າວສານການສ້າງຈິດສຳນຶກ ກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ຂອງການສຶກສາໃນລະບົບໂຮງຮຽນທົ່ວປະເທດ;
2. ດຳເນີນການວິເຄາະ ແລະ ຕີລາຄາບັນດາຂໍ້ມູນຂ່າວສານການສ້າງຈິດສຳນຶກກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດຈາກການນຳໃຊ້ຊັບພະຍາກອນພັນທຸກຳ ທີ່ເກັບມາໄດ້ຈາກທົ່ວປະເທດ;
3. ສັງລວມເປັນບົດລາຍງານສະພາບການສ້າງຈິດສຳນຶກ ກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳໃນທົ່ວປະເທດ.

**ຈຸດປະສົງ 10:**

**ເພື່ອກຳນົດບັນດາຂະແໜງການ, ທີມງານ ແລະ ແບ່ງຄວາມຮັບຜິດຊອບໃນການສ້າງຈິດສຳນຶກກ່ຽວກັບການເຂົ້າເຖິງ ແລະ**

## ການແບ່ງປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸກໍາ ໃນທຸກລະດັບສື່ ໃນທົ່ວປະເທດ

**ກິດຈະກໍາ:**

1. ດໍາເນີນກອງປະຊຸມປຶກສາຫາລື ລະດັບຜູ້ຕັດສິນ (ວິຊາການຫຼັກແຫຼ່ງ) ລະຫວ່າງ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ແລະ ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ແລະ ບັນດາຂະແໜງການ ທີ່ກ່ຽວຂ້ອງເປັນຕົ້ນແມ່ນກົມສື່ສານມວນຊົນ, ກະຊວງຖະແຫຼງຂ່າວ ວັດທະນະທໍາ ແລະ ທ່ອງທ່ຽວ, ລະດັບຜູ້ບໍລິຫານບັນດາຊື່ມວນຊົນ, ບັນນາທິການໃນວຽກງານທີ່ກ່ຽວຂ້ອງກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸກໍາ ເຂົ້າໃນລາຍການຂອງບັນດາສື່ມວນຊົນ;
2. ກໍານົດຂະແໜງການ, ບັນດາຄະນະຮັບຜິດຊອບ ແລະ ວິຊາການ ແລະ ກໍານົດພາລະບົດບາດ ລະຫວ່າງຂະແໜງການທີ່ຮັບຜິດຊອບ ແລະ ວິຊາການດັ່ງກ່າວໃນການສ້າງຈິດສໍານຶກທີ່ກ່ຽວຂ້ອງກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸກໍາໃນທົ່ວປະເທດ;
3. ດໍາເນີນກອງປະຊຸມສໍາມະນາຝຶກອົບຮົມສໍາລັບຜູ້ບໍລິຫານ, ບັນດາສື່ສານມວນຊົນ, ບັນນາທິການ, ຜູ້ດໍາເນີນລາຍການ ເພື່ອຍົກລະດັບຄວາມເຂົ້າໃຈກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸກໍາ.

## ຈຸດປະສົງ 11:

## ເພື່ອພັດທະນາກົນໄກການສ້າງຈິດສໍານຶກກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸກໍາ ເຂົ້າໃນທຸກລະດັບສື່ມວນຊົນໃນທົ່ວປະເທດ

**ກິດຈະກຳ:**

1. ດຳເນີນກອງປະຊຸມການປຶກສາຫາລື ເພື່ອການວາງແຜນ, ການອອກແບບ ແລະ ການກຳນົດກົນໄກການສ້າງຈິດສຳນຶກ ກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນ ພັນທຸກຳ, ລະຫວ່າງ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ຂະແໜງການທີ່ກ່ຽວຂ້ອງເປັນຕົ້ນແມ່ນກົມສື່ສານມວນຊົນ, ກະຊວງຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ, ລະດັບຜູ້ບໍລິຫານບັນດາຊື່ມວນຊົນ ແລະ ບັນນາທິການ;
2. ສາທິດທົດລອງລາຍການ ການສ້າງຈິດສຳນຶກໃນສື່ສານມວນຊົນກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ແລະ ຕີລາຄາຜົນ, ເນື້ອໃນ ແລະ ວິທີການຂອງຂະບວນການສ້າງຈິດສຳນຶກ;
3. ດຳເນີນການທົບທວນຕີລາຄາລາຍການສ້າງຈິດສຳນຶກໃນວຽກງານທີ່ກ່ຽວຂ້ອງກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດຈາກການນຳໃຊ້ຊັບພະຍາກອນພັນທຸກຳ ທີ່ມີຢູ່ໃນບັນດາສື່ມວນຊົນໃນທົ່ວປະເທດປັບປຸງຄືນ.

## ຈຸດປະສົງ 12:
## ເພື່ອພັດທະນາ ແລະ ຜະລິດບັນດາອຸປະກອນທີ່ສະໜັບສະໜູນການສ້າງຈິດສຳນຶກກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດຈາກການນຳໃຊ້ຊັບພະຍາກອນພັນທຸກຳ ໃນທຸກລະດັບສື່ສານມວນຊົນໃນທົ່ວປະເທດ

**ກິດຈະກຳ:**

1. ສ້າງບັນດາຄູ່ມືແນະນຳ ເພື່ອການພັດທະນາ ແລະ ຜະລິດບັນດາອຸປະກອນທີ່ສະໜັບສະໜູນການສ້າງຈິດສຳນຶກກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ໃນຫຼາຍຮູບຫຼາຍແບບທີ່ແຕກຕ່າງກັນ (ແຜ່ນພັບ, ໂປດສະເຕີ້, ຮູບພາບປະກອບ ແລະ ອື່ນໆ);
2. ຈັດກອງປະຊຸມປຶກສາຫາລືກ່ຽວກັບການພັດທະນາ ແລະ ຜະລິດບັນດາອຸປະກອນທີ່ສະໜັບສະໜູນການສ້າງຈິດສຳນຶກກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ, ໂດຍການເຂົ້າຮ່ວມຂອງບັນດາຊ່ຽວຊານກ່ຽວຂ້ອງ, ນັກວິທະຍາສາດ ແລະ ເຕັກນິກດ້ານຄອມພີວເຕີ້;
3. ດຳເນີນການຜະລິດບັນດາອຸປະກອນ ທີ່ສະໜັບສະໜູນການສ້າງຈິດສຳນຶກກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດຈາກການນຳໃຊ້ຊັບພະຍາກອນພັນທຸກຳ;
4. ລວບລວມເອົາທັງໝົດທີ່ກ່ຽວຂ້ອງກັບບັນຫາການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ, ປະສົບການ ແລະ ພາກປະຕິບັດຕົວຈິງ (ເຊັ່ນຄວາມສຳນານງານທາງດ້ານການປະມົງ ແລະ ການປູກຝັງແບບພື້ນບ້ານຂອງຊຸມຊົນ) ໃນການສ້າງບັນດາອຸປະກອນທີ່ສະໜັບສະໜູນ ການສ້າງຈິດສຳນຶກກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດຈາກການນຳໃຊ້ຊັບພະຍາກອນພັນທຸກຳ.

**4.3.3 ແຜນງານທີ 3: ພັດທະນາກົນໄກການຝຶກອົບຮົມກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ:**

## ຈຸດປະສົງ 13:

**ເພື່ອຕີລາຄາລະດັບ ແລະ ສະພາບການເສີມສ້າງຄວາມອາດສາມາດທາງດ້ານຊັບພະຍາກອນມະນຸດກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸກໍາໃນທົ່ວປະເທດ**

**ກິດຈະກໍາ:**

1. ດໍາເນີນການສໍາຫຼວດຂໍ້ມູນຂ່າວສານກ່ຽວກັບການເສີມສ້າງຄວາມອາດສາມາດທາງດ້ານຊັບພະຍາກອນມະນຸດ ທີ່ກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸກໍາຂອງການສຶກສາໃນທົ່ວປະເທດ;
2. ດໍາເນີນການວິເຄາະ ແລະ ຕີລາຄາບັນດາຂໍ້ມູນຂ່າວສານການກ່ຽວກັບເສີມສ້າງຄວາມອາດສາມາດທາງດ້ານຊັບພະຍາກອນມະນຸດ ທີ່ກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸກໍາທີ່ເກັບໄດ້ມາຈາກທົ່ວປະເທດ;
3. ສັງລວມເປັນບົດລາຍງານສະພາບການເສີມສ້າງຄວາມອາດສາມາດທາງດ້ານຊັບພະຍາກອນມະນຸດ ທີ່ກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸກໍາໃນທົ່ວປະເທດ.

## ຈຸດປະສົງ 14:

**ເພື່ອປຶກສາຫາລື ແລະ ແບ່ງຄວາມຮັບຜິດຊອບໃນການເສີມສ້າງຄວາມອາດສາມາດທາງດ້ານຊັບພະຍາກອນມະນຸດກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸກໍາໃນທົ່ວປະເທດ**

**ກິດຈະກຳ:**

1. ດຳເນີນກອງປະຊຸມປຶກສາຫາລືກ່ຽວກັບການເສີມສ້າງຄວາມອາດສາມາດທາງດ້ານຊັບພະຍາກອນມະນຸດ ທີ່ກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດຈາກການນຳໃຊ້ຊັບພະຍາກອນພັນທຸກຳລະດັບຜູ້ຕັດສິນ (ວິຊາການຫຼັກແຫຼ່ງ) ລະຫວ່າງ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ບັນດາຂະແໜງການທີ່ກ່ຽວຂ້ອງ;
2. ກຳນົດພາລະບົດບາດ ແລະ ການແບ່ງຄວາມຮັບຜິດຊອບຂອງບັນດາຂະແໜງການທີ່ກ່ຽວຂ້ອງໃນການເສີມສ້າງຄວາມອາດສາມາດທາງດ້ານຊັບພະຍາກອນມະນຸດໃນທຸກລະດັບ ທີ່ກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳໃນທົ່ວປະເທດ;
3. ດຳເນີນການຝຶກອົບຮົມເພື່ອການເສີມສ້າງຄວາມອາດສາມາດທາງດ້ານຊັບພະຍາກອນມະນຸດໃນລະດັບຜູ້ບໍລິຫານ ແລະ ວິຊາການທີ່ກ່ຽວຂ້ອງກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ແລະ ເສີມສ້າງຄວາມເຂົ້າໃຈໃນວຽກດັ່ງກ່າວໃນທົ່ວປະເທດ.

## ຈຸດປະສົງ 15:

## ເພື່ອເສີມສ້າງຄວາມອາດສາມາດໃຫ້ແກ່ບັນດາຄູສອນ, ຄູຝຶກ, ຜູ້ພັດທະນາຫຼັກສູດ ແລະ ຄູ່ມືການຝຶກກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ໃນທົ່ວປະເທດໃນທົ່ວປະເທດ

**ກິດຈະກຳ:**

1. ດຳເນີນກອງປະຊຸມປຶກສາຫາລືກ່ຽວກັບການເສີມສ້າງຄວາມອາດສາມາດທາງດ້ານຊັບພະຍາກອນມະນຸດ ທີ່ກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳໃນທົ່ວປະເທດບັນດາຂະແໜງການທີ່ກ່ຽວຂ້ອງ ເພື່ອການສ້າງຫຼັກສູດ ແລະ ຄູ່ມືການຝຶກຄູສອນ ລະຫວ່າງ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ແລະ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ບັນດາຂະແໜງການທີ່ກ່ຽວຂ້ອງ, ຜູ້ພັດທະນາຫຼັກສູດ-ປຶ້ມ, ຄູສອນ, ຄູຝຶກ ແລະ ອື່ນໆໃນທົ່ວປະເທດ;
2. ກຳນົດ ແລະ ຈັດວາງບຸລິມະສິດບັນດາຫົວຂໍ້ການຝຶກອົບຮົມໃນໄລຍະສັ້ນ ແລະ ຍາວ;
3. ສ້າງສູນຝຶກອົບຮົມທີ່ກ່ຽວຂ້ອງກັບການເສີມສ້າງຄວາມອາດສາມາດທາງດ້ານຊັບພະຍາກອນມະນຸດ ໃນການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ຕາມຄວາມເໝາະສົມ;
4. ດຳເນີນການທົດສອບ ແລະ ທົບທວນບັນດາຫົວຂໍ້, ເນື້ອໃນ ແລະ ວິທີການເສີມສ້າງຄວາມອາດສາມາດທາງດ້ານຊັບພະຍາກອນມະນຸດທີ່ກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດຈາກການນຳໃຊ້ຊັບພະຍາກອນພັນທຸກຳ ເພື່ອປັບປຸງຄືນຕາມຄວາມເໝາະສົມ.

## ຈຸດປະສົງ16:
## ເພື່ອພັດທະນາ ແລະ ຜະລິດບັນດາອຸປະກອນທີ່ສະໜັບສະໜູນການເສີມສ້າງຄວາມອາດສາມາດທາງດ້ານຊັບພະຍາກອນມະນຸດກ່ຽວກັບ

**ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳໃນທົ່ວປະເທດ**

**ກິດຈະກຳ:**

1. ຈັດກອງປະຊຸມປຶກສາຫາລືກ່ຽວກັບການພັດທະນາ ແລະ ຜະລິດບັນດາບັນດາອຸປະກອນທີ່ສະໜັບສະໜູນ ການສ້າງຄວາມອາດສາມາດທາງດ້ານຊັບພະຍາກອນມະນຸດກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ໃນຫຼາຍແບບຮູບການ ແລະ ວິທີການທີ່ແຕກຕ່າງກັນ;
2. ດຳເນີນການຜະລິດບັນດາອຸປະກອນທີ່ອຳນວຍຄວາມສະດວກໃນການສ້າງຄວາມອາດສາມາດ ທາງດ້ານຊັບພະຍາກອນມະນຸດກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ແລະ ສະໜັບສະໜູນສຳລັບການສ້າງຄວາມອາດສາມາດໃນຂົງເຂດດັ່ງກ່າວໃຫ້ແກ່ພະນັກງານວິຊາການທີ່ກ່ຽວຂ້ອງ.

### 4.4.4 ແຜນງານທີ 4: ພັດທະນາກົນໄກການມີສ່ວນຮ່ວມຂອງມວນຊົນໃນຂະບວນການຕັດສິນໃນວຽກງານການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ

**ຈຸດປະສົງ 17:**

**ເພື່ອຕີລາຄາລະດັບ ແລະ ສະພາບການມີສ່ວນຮ່ວມຂອງມວນຊົນກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳໃນທົ່ວປະເທດ**

**ກິດຈະກຳ:**

1. ດຳເນີນການສຳຫຼວດຂໍ້ມູນຂ່າວສານໃນການມີສ່ວນຮ່ວມຂອງມວນຊົນກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ໃນທົ່ວປະເທດ;
2. ດຳເນີນການວິເຄາະ ແລະ ຕີລາຄາບັນດາຂໍ້ມູນຂ່າວສານໃນການມີສ່ວນຮ່ວມຂອງມວນຊົນ ກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ທີ່ເກັບມາໄດ້ໃນທົ່ວປະເທດ;
3. ສັງລວມເປັນບົດລາຍງານສະພາບການມີສ່ວນຮ່ວມຂອງມວນຊົນກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ໃນທົ່ວປະເທດ.

## ຈຸດປະສົງ18:

## ເພື່ອພັດທະນາກົນໄກການສະໜັບສະໜູນ ໃນການມີສ່ວນຮ່ວມຂອງມວນຊົນກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ໃນທົ່ວປະເທດ

**ກິດຈະກຳ**:

1. ດຳເນີນກອງປະຊຸມປຶກສາຫາລືໃນການພັດທະນາກົນໄກການສະໜັບສະໜູນໃນການມີສ່ວນຮ່ວມຂອງມວນຊົນກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ລະຫວ່າງ ລະດັບຜູ້ຕັດສິນ (ວິຊາການຫຼັກແຫຼ່ງ) ຈາກກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ແລະ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ບັນດາຂະແໜງການທີ່ກ່ຽວຂ້ອງ;

2. ດໍາເນີນການການພັດທະນາກົນໄກການສະໜັບສະໜູນ ໃນການມີສ່ວນຮ່ວມຂອງມວນຊົນກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸກໍາ ໃນທົ່ວປະເທດ.

**ຈຸດປະສົງ 19:**

**ເພື່ອພັດທະນານະໂຍບາຍ ແລະລະບຽບການກ່ຽວກັບການມີສ່ວນຮ່ວມຂອງມວນຊົນກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດຈາກການນໍາໃຊ້ຊັບພະຍາກອນພັນທຸກໍາ ໃນທົ່ວປະເທດ**

**ກິດຈະກໍາ:**

1. ດໍາເນີນກອງປະຊຸມການປຶກສາຫາລືໃນການພັດທະນາທາງດ້ານນະໂຍບາຍ ແລະ ລະບຽບການມີສ່ວນຮ່ວມ ຂອງມວນຊົນໃນການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸກໍາ ໃນທົ່ວປະເທດລະຫວ່າງ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ, ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ແລະ ບັນດາຂະແໜງການທີ່ກ່ຽວຂ້ອງ;
2. ດໍາເນີນການພັດທະນາບັນດານະໂຍບາຍ ແລະ ລະບຽບການດ້ານກົດໝາຍກ່ຽວກັບການມີສ່ວນຮ່ວມຂອງມວນຊົນ ໃນການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸກໍາ.

**4.4.5 ແຜນງານທີ 5: ການສ້າງຕັ້ງເຄືອຂ່າຍກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນໍາໃຊ້ຊັບພະຍາກອນພັນທຸກໍາ ແລະ ພັດທະນາລະບົບການສະໜອງຂໍ້ມູນຂ່າວສານທີ່ກ່ຽວຂ້ອງ:**

**ຈຸດປະສົງ 20:**

**ເພື່ອຕີລາຄາລະດັບ ແລະ ສະພາບຂອງລະບົບເຄືອຂ່າຍ ແລະ ກົນໄກການສະໜອງຂໍ້ມູນຂ່າວສານກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ໃນທົ່ວປະເທດ**

**ກິດຈະກຳ:**

1. ດຳເນີນການສຳຫຼວດຂໍ້ມູນຂ່າວສານກ່ຽວກັບການສ້າງຕັ້ງເຄືອຂ່າຍ ແລະ ກົນໄກການສະໜອງຂໍ້ມູນຂ່າວສານ ກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ໃນທົ່ວປະເທດ;
2. ດຳເນີນການວິເຄາະ ແລະ ຕີລາຄາບັນດາຂໍ້ມູນຂ່າວສານກ່ຽວກັບການສ້າງຕັ້ງເຄືອຂ່າຍ ແລະ ກົນໄກການສະໜອງຂໍ້ມູນຂ່າວສານກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ໃນທົ່ວປະເທດ;
3. ສັງລວມເປັນບົດລາຍງານສະພາບການສ້າງຕັ້ງເຄືອຂ່າຍ ແລະ ກົນໄກການສະໜອງຂໍ້ມູນຂ່າວສານ ກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ໃນທົ່ວປະເທດ.

**ຈຸດປະສົງ 21:**

**ເພື່ອປຶກສາຫາລືກ່ຽວກັບການສ້າງຕັ້ງລະບົບເຄືອຂ່າຍ ແລະ ກົນໄກການສະໜອງຂໍ້ມູນຂ່າວສານກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ໃນທົ່ວປະເທດ**

**ກິດຈະກຳ:**

1. ດຳເນີນກອງປະຊຸມການປຶກສາຫາລືກ່ຽວກັບການສ້າງຕັ້ງລະບົບເຄືອຂ່າຍ ແລະ ກົນໄກການສະໜອງຂໍ້ມູນຂ່າວສານກ່ຽວກັບການ

ເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັພະຍາກອນພັນທຸກຳ ລະຫວ່າງລະດັບຜູ້ຕັດສິນ (ວິຊາການຫຼັກແຫຼ່ງ) ຈາກກະຊວງວິທະຍາສາດ ແລະ ເຕັກໂນໂລຊີ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ບັນດາຂະແໜງການທີ່ກ່ຽວຂ້ອງ;

2. ກຳນົດພາລະບົດບາດ ແລະ ການແບ່ງຄວາມຮັບຜິດຊອບໃນການສ້າງຕັ້ງລະບົບເຄືອຂ່າຍ ແລະ ກົນໄກການສະໜອງຂໍ້ມູນຂ່າວສານກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ລະຫວ່າງບັນດາຂະແໜງການທີ່ກ່ຽວຂ້ອງ;
3. ດຳເນີນການຝຶກອົບຮົມສຳລັບບັນດາຜູ້ບໍລິຫານ ແລະ ວິຊາການທີ່ກ່ຽວຂ້ອງ ເພື່ອເຮັດໃຫ້ລະບົບເຄືອຂ່າຍ ແລະ ກົນໄກການສະໜອງຂໍ້ມູນຂ່າວສານກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ ໃຫ້ສາມາດເຄື່ອນໄຫວໄດ້.

## ຈຸດປະສົງ 22:

## ເພື່ອພັດທະນາກົນໄກການສະໜອງຂໍ້ມູນຂ່າວສານກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ (ສູນປະສານງານຂໍ້ມູນຂ່າວສານກ່ຽວກັບ ABS) ໃນທົ່ວປະເທດ

**ກິດຈະກຳ:**

1. ດຳເນີນກອງປະຊຸມການປຶກສາຫາລືໃນການພັດທະນາກົນໄກຂອງສູນຂໍ້ມູນຂ່າວສານກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນທາງດ້ານພັນທຸກຳ ໃນທົ່ວປະເທດ;

2. ສົ່ງເສີມ ແລະ ສ້າງຕັ້ງສູນປະສານງານຂໍ້ມູນຂ່າວສານກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳຢ່າງເປັນທາງການ ເປັນພາກສ່ວນໜຶ່ງຂອງກົນໄກສູນປະສານງານຂໍ້ມູນຂ່າວສານທີ່ຖືກສ້າງຕັ້ງພາຍໃນສົນທິສັນຍາວ່າດ້ວຍຊີວະນາໆພັນ, ເພື່ອສະໜັບສະໜູນການແລກປ່ຽນຂໍ້ມູນຂ່າວສານ ແລະ ຕອບສະໜອງຂໍ້ມູນຂ່າວສານແກ່ມວນຊົນ.

## ຈຸດປະສົງ 23:
## ເພື່ອອຳນວຍຄວາມສະດວກໃນການແລກປ່ຽນຂໍ້ມູນຂ່າວສານທາງດ້ານວິທະຍາສາດ, ວິຊາການ, ສິ່ງແວດລ້ອມ ແລະ ນິຕິກຳ ແລະ ປະສົບປະການກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ

**ກິດຈະກຳ:**

1. ດຳເນີນການສັງລວມ ແລະ ບັນທຶກຂໍ້ມູນຂ່າວສານທີ່ຈະແລກປ່ຽນຢ່າງກວ້າງຂວາງທີ່ກວມເອົາທາງດ້ານວິທະຍາສາດ, ວິຊາການ, ສິ່ງແວດລ້ອມ, ນິຕິກຳ ແລະ ປະສົບປະການກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳ;
2. ສ້າງຕັ້ງເວບໄຊຂອງສູນປະສານງານຂໍ້ມູນຂ່າວສານກ່ຽວກັບການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດ ຈາກການນຳໃຊ້ຊັບພະຍາກອນພັນທຸກຳຢ່າງເປັນທາງການ ແລະ ລະບົບອື່ນໆໃນການແລກປ່ຽນຂໍ້ມູນຂ່າວສານທີ່ກ່ຽວຂ້ອງກັບອະນຸສັນຍາດັ່ງກ່າວນີ້;
3. ດຳເນີນການຮ່ວມມືກັບສູນປະສານງານຂໍ້ມູນຂ່າວສານຂອງສົນທິສັນຍາຊີວະນາໆພັນ ເພື່ອເປັນການປຶກສາຫາລືພາຍໃນເວບໄຊ: http://bch.biodiv.org/pilot/ ແລະ http://www.biodiv.org